| ໝວດວິຊາສະເພາະ | ສາຍຄູອະນຸບານລະບົບຕໍ່ເນື່ອງພັກແລ້ງ |
| --- | --- |

# ວິຊາ: ຫຼັກສູດ ແລະ ແຜນຈັດປະສົບການ ສໍາລັບເດັກກ່ອນໄວຮຽນ





ສົກປີ 2024

# ວິຊາ: ຫຼັກສູດ ແລະ ແຜນຈັດປະສົບການ
# ສໍາລັບເດັກກ່ອນໄວຮຽນ

| ໝວດວິຊາສະເພາະ | ສາຍຄູອະນຸບານ ລະບົບ ຕໍ່ເນື່ອງ ພັກແລ້ງ ປີ 1 |
|---|---|


**ຮຽບຮຽງໂດຍ:**

ນາງ ຄໍາບານ ພິມມະຈັກ

**ກວດແກ້ໂດຍ:**

ທ່ານ ປທ ນາງ ຫວານໃຈ ບົວກາສີ

ທ່ານ ຊອ ນາງ ຈັນສີມາຄັດທະວົງ

ທ່ານ ນາງ ຄໍາມະລີ ແສງໂສພາ



**ວິທະຍາໄລຄູສາລະວັນ**

**ສົກປີ 2024**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໍໍໍໍໍໍໍໍ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ ____21____ ສພ.ວສ

# ໃບຢັ້ງຢືນ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໄຈ

**ຫົວຂໍ້ວິໄຈ: ພັດທະນາຄວາມສາມາດໃນການນຳໃຊ້ກ້າມຊີ້ນໃຫຍ່ໂດຍນຳໃຊ້ຊຸດແບບຝຶກ ສຳລັບຊັ້ນອະນຸບານ 1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ**

| | |
|---|---|
| **ຜູ້ວິໄຈ** | **ກຳມະການ** |
| **ປທ ນາງ ລິດສະໄໝ ດວງມາລາ** | **ປອ ສຸພັນ ເທບພະວົງສາ** |
| **ທີ່ປຶກສາຂຽນບົດ** | **.............................. ( ປະທານ )** |
| **ປທ ນາງ ຫວານໃຈ ບົວກາສີ** | **ອຈ ປທ ແສນຮັກ ບຸນມີ** |
| **..............................................** | **.............................. ( ກຳມະການ )** ແສນຮັກ ບຸນມີ |
| **ຊອ ນາງ ຈັນສີມາ ຕັດທະວົງ** | **ອຈ ນາງ ລິດສະໄໝ ສິດທິຈັກ** |
| **..............................................** | **.............................. ( ກຳມະການ )** ລິດສະໄໝ ສິດທິຈັກ |

ວິທະຍາໄລຄູສາລະວັນ

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຄົ້ນຄວ້າວິໄຈຫົວຂໍ້: ພັດທະນາຄວາມສາມາດໃນການນຳໃຊ້ກ້າມຊີ້ນໃຫຍ່ໂດຍນຳໃຊ້ຊຸດແບບຝຶກ ສຳລັບຊັ້ນອະນຸບານ 1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ – ການສອນໃນວິທະຍາໄລຄູສາລະວັນ.

**ປະທານສະພາວິທະຍາສາດ**

ອຈ. ນ ລິມປອງ ແສນທະວິສຸກ

ສແກນດ້ວຍ CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໆໆໆໆໆ໐໐໐໐໐

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ພາກວິຊາສ້າງຄູສຶກສາເດັກກ່ອນໄວຮຽນ

# ໃບຮັບຮອງ

## ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ

## ວິຊາ: ຫຼັກສູດ ແລະ ແຜນຈັດປະສົບການສຳລັບເດັກກ່ອນໄວຮຽນ

**ພາກວິຊາ**: ສ້າງຄູສຶກສາເດັກກ່ອນໄວຮຽນ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ນາງ ຄຳບານ ພິມມະຈັກ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ປທ ນາງ ຫອມໃຈ ບົວການີ ..............................

ທ່ານ ຊອ ຈັນສີມາ ຄັດທະວົງ ..............................

ທ່ານ ນາງ ຄຳມະລີ ແສງໂສພາ ..............................

**ທີ່, ສາລະວັນ, ວັນທີ ..........................**

**ພາກວິຊາສ້າງຄູສຶກສາເດັກກ່ອນໄວຮຽນ**

CS ສแกนด้วย CamScanner

# ຄຳນຳ

ຫຼັກສູດ ແລະ ແຜນຈັດປະສົບການສຳລັບເດັກກ່ອນໄວຮຽນສະບັບນີ້ ໄດ້ຮຽບຮຽງຂຶ້ນ ເພື່ອໃຫ້ບັນດາຄູສອນ, ນັກສຶກສາຄູ ໄດ້ນຳໄປໃຊ້ໃນ ການຈັດກິດຈະກຳການຮຽນ-ການສອນ, ການວິເຄາະຫຼັກສູດຊັ້ນລ້ຽງເດັກ, ຊັ້ນອະນຸບານ, ແຜນຈັດປະສົບການ, ຄູ່ມືຄູສຳລັບເດັກກ່ອນໄວຮຽນໄດ້, ການນຳໃຊ້ແຜນຈັດປະສົບການຊັ້ນອະນຸບານສຶກສາເຂົ້າໃນການແຕ່ງບົດສອນສຳລັບເດັກກ່ອນໄວຮຽນໄດ້.

ເພື່ອເປັນການປັບປຸງຄຸນະພາບ ແລະ ປະສິດທິພາບຂອງການຮຽນ-ການສອນ, ໂດຍແນໃສ່ເພີ່ມສະມັດຕະພາບຂອງຄູ, ພັດທະນາວິຊາຊີບຄູໃຫ້ດີຂຶ້ນເທື່ອລະກ້າວ. ຂ້າພະເຈົ້າໄດ້ຮັບໂຮມເອກະສານເພື່ອຮຽບຮຽງປຶ້ມຫຼັກສູດ ແລະ ແຜນຈັດປະສົບການສຳລັບເດັກກ່ອນໄວຮຽນເຫຼັ້ມນີ້ຂຶ້ນມາ ເພື່ອຮັບໃຊ້ເຂົ້າໃນການຮຽນ-ການສອນໃນສາຍຄູອະນຸບານ, ເຊິ່ງພັດທະນາຕາມທິດທາງການສຶກສາແບບໃໝ່ທີ່ເນັ້ນເຖິງອຸດົມການຮຽນ, ໃຫ້ມີຄຸນນະທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນຄູເຮັດໃຫ້ຄູມີທັກສະວິຊາຊີບຄວາມເປັນຄູ ແລະ ເຂົ້າໃຈໃນພັດທະນາການຂອງເດັກແຕ່ລະຊ່ວງອາຍຸ, ຮູ້ຈັກສ້າງແຜນການສອນ, ຜະລິດອຸປະກອນ, ມີນ້ຳໃຈຮັກອາຊີບແພງເດັກ, ມີຄວາມຮັບຜິດຊອບສູງຕໍ່ການພັດທະນາວິຊາຊີບຕົນເອງ.

ປຶ້ມແບບຮຽນເຫຼັ້ມນີ້ ຮຽບຮຽງຂຶ້ນມາເພື່ອນຳໃຊ້ເຂົ້າໃນການຄົ້ນຄ້ວາສຶກສາຮ່ຳຮຽນຂອງຄູ ແລະ ນັກຮຽນຄູໃນວິທະຍາໄລຄູ. ໂດຍຜ່ານການກວດແກ້ຈາກວິຊາການ-ຄູສອນພາຍໃນສາຍອະນຸບານເພື່ອນຳໃຊ້ເຂົ້າໃນການສິດສອນໃນຂັ້ນຕໍ່ໄປ.

ຫວັງຢ່າງຍິ່ງວ່າ ຄູ-ອາຈານ ແລະ ຜູ້ອ່ານທ່ານໃດ ຫາກພົບເຫັນບັກຫາໃດທີ່ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນກັບສະພາບການ, ກາລຸນາປະກອບຄຳຄິດເຫັນຂອງຕົນໃສ່ ເພື່ອຊ່ວຍປັບປຸງປຶ້ມແບບຮຽນເຫຼັ້ມນີ້ໃຫ້ສົມບູນ ແລະ ມີປະສິດທິຜົນດີຂຶ້ນ.

# ສາລະບານ


**ບົດທີ 1 ຫຼັກສູດ ສໍາລັບເດັກອາຍຸ 3 ເດືອນ ຫາ 36 ເດືອນ**

1. ວິເຄາະ ຈຸດໝາຍຂອງການເບິ່ງແຍງດູແລເດັກສໍາລັບເດັກອາຍຸ 3 ເດືອນ ຫາ 36 ເດືອນ......................1
2. ວິເຄາະ ເປົ້າໝາຍການສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 36 ເດືອນ..........................................1
3. ວິເຄາະ ເນື້ອໃນການເຝິກແອບເດັກອາຍຸ 3 ເດືອນ ຫາ 36 ເດືອນ...................................................2
4. ວິເຄາະ ວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 36 ເດືອນ...........................2
5. ວິເຄາະ ຕາຕະລາງເຄື່ອນໄຫວປະຈໍາວັນສໍາເດັກອາຍຸ 3 ເດືອນ ຫາ 36 ເດືອນ.................................3
6. ວິເຄາະ ການຕິດຕາມພັດທະນາການເດັກອາຍຸ 3ເດືອນ ຫາ 36 ເດືອນ..........................................4

**ບົດທີ 2 ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 36 ເດືອນ**

1. ວິເຄາະ ກິດຈະກໍາການເຝິກແອບເດັກ 3ເດືອນ ຫາ 12 ເດືອນ, 12ເດືອນ ຫາ 24 ເດືອນ ແລະ ກິດຈະກໍາການເຝິກແອບເດັກ 24ເດືອນ ຫາ 36 ເດືອນ.........................................................................13
2. ການຜະລິດສື່ປະກອບການສອນສໍາລັບເດັກ 3ເດືອນ ຫາ 12 ເດືອນ...........................................18
3. ການແຕ່ງບົດສອນ ແລະ ເຝິກສອນຕົວຈິງເດັກອາຍຸ 3 ເດືອນ ຫາ 12ເດືອນ..................................19
4. ການຜະລິດສື່ປະກອບການສອນສໍາລັບເດັກ 12ເດືອນ ຫາ 24 ເດືອນ..........................................22
5. ການແຕ່ງບົດສອນ ແລະ ເຝິກສອນຕົວຈິງເດັກອາຍຸ 12ເດືອນ ຫາ 24ເດືອນ.................................23
6. ການຜະລິດສື່ປະກອບການສອນສໍາລັບເດັກ 24ເດືອນ ຫາ 36ເດືອນ..........................................25
7. ການແຕ່ງບົດສອນ ແລະ ເຝິກສອນຕົວຈິງເດັກອາຍຸ 24ເດືອນ ຫາ 36ເດືອນ.................................29

**ບົດທີ 3 ຫຼັກສູດ ຊັ້ນອະນຸບານສຶກສາ**

1. ວິເຄາະ ການຈັດການສຶກສາໃນຫຼັກສູດສໍາລັບເດັກກ່ອນໄວຮຽນ...............................................31
2. ຫຼັກສູດຊັ້ນອະນຸບານສຶກສາ, ຄວາມໝາຍ ແລະ ຄວາມສໍາຄັນຂອງຫຼັກສູດ, ຫຼັກການ ຂອງຫຼັກສູດຊັ້ນອະນຸບານສຶກສາ, ຈຸດປະສົງ ຂອງຫຼັກສູດຊັ້ນອະນຸບານສຶກສາ, ເນື້ອໃນ.....................................32
3. ຫຼັກການຈັດປະສົບການ, ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນໍາໃຊ້ຫຼັກສູດ......................35
4. ການຕິດຕາມ ແລະ ປະເມີນຜົນການນໍາໃຊ້ຫຼັກສູດ..................................................................47
5. ການລາຍງານຜົນການປະຕິບັດຫຼັກສູດ...................................................................................40

**ບົດທີ 4 ສະມັດຖະພາບດ້ານການກຽມຄວາມພ້ອມໃຫ້ແກ່ເດັກຊັ້ນອະນຸບານສຶກສາ**

1. ວິເຄາະ ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 3-6 ປີ..........................................44
2. ສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ................45
3. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານອາລົມ-ຈິດໃຈ......................................48
4. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານສັງຄົມ................................................50
5. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ.............67
6. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານພາສາລາວ............................................69

7. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານພາສາອັງກິດ.........................................69
**ບົດທີ 5 ແຜນຈັດປະສົບການ ແລະ ຄູ່ມືການຈັດກິດຈະກຳ ຊັ້ນອະນຸບານສຶກສາ**
**1.** ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ..............62
2. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳໃນວົງມົນ.......................................101
3. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳສິລະປະສ້າງສັນ................................125
4. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳການຫຼິ້ນກາງແຈ້ງ..............................143
5. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳການຫຼິ້ນເກມການສຶກສາ.....................151
6. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມື ການຈັດ ກິດຈະກຳການຫຼິ້ນຕາມມຸມ..............................155
**ເອກະສານອ້າງອີງ**.................................................................................................176
**ໂຄ່ງຮ່າງລາຍວິຊາ**.................................................................................................178

# ບົດທີ 1

## ຫຼັກສູດ ສຳລັບເດັກອາຍຸ 3 ເດືອນ ຫາ 36 ເດືອນ

**ຈຳນວນ 5 ຊົ່ວໂມງ**

**ຈຸດປະສົງ ໃຫ້ນັກສຶກສາຄູສາມາດ:**

**ວິເຄາະ ຈຸດໝາຍຂອງການເບິ່ງແຍງດູແລເດັກ, ເປົ້າໝາຍການສຶກສາອົບຮົມເດັກ, ເນື້ອໃນການເຝິກແອບ, ວິທີການເຝິກແອບ ແລະ ສຶກສາອົບຮົມເດັກ, ຕາຕະລາງເຄື່ອນໄຫວປະຈຳວັນ ແລະ ການຕິດຕາມພັດທະນາການເດັກອາຍຸ 3 ເດືອນ ຫາ 36 ເດືອນ.**

### 1. ວິເຄາະ ຈຸດໝາຍຂອງ ການເບິ່ງແຍງດູແລ ເດັກສຳອາຍຸ 3 ເດືອນ ຫາ 36 ເດືອນ.

ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ ອາຍຸ 3 ເດືອນ - 36 ເດືອນ ແມ່ນແນໃສ່ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ວ່ອງໄວ, ມີຄວາມເບີກບານມ່ວນຊື່ນ, ເລີ່ມຮູ້ພົວພັນກັບຜູ້ໃຫຍ່, ໃກ້ຊິດກັບໝູ່ເພື່ອນ, ມີຄວາມຊື້ນເຄີຍໃນດ້ານອະນາໄມ ແລະ ລະບຽບວິໄນຂັ້ນພື້ນຖານເບື້ອງຕົ້ນ.

### 2. ວິເຄາະ ການສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 36 ເດືອນ.

ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ ອາຍຸ 3 ເດືອນ - 36 ເດືອນ ແມ່ນແນໃສ່ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ວ່ອງໄວ, ມີຄວາມເບີກບານມ່ວນຊື່ນ, ເລີ່ມຮູ້ພົວພັນກັບຜູ້ໃຫຍ່, ໃກ້ຊິດກັບໝູ່ເພື່ອນ, ມີຄວາມຊື້ນເຄີຍໃນດ້ານອະນາໄມ ແລະ ລະບຽບວິໄນຂັ້ນພື້ນຖານເບື້ອງຕົ້ນ. ດັ່ງນັ້ນ, ການລ້ຽງດູ ແລະ ສຶກສາອົບຮົມເດັກກໍ່ເພື່ອແນໃສ່ພັດທະນາເດັກທັງ 5 ດ້ານໄປພ້ອມໆກັນ:

**1.1. ພັດທະນາດ້ານຮ່າງກາຍ**

- ການປະຕິບັດຕາຕະລາງເຄື່ອນໄຫວ, ພັກຜ່ອນໃຫ້ເໝາະສົມຕາມສຳອາຍຸຂອງເດັກ
  ເດັກອາຍຸ 3 ເດືອນ - 12 ເດືອນ ໃຫ້ເຝິກແອບປະສາດສຳຜັດທັງ 5
  ເດັກອາຍຸ 3 - 4 ເດືອນ ແອບໃຫ້ຂວັ້ມ ແລະ ເລືອໄປເອົາເຄື່ອງຫຼິ້ນໄດ້
  ເດັກອາຍຸ 5 – 6 ເດືອນ ແອບນັ່ງ
  ເດັກອາຍຸ 6 – 7 ເດືອນ ແອບໃຫ້ເດັກຄານ
  ເດັກອາຍຸ 8 – 10 ເດືອນ ແອບໃຫ້ຈັບຢືນ
  ເດັກອາຍຸ 11 – 12 ເດືອນ ແອບໃຫ້ຍ່າງ

ເດັກອາຍຸ 12 – 24 ເດືອນ ເດັກຍ່າງທ່ຽງ, ຍ່າງຂ້າມສິ່ງກີດຂວາງ, ຄານລອດອຸມົງ, ເຝິກການເຄື່ອນເໜັງກ້າມຊີ້ນຝາມື ແລະ ນິ້ວມືເດັກອາຍຸ 24 – 36 ເດືອນ ຈະຍ່າງ, ແລ່ນ, ເຕັ້ນ, ທ່າເຄື່ອນໄຫວແບບນີ້ໄດ້ຄ່ອຍໆສົມບູນຂຶ້ນ ແລະ ສາມາດເຄື່ອນໄຫວ ແບບປະສານ ລະຫວ່າງ ມື ແລະຕີນ ແລະ ຕາ, ຕີນ - ມື ແລະ ຕາ ໃນເວລາດຽວກັນ.ລວມຄວາມວ່າ ຄວາມພ້ອມທາງດ້ານຮ່າງກາຍຂອງເດັກທີ່ພັດທະນາຕາມປົກກະຕິ ແມ່ນການເບິ່ງເຫັນ, ການໄດ້ຍິນສຽງ, ການສຳຜັດ ແລະ ການເຄື່ອນເໜັງຂອງກ້າມຊີ້ນໃນພາກສ່ວນຕ່າງໆຂອງຮ່າງກາຍ.

**1.2.ພັດທະນາດ້ານອາລົມ ແລະ ຈິດໃຈ**

ເດັກເຂົ້າມາຮຽນຢູ່ໂຮງຮຽນລ້ຽງເດັກ ຕ້ອງເຮັດໃຫ້ເດັກຮູ້ສຶກມີຄວາມອົບອຸ່ນ, ມີອາລົມເບີກບານມ່ວນຊື່ນຈາກການດູແລເອົາໃຈໃສ່ຂອງຄູລ້ຽງເດັກ.

**1.3.ພັດທະນາດ້ານສັງຄົມ**

ເດັກເລີ່ມສະແດງອອກໃຫ້ຮູ້ວ່າໃຜເປັນຜູ້ທີ່ຕົນມັກ ແລະ ບໍ່ມັກ, ທ້າຍອາຍຸ 24 ເດືອນ ເດັກເລີ່ມຮູ້ສົນໃຈກັບການຫຼິ້ນຂອງໝູ່ຄູ່ ແລະ ສາມາດເຂົ້າຫຼິ້ນຮ່ວມກັບໝູ່ໄດ້.

**1.4.ພັດທະນາດ້ານສະຕິປັນຍາ ແລະ ພາສາເວົ້າ**

- ເດັກເລີ່ມສະແດງໃຫ້ເຮົາເຫັນວ່າ ເດັກຮັບຮູ້ສິ່ງຕ່າງໆ ໂດຍຜ່ານປະສາດສຳພັດອັນຊີທັງ 5 ເຊິ່ງມີລັກສະນະຄ້າຍຄືມັກສຳຫຼວດ, ຊອກເລາະທ່ຽວ, ຈອບໆ ແນມໆ ເພື່ອຊອກຫາປະສົບການດ້ວຍຕົນເອງ.
- ດ້ານພາສາ: ໃຫ້ເດັກສາມາດໃຊ້ພາສາເວົ້າທີ່ສະແດງຄວາມຕ້ອງການຂອງຕົນເອງໄດ້, ເວົ້າໄດ້ເປັນຄຳ, ເປັນປະໂຫຍກສັ້ນ ແລະ ກໍສາມາດອະທິບາຍເຫດຜົນໄດ້ຫຼາຍຂຶ້ນ, ເດັກເລີ່ມຕັ້ງຄຳຖາມແມ່ນຫຍັງ? ເປັນຫຍັງ?...ຖືໄດ້ວ່າເດັກທ້າຍອາຍຸ 24 – 36 ເດືອນເລີ່ມຮູ້ໃຊ້ຄວາມຄິດ ແລະ ອະທິບາຍເຫດຜົນໄດ້ດີຂຶ້ນ.

## 3. ວິເຄາະ ເນື້ອໃນການເຝິກແອບເດັກອາຍຸ 3 ເດືອນ ຫາ 36 ເດືອນ

ເນື້ອໃນການເຝິກແອບເດັກອາຍຸ 3 ເດືອນ - 36 ເດືອນ ໄດ້ແບ່ງອອກເປັນ 3 ໄລຍະ ເຊິ່ງແຕ່ລະໄລຍະມີເນື້ອໃນການເຝິກແອບດັ່ງນີ້:

| ເດັກ 3 ເດືອນ–12 ເດືອນ | ເດັກ 12 ເດືອນ–24 ເດືອນ | ເດັກ 24 ເດືອນ–36 ເດືອນ |
|---|---|---|
| • ການເຝິກແອບຮ່າງກາຍ<br>• ການຫຼິ້ນແບບຫຼິ້ນ<br>• ການພັດທະນາພາສາ | • ການເຝິກແອບຮ່າງກາຍ<br>• ການຫຼິ້ນແບບຫຼິ້ນ<br>• ຄຳຄ່ອງ–ການເລົ່າເລື່ອງ<br>• ເພງ<br>• ສັງກັດ ແລະ ແອບເວົ້າ | • ການເຝິກຮ່າງກາຍ<br>• ກິດຈະກຳສ້າງສັນ<br>• ເພງ-ຟ້ອນ<br>• ຄຳຄ່ອງ-ການເລົ່າເລື່ອງ<br>• ຄະນິດສາດ<br>• ແບບຫຼິ້ນ<br>• ການສັງກັດ ແລະ ສົນທະນາ |

## 4. ວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 12 ເດືອນ

- ໃຊ້ສອງມືລູບໄລ່ຕົນຕົວຢ່າງເບົາໆ, ເວົ້າລົມຍິ້ມຫົວກັບເດັກ, ນຳໃຊ້ເຄື່ອງຫຼິ້ນທີ່ມີສີງາມ, ມີສຽງເພື່ອດຶງດູດຄວາມສົນໃຈຂອງເດັກ, ເຮັດໃຫ້ເດັກດີໃຈ ແລະ ກຽມພ້ອມເຝິກແອບກັບຄູ ແລ້ວຄູຈຶ່ງດຳເນີນການເຝິກແອບ ແລະ ສຶກສາອົບຮົມເດັກຕາມຈຸດປະສົງທີ່ວາງໄວ້.
- ການເຝິກແອບ ແລະ ສຶກສາອົບຮົມເດັກ ຕ້ອງດຳເນີນເປັນເທື່ອລະຄົນ ຫຼື ເປັນກຸ່ມ 2 ຄົນ - 3 ຄົນ ໂດຍຄູເປັນຜູ້ເຝິກແອບໃຫ້ ແລະ ພາເດັກເຝິກແອບ.ໃຊ້ເວລາເຝິກແອບ 3 – 5 ນາທີ.
- ເລີ່ມເຝິກແອບ ແລະ ສຶກສາເດັກທາງບດ້ານລະບຽບແບບແຜນເບື້ອງຕົ້ນ ໃນດ້ານມາລະຍາດການກິນ ຕ້ອງກິນເປັນເວລາ, ກິນຊ້າ, ກິນໃຫ້ອີ່ມແລ້ວຈຶ່ງດື່ມນ້ຳ.
- ການນອນ ເຝິກໃຫ້ເດັກນອນໃນບ່ອນທີ່ສະອາດ, ງຽບສະຫງົບດີແລະ ນອນເປັນເວລາ.
- ພະຍາຍາມເຝິກໃຫ້ເດັກມີຄວາມຊື້ນເຄີຍກັບການຖ່າຍໃຫ້ເປັນເວລາ, ເດັກຖ່າຍແລ້ວຄູຕ້ອງລ້າໃຫ້ເດັກຢ່າງສະອາດ ແລະ ເອົາແພສະອາດເຊັດໃຫ້ແຫ້ງ.

## 5. ຕາຕະລາງກິດຈະກຳປະຈຳວັນ

ການປະຕິບັດແຜນລ້ຽງດູສຶກສາເດັກໃຫ້ໄດ້ຮັບຜົນດີພວກເຮົາຕ້ອງປະຕິບັດຕາມການເຄື່ອນໄຫວຕາມຕາ ຕາລາງການເຄື່ອນໄຫວປະຈຳວັນຂອງເດັກແຕ່ລະສຳອາຍຸຢ່າງຖືກຕ້ອງ, ສົມເຫດສົມຜົນ ແລະສາມາດໝູນໃຊ້ຕາ ຕາລາງສອງຄ່ອງເໝາະສົມກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນຢ່າງປະດິດສ້າງ.

### 5.1 ຕາຕະລາງເຄື່ອນໄຫວປະຈ□າວັນຂອງເດັກອາຍຸ 3 – 12 ເດືອນ

| ລ/ດ | ເນື້ອໃນການເຄື່ອນໄຫວ | ອາຍຸ 3 - 6 ເດືອນ | ອາຍຸ 7 - 12 ເດືອນ |
|---|---|---|---|
| 1 | ຮັບເດັກ | 7:30–8:00 | 7:30–8:00 |
| 2 | ນອນ(9) | 8:00–9:00 | 8:00–9:30 |
| 3 | ກິນ(1) | 9:30–10:30 | 9:30–10:30 |
| 4 | ຫຼິ້ນຫຼືເຝີແອບ(1) | 10:30–11:00 | 10:30–11:00 |
| 5 | ກິນ(2) | 11:00–11:30 | 11:00–11:30 |
| 6 | ນອນ(2) | 11:30–14:00 | 11:30–14:00 |
| 7 | ຫຼິ້ນຫຼືເຝິກແອບ(2) | 14:00–14:40 | 14:00–15:00 |
| 8 | ກິນ(3) | 14:40–15:00 | 15:00–15:30 |
| 9 | ນອນ(3) | 15:00–16:30 | 15:30–16:30 |
| 10 | ສົ່ງເດັກ | 16:30–17:00 | 16:30–17:00 |

### 5.2 ຕາຕະລາງເຄື່ອນໄຫວປະຈ□າວັນຂອງເດັກອາຍຸ 12 - 24 ເດືອນ

| ລ/ດ | ເນື້ອໃນການເຄື່ອນໄຫວ | ອາຍຸ12-18ເດືອນ | ອາຍຸ 19-24ເດືອນ |
|---|---|---|---|
| 1 | ຕ້ອນຮັບເດັກ | 7:30–800 | 7:30–8:00 |
| 2 | ຫຼິ້ນຫຼືເຝິກແອບ(1) | 8:00–9:30 | 8:00–10:00 |
| 3 | ກິນ(1) | 9:30–10:30 | 10:00–11:00 |
| 4 | ນອນ(1) | 10:30–14:00 | 11:00–14:00 |
| 5 | ຫຼິ້ນຫຼືເຝິກແອບ(2) | 14:00–14:30 | 14:00–15:00 |
| 6 | ກິນ(2) | 14:30–15:00 | 15:00–15:30 |
| 7 | ນອນ(2) | 1500:16:00 | 15:30–16:00 |
| 8 | ຫຼິ້ນ ແລະ ກຽມສົ່ງເດັກ | 16:00–17:00 | 16:00–17:00 |

### 5.3 ຕາຕະລາງເຄື່ອນໄຫວປະຈ□າວັນຂອງເດັກອາຍຸ 24 - 36 ເດືອນ

7:30 – 8:30 ຮັບເດັກແລ້ວໃຫ້ເດັກຫຼິ້ນຕາມໃຈ

8:30 – 9:00 ເຄົາລົບທຸງແລະຫັດກາຍຍະບໍລິຫານ

9:00 – 9:45 ຫຼິ້ນຕາມມູມຫຼືກິດຈະກ□າສິນລະປະແຕ້ມ ຮ້ອຍ ປັ້ນ ຈີກ

9:45 – 10:00 ຫຼິ້ນຕາມໃຈ

10:00 – 10:15 ສັງເກດສິນທະນາຫຼືເພງ ຟ້ອນ ແລະຄະນິດສາດ

10:15 – 10:30 ຫຼິ້ນແບບຫຼິ້ນ ແລະ ການເຄື່ອນໄຫວດ້ານຮ່າງກາຍ ກິລາ

10:30 – 11:30 ຮັບປະທານອາຫານທ່ຽງ

11:00 – 15:15 ຕື່ນນອນອານາໄມ ແລະ ກິນອາຫານຫວ່າງ

15:15 – 15:30 ຄ□າຄ່ອງ ແລະ ເລົ່າເລື່ອງ

15:30 – 16:00 ຫຼິ້ນຕາມໃຈ ອານາໄມ ແລະ ກຽມສົ່ງເດັກ

- **ສິ່ງທີ່ຄວນເອົາໃຈໃສ່ໃນການປະຕິບັດຕາຕະລາງເຄື່ອນໄຫວປະຈໍາວັນຂອງເດັກອາຍຸແຕ່ລະສົກອາຍຸ.**

– ເດັກອາຍຸ 3 ເດືອນ ຫາ 12 ເດືອນ ເຝິກແອບເທື່ອໜຶ່ງ 3 – 5 ນາທີຕໍ່ເດັກ 1 ຄົນ.

– ເດັກອາຍຸ 12 ເດືອນຫາ 24 ເດືອນ ເຝິກແອບເທື່ອໜຶ່ງ 5 – 7 ນາທີຕໍ່ເດັກ 1 ຄົນ.

– ເດັກອາຍຸ 24 ເດືອນຫາ 36 ເດືອນ ເຝິກແອບເທື່ອໜຶ່ງ 7 – 10 ນາທີຕໍ່ເດັກ 1 ຄົນ.

ການຈັດຕັ້ງເຝິກແອບເດັກອາດຈະເຝິກເທື່ອລະຄົນ ຫຼື ເຝິກເດັກເປັນກຸ່ມ. ການເຝິກເທື່ອລະຄົນ ຫຼື ເຝິກເດັກເປັນກຸ່ມກໍ່ຈະປະຕິບັດຕາມເວລາທີ່ໄດ້ກໍານົດໃນຕາຕະລາງເປັນຫຼັກ ເວັ້ນເສຍແຕ່ເດັກມີຄວາມພ້ອມແກ່ຍາວເວລາໄປກວ່າທີ່ກໍານົດກໍສະໜອງຕາມຄວາມຕ້ອງການຂອງເດັກ.

- **ສໍາລັບໂຮງຮຽນລ້ຽງເດັກແຫ່ງທີ່ບໍ່ສາມາດຮັບເດັກໝົດມື້ຕາມຕາຕະລາງທີ່ກໍານົດໄວ້ໃຫ້ປະຕິບັດຕາມນີ້:**

– ຮັບເດັກ 7:30 ນາທີ ຫາ 8:00 ໂມງ

– ສົ່ງເດັກຕອນທ່ຽງ 11:00ໂມງ ຫາ 11:30 ໂມງ

– ຮັບຕອນບ່າຍ 14:00ໂມງ

– ສົ່ງຕອນແລງ 16:30 ຫາ 17:00 ໂມງ

- **ສໍາລັບການປະຕິບັດຕາຕະລາງເຄື່ອນໄຫວຂອງເດັກອາຍຸ 24 ເດືອນຫາ 36 ເດືອນ**

ຄວນພິຈາລະນາຕາຕະລາງໃຫ້ເຂົ້າໃຈກ່ອນວ່າໃນມື້ໜຶ່ງ ຈະຈັດກິດຈະກໍາອັນໃດແດ່ໃຫ້ແກ່ເດັກເໝາະສົມກັບທ້ອງຖິ່ນໄດ້.

**ຕົວຢ່າງ:**

9:00 – 9:45 ໃຫ້ເດັກຫຼິ້ນຕາມມູມກໍພໍແລ້ວ ສ່ວນກິດຈະກໍາສິລະປະໃຫ້ເອົາໄວ້ເຮັດມື້ໃໝ່.

10:00 – 10:15 ຈະເອົາສັງສົນທະນາກໍພໍ ສ່ວນເພງ - ຟ້ອນ ຫຼື ຄະນິດສາດໃຫ້ເອົາໄວ້ຮຽນມື້ໃໝ່ຕໍ່ໄປ ບໍ່ແມ່ນຈະຮຽນໃນມື້ນັ້ນໝົດ.

15:15 – 15:30 ຈະໃຫ້ຟັງຄໍາຄ່ອງກໍພໍ ສ່ວນເລົ່າເລື່ອງເອົາໄວ້ຮຽນໃນມື້ຕໍ່ໄປເຊັ່ນກັນ

## 6. ວິເຄາະ ການຕິດຕາມພັດທະນາການເດັກອາຍຸ 3 ເດືອນ ຫາ 36 ເດືອນ

### 1. ຕິດຕາມພັດທະນາການທັງ4ດ້ານຂອງເດັກໃນຊັ້ນລ້ຽງເດັກ

ຊື່ໂຮງຮຽນ...............................................................................................

ຊື່ແລະນາມສະກຸນຂອງເດັກ.............................................................................

ວັນເດືອນປີເກີດ..........................................................................................

ຫ້ອງຮຽນ..................................................................................................

ຊື່ແລະນາມສະກຸນຜູ້ປົກຄອງເດັກ......................................................................

ບ່ອນປະຈໍາການ..........................................................................................

ບ້ານຢູ່.......................................ເມືອງ...........................ແຂວງ..................................

ໂທລະສັບຢູ່ເຮືອນ.......................................ຫຼືບ່ອນເຮັດວຽກ....................................

ຊື່ແລະນາມສະກຸນຄູປະຈໍາຫ້ອງ.......................................................................

ຊື່ແລະນາມສະກຸນຜູ້ອໍານວຍການ....................................................................

ນ້ຳໜັກ ແລະ ລວງສູງ: ?

ຄຳຊີ້ແຈ້ງ:

ປື້ມຕິດຕາມພັດທະນາການເດັກເຫຼັ້ມນີ້ມີຈຸດປະສົງ ເພື່ອການປະສານສົມທົບລະຫວ່າງຄູແລະຜູ້ປົກຄອງ ໂດຍຄູຈະສັງເກດ ແລະ ບັນທຶກຕິດຕາມຜົນພັດທະນາດການຂອງເດັກທາງດ້ານຮ່າງກາຍອາລົມຈິດໃຈສັງຄົມ ແລະ ສະຕິປັນຍາ ເພື່ອລາຍງານໃຫ້ຜູ້ປົກຄອງຮັບຮູ້ ແລະ ເພື່ອຄູໄດ້ຮັບຄວາມຮູ້ຄວາມຄິດເຫັນຈາກຜູ້ປົກຄອງກ່ຽວກັບຕົວຂອງເດັກເວລາຢູ່ເຮືອນ.

ນອກນັ້ນ ຄູກໍ່ມີໂອກາດຊອກວິທີແກ້ໄຂ ແລະ ຊ່ວຍເຫຼືອເດັກຕາມກໍ່ລະນີຕົວຈິງເພື່ອມຸ້ງຫວັງໃຫ້ເດັກໄດ້ຮັບການພັດທະນາຢ່າງຮອບດ້ານ.

ຄຳອະທິບາຍ: ເຄື່ອງໝາຍ

: ໝາຍໃສ່ຊື່ງຫວ່າງ



: ສາມາດເຮັດໄດ້ຢ່າງໝັ້ນໃຈແລະຖືກຕ້ອງ

: ສາມາດເຮັດໄດ້ແຕ່ຍັງບໍ່ໝັ້ນໃຈເທົ່າທີ່ຄວນ

: ສາມາດເຮັດບາງສ່ວນ ແລະ ຄວນໄດ້ຮັບການປັບປຸງແນະນຳຕື່ມ

## ເວລາໃນສົກຮຽນໜຶ່ງ

| ລ/ດ | ເວລາຮຽນ ເດືອນ | ເດັກ3ເດືອນ-1ປີ | | | ເດັກ1ປີ-1ປີ5ເດືອນ | | | ເດັກ1ປີ6ເດືອນ-2ປີ | | | ເດັກ2ປີ-3ປີ | | |
|---|---|---|---|---|---|---|---|---|---|---|---|---|---|
| | | ເວລາເຕັມ | ມາ | ຂາດ | ເວລາເຕັມ | ມາ | ຂາດ | ເວລາເຕັມ | ມາ | ຂາດ | ເວລາເຕັມ | ມາ | ຂາດ |
| 1 | ກັນຍາ | | | | | | | | | | | | |
| 2 | ຕຸລາ | | | | | | | | | | | | |
| 3 | ພະຈິກ | | | | | | | | | | | | |
| 4 | ທັນວາ | | | | | | | | | | | | |
| 5 | ມັງກອນ | | | | | | | | | | | | |
| 6 | ກຸມພາ | | | | | | | | | | | | |
| 7 | ມີນາ | | | | | | | | | | | | |
| 8 | ເມສາ | | | | | | | | | | | | |
| 9 | ພຶດສະພາ | | | | | | | | | | | | |

## ຕິດຕາມສຸຂະພາບ

| ຫ້ອງຮຽນ | ຢາປ້ອງກັນໂລກທີ່ເຄີຍສັກຜ່ານມາ | ວັນ/ເດືອນ/ປີ | ກວດກາສຸຂະພາບ | ວັນ/ເດືອນ/ປີ | ພະຍາດທີ່ກວດພົບ |
|---|---|---|---|---|---|
| ອາຍຸ 3ເດືອນ-1ປີ | | | | | |
| ອາຍຸ 1ປີ-1ປີ-6 ເດືອນ | | | | | |

| | | | | | |
|---|---|---|---|---|---|
| ອາຍຸ 1ປີ6ເດືອນາ–2 ປີ | | | | | |
| ອາຍຸ 2ປີ–3ປີ | | | | | |

## ການຕິດຕາມສັ່ງນໍ້າໜັກແຕ່ລະເດືອນ

| ເດືອນ | ເດັກ 3ເດືອນ - 1ປີ | | | ເດັກ 1ປີ–1ປີ5ເດືອນ | | | ເດັກ 1ປີ6ເດືອນ–6ເດືອນ | | | ເດັກ 2ປີ–3ເດືອນ | | |
|---|---|---|---|---|---|---|---|---|---|---|---|---|
| | ຫຼາຍ | ກາງ | ໜ້ອຍ | ຫຼາຍ | ກາງ | ໜ້ອຍ | ຫຼາຍ | ກາງ | ໜ້ອຍ | ຫຼາຍ | ກາງ | ໜ້ອຍ |
| ກັນຍາ | | | | | | | | | | | | |
| ຕຸລາ | | | | | | | | | | | | |
| ພະຈິກ | | | | | | | | | | | | |
| ທັນວາ | | | | | | | | | | | | |
| ມັງກອນ | | | | | | | | | | | | |
| ກຸມພັນ | | | | | | | | | | | | |
| ມີນາ | | | | | | | | | | | | |
| ເມສາ | | | | | | | | | | | | |
| ພຶສະພາ | | | | | | | | | | | | |

## ການເຝິກແອບເດັກຕ່າງໆ:ເດັກ 3 ເດືອນຫາ 1 ປີ

| ພຶດຕິກໍາການເຄື່ອນໄຫວຕ່າງໆ | ພາກຮຽນ1 | | | ພາກຮຽນ2 | | |
|---|---|---|---|---|---|---|
| • ການເຝິກແອບທາງດ້ານຮ່າງກາຍ | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ຂ້ວາມ | | | | | | |
| ຄານ | | | | | | |
| ນັ່ງ | | | | | | |
| ຢືນ(ຈັບຮາວ) | | | | | | |
| ຢືນ(ປະມືໄດ້) | | | | | | |
| ຍ່າງ(ລຽບ) | | | | | | |
| ຍ່າງ(ຍ່າງໄດ້ ປະມື) | | | | | | |
| • ການເຝິກແອບທາງດ້ານພາສາ<br>– ເຝິກການເວົ້າຕ່າງໆ | | | | | | |
| ຝຶກດ້ານມາລະຍາດຕ່າງໆບ່າຍບ່າຍ ຈູບລາ | | | | | | |
| ການຫຼິ້ນແບບຫຼິ້ນຕ່າງໆ | | | | | | |
| ການກິນ | | | | | | |
| ການນອນ | | | | | | |
| ການຂັບຖ່າຍ | | | | | | |

## ພາກສ່ວນທີ່ພົວພັນກັບຄອບຄົວ

| ເນື້ອໃນລະອຽດ | ພາກຮຽນທີ1 | | | ພາກຮຽນທີ2 | | |
|---|---|---|---|---|---|---|
| | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ການອານາໄມເດັກຈາກຄອບຄົວ | | | | | | |
| ການຮັບ ສົ່ງເດັກກັບຄອບຄົວ | | | | | | |
| ການພົວພັນລະຫວ່າງສາວຄູກັບພໍ່ແມ່ເດັກ | | | | | | |
| ການປະກອບສ່ວນຂອງພໍ່ແມ່ ເຄື່ອງນຸ່ງຮົ່ມ ອອ້ມກ່ອງ ຖົງຢາງ ແລະອື່ນໆ | | | | | | |

| ພາກຮຽນທີ1 | ພາກຮຽນທີ2 |
|---|---|
| ຄວາມຄິດເຫັນຂອງຄູ | ຄວາມຄິດເຫັນຂອງຄູ |
| ຄວາມຄິດເຫັນຂອງຜູ້ປົກຄອງ | ຄວາມຄິດເຫັນຂອງຜູ້ປົກຄອງ |

## ການຝຶກແອບເດັກຕ່າງໆ 1 ປີ - 1 ປີ 5 ເດືອນ

| ພຶດຕິກຳການເຄື່ອນໄຫວ | ພາກຮຽນ1 | | | ພາກຮຽນ2 | | |
|---|---|---|---|---|---|---|
| • ການຝຶກແອບດ້ານຮ່າງກາຍ | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ຍ່າງ | | | | | | |
| ແລ່ນ | | | | | | |
| ເຕັ້ນ | | | | | | |
| • ການຝຶກແອບດ້ານພາສາ | | | | | | |
| ສັງເກດແອບເວົ້າ | | | | | | |
| ຟັງເລົ່າເລື່ອງຕາມຮູບແບບ | | | | | | |
| ຟັງຄຳຄ່ອງລະເວົ້າຄຳຄ່ອງບາງຄຳໄດ້ | | | | | | |
| ການຝຶກມາລະຍາດຕ່າງໆ ຂອບໃຈ ໂບກມື ຈູບລາ ບ່າຍໆ | | | | | | |
| ການພົວພັນກັບໝູ່ເພື່ອນ | | | | | | |
| ການຝຶກແອບສຳຜັດຕ່າງໆ | | | | | | |
| ການຫຼິ້ນແບບຕ່າງໆ | | | | | | |
| ການກິນ | | | | | | |
| ການນອນ | | | | | | |
| ການຂັບຖ່າຍ | | | | | | |

## ພາກສ່ວນທີ່ພົວພັນກັບຄອບຄົວ

| ເນື້ອໃນລະອຽດ | ພາກຮຽນທີ1 | | | ພາກຮຽນທີ2 | | |
|---|---|---|---|---|---|---|
| | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ການອານາໄມເດັກຈາກຄອບຄົວ | | | | | | |
| ການຮັບສົ່ງເດັກຂອງຄອບຄົວ | | | | | | |

| | | | | | | |
|---|---|---|---|---|---|---|
| ການພົວພັນລະຫວ່າງສາວຄູກັບພໍ່ແມ່ເດັກ | | | | | | |
| ການປະກອບສ່ວນຂອງພໍ່ແມ່ເດັກ ເຄື່ອງນຸ່ງຜ້າ ອອ້ມ ກ່ອງນົມ ຖົງຢາງໃສ່ເຄື່ອງ ເປື້ອນ ການອານາໄມເຄື່ອງໃຊ້ຂອງລູກ | | | | | | |

| ພາກຮຽນທີ1 | ພາກຮຽນທີ2 |
|---|---|
| ຄວາມຄິດເຫັນຂອງຄູ | ຄວາມຄິດເຫັນຂອງຄູ |
| ຄວາມຄິດເຫັນຂອງຜູ້ປົກຄອງ | ຄວາມຄິດເຫັນຂອງຜູ້ປົກຄອງ |

**ການຝຶກແອບເດັກຕ່າງໆ ເດັກ 1 ປີ 6 ເດືອນຫາ 2ປີ**

| ພຶດຕິກຳການເຄື່ອນໄຫວຕ່າງໆ | ພາກຮຽນ1 | | | ພາກຮຽນ2 | | |
|---|---|---|---|---|---|---|
| ການເຝິກແອບທາງດ້ານຮ່າງກາຍ | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ຍ່າງຕາມເສັ້ນຊື່ໄດ້ 2ແມັດ | | | | | | |
| ແລ່ນ | | | | | | |
| ເຕັ້ນ | | | | | | |
| • ການຝຶກແອບທາງດ້ານຮ່າງກາຍ | | | | | | |
| ສັງເກດແອບເວົ້າ | | | | | | |
| ຟັງເລົ້າເລື່ອງ | | | | | | |
| ຟັງຄຳຄ່ອງ ແລະ ເວົ້າຄຳຄ່ອງໄດ້ເປັນປະໂຫຍດສັ້ນ | | | | | | |
| ຟັງຮ້ອງເພງຫຼືຮ້ອງເພງໄດ້ເປັນປະໂຫຍກ | | | | | | |
| ການຝຶກແອບມາລະຍາດຕ່າງໆ ຂອບໃຈ ໂບກມື | | | | | | |
| ການພົວພັນກັບໝູ່ເພື່ອນ | | | | | | |
| • ການຝຶກແອບສຳຜັດຕ່າງໆ | | | | | | |
| ການຫຼິ້ນແບບຕ່າງໆ | | | | | | |
| ການກິນ | | | | | | |
| ການນອນ | | | | | | |
| ການຂັບຖ່າຍ | | | | | | |
| ການມ້ຽນເຄື່ອງຫຼິ້ນ | | | | | | |

## ພາກສ່ວນທີ່ພົວພັນກັບຄອບຄົວ

| ເນື້ອໃນລະອຽດ | ພາກຮຽນ1 | | | ພາກຮຽນ2 | | |
|---|---|---|---|---|---|---|
| | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ການອານາໄມເດັກມາແຕ່ຄອບຄົວ | | | | | | |
| ການພົວພັນລະຫວ່າງຜູ້ປົກຄອງກັບສາວຄູ | | | | | | |
| ການຮັບ ສົ່ງເດັກຂອງຄອບຄົວ | | | | | | |

| | | | | | | |
|---|---|---|---|---|---|---|
| ຄວາມເອົາໃຈໃສ່ຂອງຜູ້ປົກຄອງເດັກ ກ້ຽມເຄື່ອງນຸ່ງ ຖົງຢາງ ໃສ່ເຄື່ອງເປື້ອນແລະກ້ຽມໃສ່ເຄືອງລູກຮຽບຮ້ອຍ | | | | | | |

| ພາກຮຽນທີ1 | ພາກຮຽນທີ2 |
|---|---|
| ຄວາມຄິດເຫັນຂອງຄູ | ຄວາມຄິດເຫັນຂອງຄູ |
| ຄວາມຄິດເຫັນຂອງຜູ້ປົກຄອງ | ຄວາມຄິດເຫັນຂອງຜູ້ປົກຄອງ |

## ການຝຶກແອບເດັກຕ່າງໆ ເດັກ 2 – 3 ປີ

| ພຶດຕິກຳການເຄື່ອນໄຫວ | ພາກຮຽນທີ1 | | | ພາກຮຽນທີ2 | | |
|---|---|---|---|---|---|---|
| • ການຝຶກແອບທາງດ້ານຮ່າງກາຍ | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |
| ການຈັບບ່ວງ ຖ້ວຍ ແລະຈອກນໍ້າ | | | | | | |
| ຈີກເຈ້ຍໃບຕອງເປັນປ່ຽງນ້ອຍ, ຮ້ອຍວັດສະດຸຕ່າງໆແລະປັ້ນສິ່ງງ່າຍໆໄດ້ | | | | | | |
| ໂຍນບານ ຮັບບານ ຈາກຄູແລະໝູ່ເພືອນໄດ້ | | | | | | |
| ເຕັ້ນຂາດຽວໄດ້1ຫາ2ບາດ | | | | | | |
| ຍ່າງຕໍ່ຕີນຕາມເສັ້ນຊື່ໄດ້(50ຊມ) | | | | | | |

| | | | | | | |
|---|---|---|---|---|---|---|
| ✓ ຢືນຂາດຽວໃດ້ 3 ວິນາທີ | | | | | | |
| ✓ ຍ່າງຄືເປັດ ແລະ ຍ່າງແຍ່ງຕີນໃດ້ (1 ມ) | | | | | | |
| ✓ ຍ່າງຂຶ້ນຂັ້ນໄດປ່ຽນຕີນໄດ້ (3 ຂັ້ນ) | | | | | | |
| ✓ ເຄື່ອນໄຫວຮ່າງກາຍຕາມຈັ່ງຫວະສຽງເພງ ແລະ ຕາມຈິນຕະນະການ | | | | | | |
| ✓ ເຕະບານໃປທາງໜ້າໃດ້ | | | | | | |
| ✓ ເຕັ້ນສອງຂາໃດ້ 3-5 ບາດ | | | | | | |
| • ການເຝິກແອບທາງດານສະຕິປັນຍາ | | | | | | |
| ✓ ບອກຊື່ຫຼິ້ນ ແລະ ຊື່ແທ້ຂອງຕົນເອງໃດ້ | | | | | | |
| ✓ ບອກຊື່ວັດຖຸໃດ້(ສີ່ງທີ່ມີຊີວິດ ແລະມ ບໍ່ມີຊີວິດ) | | | | | | |
| ✓ ຮູ້ຂີດຂຽນເສັ້ນພື້ນຖານຕ່າງໆ | | | | | | |
| ✓ ເວົ້າເປັນປະໂຫຍກສັ້ນໄດ້ | | | | | | |
| ✓ ບອກສີພື້ນຖານໄດ້(ແດງ,ຟ້າ,ເຫຼືອງ) | | | | | | |
| ✓ ເລົ່າາຄຳຄ່ອງສັ້ນໄດ້ | | | | | | |
| ✓ ຮູ້ຈັກນຳໃຊ້ຄຳຖາມງ່າຍດາຍໄດ້ | | | | | | |
| ✓ ຕໍ່ຮູບ 2-3 ປ່ຽງໃດ້ | | | | | | |
| ✓ ຮູ້ຄຳສັບທາງຄະນິດສາດ | | | | | | |
| ✓ ລຸ່ມ-ເທິງ | | | | | | |
| ✓ ໃກ້-ໄກ | | | | | | |

| | | | | | | |
|---|---|---|---|---|---|---|
| ✓ ນ້ອຍ-ໃຫຍ່ | | | | | | |
| ✓ ສັ້ນ-ຍາວ | | | | | | |
| ✓ ສູງ-ຕ່ຳ | | | | | | |
| ✓ ໃນ-ນອກ | | | | | | |
| • ການເຝິກແອບທາງດ້ານອາລົມ-ຈິດໃຈ | | | | | | |
| ✓ ມີຄວາມລ່າເລີງແຈ່ມໃສ | | | | | | |
| ✓ ມີຄວາມກ້າຫານ ແລະ ກ້າສະແດງອອກ | | | | | | |
| ✓ ບອກຄວາມຕ້ອງການແບບງ່າຍໄດ້ | | | | | | |
| ✓ ກິນອາຫານດ້ວຍຕົນເອງໄດ້ | | | | | | |
| ✓ ຮູ້ດີໃຈ-ເສຍໃຈ | | | | | | |
| ✓ ຮູ້ຂອບໃຈ-ຂໍໂທດ | | | | | | |
| ✓ ຮູ້ຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ | | | | | | |
| ✓ ຮູ້ປັບຕົວເຂົ້າກັບໝູ່ເພື່ອນ | | | | | | |
| ✓ ຮູ້ຈັກຖ່າຍໃຫ້ຖືກບ່ອນຕາມຜູ້ໃຫຍ່ບອກ | | | | | | |
| ✓ ຮູ້ຫຼິ້ນຮ່ວມໝູ່ ແລະ ປັນເຄື່ອງຫຼິ້ນໃຫ້ໝູ່ | | | | | | |
| ✓ ຮູ້ລໍຖ້າບໍ່ຍາດໝູ່ | | | | | | |
| ✓ ຮູ້ໃຊ້ຄຳສຸພາບອ່ອນໂຍນ | | | | | | |
| ✓ ຮູ້ມ້ຽນເຄື່ອງໃຊ້,ບ່ອນນອນ ແລະ ອື່ນໆ | | | | | | |

**ຕາຕະລາງບອກຜົນການພັດທະນາຄວາມພ້ອມໃນໜຶ່ງປີ**

| ພາກຮຽນທີ1 | ພາກຮຽນທີ2 |
|---|---|
| • ຄວາມຄິດເຫັນຂອງຄູ<br>✓ ດ້ານຮ່າງກາຍ<br>✓ ດ້ານສະຕິປັນຍາ<br>✓ ດ້ານອາລົມຈິດໃຈ-ສັງຄົມ | • ຄວາມຄິດເຫັນຂອງຄູ<br>✓ ດ້ານຮ່າງກາຍ<br>✓ ດ້ານສະຕິປັນຍາ<br>✓ ດ້ານອາລົມຈິດໃຈ-ສັງຄົມ |
| • ຄວາມຄິດເຫັນຂອງຜູ້ປົກຄອງ | • ຄວາມຄິດເຫັນຂອງຜູ້ປົກຄອງ |

| ຜົນການຮຽນພັດທະນາການຮຽນ | ພາກຮຽນທີ1 | | | ພາກຮຽນ2 | | |
|---|---|---|---|---|---|---|
| | ດີ | ກາງ | ອ່ອນ | ດີ | ກາງ | ອ່ອນ |

| | | | | | | |
|---|---|---|---|---|---|---|
| • ດ້ານຮ່າງກາຍ<br>• ດ້ານສະຕິປັນຍາ<br>• ດ້ານອາລົມຈິດໃຈ-ສັງຄົມ | | | | | | |

ຜູ້ອຳນວຍການໂຮງຮຽນ ຄູປະຈຳຫ້ອງ

## 7. ໃຈຄວາມ

ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ ອາຍຸ 3 ເດືອນ - 36 ເດືອນ ແມ່ນແນໃສ່ເຮັດໃຫ້ເດັກມີສຸຂະພາບແຂງແຮງ, ວ່ອງໄວ, ມີຄວາມເບີກບານມ່ວນຊື່ນ, ເລີ່ມຮູ້ພົວພັນກັບຜູ້ໃຫ່ຍ, ໃກ້ຊິດກັບໝູ່ເພື່ອນ ມີຄວາມຊື້ນເຄີຍໃນດ້ານອະນາໄມ ແລະ ລະບຽບວິໄນຂັ້ນພື້ນຖານເບື້ອງຕົ້ນ ພ້ອມທັງສົ່ງເສີມພັດທະນາການທັງ 5 ດ້ານໄປພ້ອມໆກັນຄື ດ້ານຮ່າງກາຍ, ດ້ານອາລົມຈິດໃຈ, ດ້ານສັງຄົມ, ດ້ານສະຕິປັນຍາ ແລະ ດ້ານພາສາ.

## ວຽກເພີ້ມ

- ໃຫ້ນັກສຶກສາເຂົ້າຫ້ອງສະໝຸດເພື່ອສຶກສາແຜນລ້ຽງດູ ແລະ ສຶກສາອົບຮົມເດັກ ແລ້ວບົດລາຍງານສົ່ງ
- ສຶກສາລາຍລະອຽດຂອງວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ຫາ 36 ເດືອນ

## ຄຳຖາມ

1. ຈຸດໝາຍຂອງການເບິ່ງແຍງດູແລເດັກ ອາຍຸ 3 ເດືອນ - 36 ເດືອນມີຄືແນວໃດ?
2. ເປົ້າໝາຍການສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 36 ເດືອນ ເພື່ອແນໃສ່ພັດທະນາການດ້ານໃດແດ່? ບອກລະອຽດ
3. ເນື້ອໃນເຝິກແອບເດັກອາຍຸ3 ເດືອນ ຫາ 36 ເດືອນມີຄືແນວໃດແດ່?
4. ຈົ່ງບອກວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 36 ເດືອນ?

# ບົດທີ2

## ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 12 ເດືອນ

**ຈຳນວນ 10 ຊົ່ວໂມງ**

**ຈຸດປະສົງໃຫ້ນັກຮຽນຄູສາມາດ:**

- **ວິເຄາະ ກິດຈະກຳການເຝິກແອບເດັກ 3 ເດືອນ ຫາ 36 ເດືອນໄດ້.**
- **ຜະລິດສື່ປະກອບການສອນ, ແຕ່ງບົດສອນ ແລະ ເຝິກສອນຕົວຈິງໄດ້.**

### 1. ວິເຄາະ ກິດຈະກຳເຝິກແອບເດັກອາຍຸ 3 ເດືອນ ຫາ 12 ເດືອນ, 12 ເດືອນ ຫາ 24 ເດືອນ ແລະ ກິດຈະກຳການເຝິກແອບເດັກ 24 ເດືອນ ຫາ 36 ເດືອນ.

#### 1.1 ກິດຈະກຳການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນ ຫາ 12 ເດືອນ

**ກ. ການຈັດກິດຈະກຳສຳລັບເດັກ**

- ການຈັດກິດຈະກຳສຳລັບເດັກຕ້ອງຄຳນຶງເຖິງຈຸດພິເສດຂອງເດັກແຕ່ລະສຳອາຍຸ,ຈຸດພິເສດຂອ' ງເດັກ ແລະ ຄຳນຶງເຖິງຈຸດໝາຍຂອງແຜນການລ້ຽງດູ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 36 ເດືອນທີ່ໄດ້ວາງອອກ.
- ການຈັດກິດຈະກຳສຳລັບເດັກ ຕ້ອງໃຫ້ສົມດູນກັນລະຫ່ວາງກິດຈະກຳທີ່ຕ້ອງເຄື່ອນໄຫວກັບກິດຈະກຳທີ່ສະຫງົບ, ກິດຈະກຳສຳລັບທຸກຄົນກັບກິດຈະກຳສຳລັບບຸກຄົນກັບກິດຈະກຳສຳລັບກຸ່ມເດັກ ກິດຈະກຳທີ່ເຮັດກັບກິດຈະກຳທີ່ມີລັກສະນະນາມມະທຳ.

**ຂ. ການປະຕິບັດກິດຈະກຳຕໍ່ເດັກ.**

- **ສຳລັບເດັກອາຍຸ 3 ເດືອນຫາ 12 ເດືອນ.**

ເດັກອາຍຸ 3 ເດືອນຫາ 12 ເດືອນ ພວກເຮົາຈະໄດ້ປະຕິບັດການບົວລະບັດ - ເຝິກແອບເດັກໃນສອງກິດຈະກຳໄປພ້ອມກັນໃນເວລາດຽວກັນເຊັ່ນ:

1) **ການປະຕິບັດກິດຈະກຳເພື່ອພັດທະນາທາງດ້ານຮ່າງກາຍ:**

ເຝິກແອບທ່າຫັດກາຍ ພ້ອມກັນນັ້ນກໍ່ໃຫ້ເດັກໄດ້ເບິ່ງສີສັນ, ໄດ້ຟັງສຽງ, ໄດ້ຈັບບາຍເຄື່ອງຫຼິ້ນທັງໄດ້ເວົ້າລົມອໍ ແອ ກັບຄູ ເດັກກໍ່ຈະມີຄວາມດີໃຈແລ້ວກໍ່ເລີ່ມປະຕິບັດກິດຈະກຳການເຝິກແອບເດັກໄດ້ໂລດ ແລະ ສືບຕໍ່ການເຝິກແອບໄປຈົນໄດ້ຕາມລະດັບຄາດໝາຍທີ່ວາງໄວ້, ຖ້າເດັກຫາກມີຄວາມພ້ອມທີ່ຈະກັບຄູ.

2) **ການປະຕິບັດກິດຈະກຳເພື່ອພັດທະນາທາງດ້ານພາສາເວົ້າ ແລະ ອາລົມຈິດຂອງເດັກ:**

- ທຳອິດຄູ ຕ້ອງລູບໄລ້ຕາມຕົນໂຕຂອງເດັກຢ່າງເບົາໆ ທັງຮ້ອງຊື່ຂອງເດັກໃຫ້ແນມມາຫາຄູ.
- ຄູເລີ່ມເວົ້າລົມ ຍິ້ມຫົວຕໍ່ເດັກ ເດັກກໍ່ຈະເວົ້າລົມ ອໍ ແອ ຕອບຄູຢ່າງເພີດເພີນ ແລະ ມີຄວາມອົບອຸ່ນທີ່ສຸດ. ທ້າຍອາຍຸ 12 ເດືອນ ເດັດຈະເລີ່ມເວົ້າບາງຄຳຄື: ປາ, ມາ,ມ່ຳ ມ່ຳ ແລະ ເດັກກໍ່ສາມາດຈຳສຽງແມ່, ພໍ່, ອ້າຍ, ເອື້ອຍ ໃນຄອບຄົວຂອງຕົນເອງໄດ້.

- **ການເຝິກແອບເດັກອາຍຸ 3 ເດືອນ - 12 ເດືອນ**

1) **ເຝິກແອບທາງດ້ານຮ່າງກາຍ**

**ອາຍຸ 3-6 ເດືອນ**

- ຍົກແຂນ ແລະ ພັບແຂນ
- ທ່າໄຂ່ວແຂນຢູ່ໜ້າເອິກ
- ທ່າຄູ້ຂາ ແລະ ຢຽດຂາ
- ທ່າບໍລິຫານຂາ
- ທ່າສະແດງຊ້າຍຂວາ
- ທ່າພິກຂວັ້ມ ແລະ ພິກຫງາຍ
- ໃຊ້ແຂນຍົກເຄິ່ງຕົວ
- ທ່າແອບເລືອ
- ການແອບເດັກນັ່ງ

**ອາຍຸ 6-12 ເດືອນ**

- ແອບເດັກເຕັ້ນຢູ່ເທິງຕັກຄູ
- ທ່າແອ່ນຫຼັງ
- ທ່າຍົກຂາສອງເບື້ອງຂຶ້ນພ້ອມກັນ
- ແອບເດັກຄານ
- ເດັກຄານຫຼີກສິ່ງກີດຂວາງ
- ເດັກຄານຂຶ້ນຜ້າເສື່ອ ຫຼື ຂຶ້ນຂັ້ນໄດຕໍ່າໄດ້
- ແອບເດັກຄານໃຫ້ຄ່ອງແຄ້ວ ແລະ ຂ້າມສິ່ງກີດຂວາງ
- ແອບເດັກປ່ຽນຈາກທ່ານອນເປັນທ່ານັ່ງ
- ແອບຢຽດແຂາ-ພັບແຂນໃຫ້ເດັກ
- ກົ້ມລົງເກັບເຄື່ອງຫຼິ້ນ
- ແອບເດັກຍ່າງ

**2) ກິດຈະກໍາ ການຫຼິ້ນແບບຫຼິ້ນ**

**ອາຍຸ 3-6 ເດືອນ**

- ເບິ່ງເຄື່ອງຫຼິ້ນເໜັງໄປ-ມາ ຕາມທິດ ( ຊ້າຍ-ຂວາ )
- ຢື້ມືຈັບ-ກໍາເຄື່ອງຫຼິ້ນ
- ນອນຂ້ວມຈັບເຄື່ອງຫຼິ້ນ
- ມືໜຶ່ງຈັບເຄື່ອງຫຼິ້ນແລ້ວສັ່ນ
- ສອງມືຈັບເຄື່ອງຫຼິ້ນສັ່ນພ້ອມກັນ

**ອາຍຸ 6-12 ເດືອນ**

- ເດັກນັ່ງເກັບເຄື່ອງຫຼິ້ນອ້ອມຂ້າງທາໜ້າ, ຊ້າຍ, ຂວາ
- ຕົບມື
- ຄານນໍາບານ
- ຟັງ-ຊອກຫາຕາມສຽງດັງ ເພື່ອເອົາເຄື່ອງຫຼິ້ນ

- ປ່ອນເຄື່ອງຫຼິ້ນໃສ່ໃນກັບ ແລ້ວເອົາເຄື່ອງຫຼິ້ນອອກຈາກກັບ
- ກິ້ງບານໄປໃຫ້ຄູ
- ອັດ ແລະ ໄຂຝາກັບ
- ຊັບຊ້ອນທ່ອນໄມ້ 2ອັນຢອງກັນ

**3) ກິດຈະກຳ ສັງເກດແອບເວົ້າ ( ພັດທະນາພາສາ )**

**ອາຍຸ 4-6 ເດືອນ**

- ການອອກສຽງ ເອີ, ອາ ຫຼື ອອກສຽງຄືພະຍັນຊະນະ ມ, ບ
- ການລົມອອກສຽງ ອໍ, ແອ ນຳຄູ ແລະ ຫຼຽວຕາມທີ່ມາຂອງສຽງ
- ການລົມອໍ, ແອ ນຳຄູ ແລະ ຟັງເພງທີ່ຄູຮ້ອງ

**ອາຍຸ 7-12 ເດືອນ**

- ອອກສຽງເປັນ ອື, ອາ, ອໍ, ເອີ..
- ອອກສຽງເປັນຄຳ ປ, ມາ ນຳຄູໄດ້
- ອອກສຽງ ປາປາ, ມາມາ, ມໍ່າໆ ໄດ້
- ເຝິກໃຫ້ເດັກຟັງຄູເລົ່ານິທານກອນ ແລະ ເພງ ເປັນຈັງຫວະ
- ການສື່ງສຽງຮຽນແບບຕ່າງໆທັງມີທັງຄວາມໝາຍ ແລະ ບໍ່ມີຄວາມໝາຍ
- ການໃຊ້ຄຳສັ່ງງ່າຍໆ ເຊັ່ນ: ເອົາໝອນມາໃຫ້ຄູແດ່, ເອົາເຄື່ອງຫຼິ້ນມາໃຫ້ຄູແດ່ ແລະ ອື່ນໆ
- ລາກ່ອນ ຫຼື ບາຍໆ ເຮັດໂບກມືລາ
- ບໍ່ ແກ່ວງຫົວ
- ຊີ້ບອກເຄື່ອງຫຼິ້ນຢູ່ໃນຫ້ອງເຊັ່ນ: ລົດ, ຕຸກະຕາ ແລະ ອື່ນໆ
- ບອກຊື່ສັດທີ່ເດັກເຄີຍເຫັນ ເຊັ່ນ: ຄວາຍ, ເປັດ, ໄກ່...
- ເດັກບອກຊື່ວັດຖຸ, ເຄື່ອງຫຼິ້ນທີ່ມີໃນຫ້ອງຮຽນ

## 1.2 ວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 12 ເດືອນ ຫາ 24 ເດືອນ

### 1.2.1 ວິທີເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 12 ເດືອນ - 24 ເດືອນ

- ເດັກອາຍຸ 12 – 18 ເດືອນໃຫ້ເຝິກແອບເດັກເປັນເທື່ອລະຄົນ 2 – 3 ຄົນ, ໃຊ້ເວລາເຝິກແອບ 3 – 5 ນາທີ.

– ການເຝິກແອບເດັກອາຍຸ 12 – 18 ເດືອນ ຍັງແມ່ນການເວົ້າລົມກັບເດັກ ແລະ ຄ່ອຍໆໃຫ້ເດັກຮຽນເວົ້າບາງຄຳທີ່ງ່າຍຕາມຄູ ຫຼື ເຮັດທ່າທາງແບບງ່າຍໆຕາມຄູ. ສຳລັບການເຝິກແອບນີ້ ຄູຕ້ອງພະຍາຍາມໃຫ້ເດັກໄດ້ເຝິກແອບຢ່າງທົ່ວເຖິງ ແລ້ວຍັງຕ້ອງໄດ້ເອົາໃຈໃສ່ເຝິກເປັນພິເສດໃຫ້ເດັກຜູ້ທີ່ອ່ອນເພຍກວ່າເພື່ອນໃນຫ້ອງ ຫຼື ໃນຈຸ

– ເດັກອາຍຸ 14 – 18 ເດືອນ ເລີ່ມເຝິກໃຫ້ເດັກກຸ້ມຕົນເອງເທື່ອລະກ້າວ ເປັນຕົ້ນ: ຈັບບ່ວງກິນເຂົ້າ, ຈັບຈອກກິນນຳເອງໄດ້, ຮູ້ນັ່ງອ້ອມພາເຂົ້າ, ຮູ້ລ້າງມືກ່ອນ ແລະ ຫຼັງກິນເຂົ້າ,ຮູ້ໃຊ້ຜ້າເຊັດມື, ເວລາກິນບໍ່ໃຫ້ອາຫານເຮ່ຍຊະຊາຍ ທຸກໆບັນຫາທີ່ຄູເຝິກໃຫ້ເດັກປະຕິບັດນັ້ນ ຈະຕ້ອງຄ່ອຍໆໃຫ້ເດັກຮູ້ເຮັດຕາມຄູ

– ເດັກອາຍຸ 19 – 24 ເດືອນ ສືບຕໍ່ເຝິກໃຫ້ເດັກຈື່ບ່ອນນັ່ງ,ເຄື່ອງໃຊ້ຂອງຕົນເອງ ແລະ ເຮັດຕາມຄຳແນະນຳຂອງຄູ.

### 1.2.2 ກິດຈະກຳການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 12 ເດືອນ ຫາ 24 ເດືອນ

**1) ກິດຈະກຳເຝິກແອບເພື່ອພັດທະນາທາງດ້ານຮ່າງກາຍ**

ຈັດກິດຈະກຳໃຫ້ເດັກໄດ້ເຄື່ອນໄຫວທາງດ້ານຮ່າງກາຍກັບກິລາ ແລະ ແບບຫຼິ້ນປະເພດຕ່າງໆ.

**2) ກິດຈະກຳເພື່ອພັດທະນາທາງດ້ານພາສາ ອາລົມ - ສັງຄົມ**

ຈັດກິດຈະກຳເຝິກການຟັງ ການເລົ່ານິທານ, ຄຳຄ່ອງ, ຮ້ອງເພງທີ່ສັ້ນ, ແອບເວົ້າຄຳສັບ, ປະໂຫຍກສັ້ນທີ່ມີຄວາມໝາຍເຂົ້າໃຈງ່າຍເຊັ່ນ: ແມ່, ພໍ່, ອ້າຍ, ເອື້ອຍ, ປ້າ, ແມ່ໄປ... ສົມທົບກັບການເຄື່ອນໄຫວກັບແບບຫຼິ້ນປະເພດຕ່າງໆຮ່ວມກັບໝູ່ຄູ່ລຸ້ນດຽວກັນ.

3) **ກິດຈະກຳເພື່ອພັດທະນາທາງດ້ານສະຕິປັນຍາ**

ການຈັດກິດຈະກຳຕ້ອງໃຫ້ເດັກມີໂອກາດໄດ້ເຂົ້າຮ່ວມສົນທະນາ, ແອບເວົ້າຕາມຄູ ຫຼື ແອບເລົ່າຄືນສິ່ງທີ່ເດັກເຄີຍໄດ້ເຫັນ, ເວົ້າຊື່ຂອງສັດທີ່ເດັກຮູ້, ຊີ້ຖືກ ແລະ ເວົ້າຊື່ອະໄວຍະວະໃນຮ່າງກາຍ ( ຫູ, ຕາ, ດັງ, ປາກ, ຫົວ, ຕີນ, ມື ) ເດັກຮູ້ສີແດງ, ເຫຼືອງ,ຟ້າ. ເດັກເລີ່ມເຂົ້າໃຈຄຳສັ່ງ, ຮູ້ປະຕິບັດຕາມຄຳສັ່ງ, ເຂົ້າໃຈບາງຄຳສັບເຊັ່ນ: ເກັບເຂົ້າ, ເອົາອອກ, ເອົາມາໃຫ້, ເອົາໄປມ້ຽນ.

### 1.2.3 ເນື້ອໃນເຝິກແອບແລະສຶກສາອົບຮົມເດັກອາຍຸ 12 ເດືອນ ຫາ 24 ເດືອນ

- **ການເຝິກແອບເດັກອາຍຸ 12 ເດືອນ - 24 ເດືອນ**

**1) ການເຝິກແອບຮ່າງກາຍ**

- ແອບເດັກຮຽນຍ່າງ
- ແອບເດັກຄານລອດຮາວ
- ແອບເດັກຍ່າງໄປເອົາເຄື່ອງຫຼິ້ນ
- ແອບເດັກໂຍນບານເຂົ້າໃນກະຕ່າ
- ຍ່າງຕາມເສັ້ນແຄບ
- ຍ່າງເຂົ້າບ້ອງ
- ເຕະບານ
- ແອບເດັກແລ່ນເອົາເຄື່ອງຫຼິ້ນ ແລ້ວຍ່າງມາຄືນບ່ອນເກົ່າ

**2) ການຫຼິ້ນແບບຫຼິ້ນ**

- ອັດໄຂຝາກັບກັບ
- ສັບຊ້ອນທ່ອນໄມ້ 2 ອັນຢອງກັນ
- ຈັບເຄື່ອງຫຼິ້ນມືເບື້ອງນີ້ແລ້ວປ່ຽນໄປມືເບື້ອງນັ້ນ
- ເຝິກແອບຈັບບ່ວງຕັກກິນ
- ເປີດປຶ້ມ
- ກິ້ງບານ
- ໂຍນບານ-ຮັບບານ
- ເລືອກສີແດງ ແລະ ອື່ນໆ

**3) ຄຳຄ່ອງ-ການເລົ່າເລື່ອງ**

**4) ເພງ**

5) ສັງກັດ ແລະ ແອບເວົ້າ

- **ສິ່ງທີ່ຄວນເອົາໃຈໃສ່:**
  - ການເຝິກແອບ ຫຼື ສຶກສາເດັກອາຍຸ 12 ເດືອນ ຫາ 24 ເດືອນຕົ້ນຕໍຍັງແມ່ນຄູເປັນຜູ້
  - ເຝິກແອບໃຫ້ເດັກ ຈົນຮອດທ້າຍອາຍຸ 24 ເດືອນ ເດັກຈິ່ງສາມາດເຮັດຕາມຄູ, ເວົ້າຕາມຄູໄດ້ ຫຼື ສາມາດສົນທະນາດ້ວຍຄຳເວົ້າງ່າຍໆກັບຄູ.

## 1.3 ວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 24 ເດືອນ ຫາ 36 ເດືອນ

### 1.3.1 ເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 24 ເດືອນ - 36 ເດືອນ

- ເຝິກແອບ ແລະ ສຶກສາອົບຮົມເດັກເທື່ອ 10 – 15 ຄົນ ໃຊ້ເວລາເຝິກແອບ 7-10 ນາທີ.
- ເຝິກແອບ ແລະ ສຶກສາອົບຮົມເດັກ ເພື່ອໃຫ້ເດັກໄດ້ມີການປະຕິບັດດ້ວຍຕົນເອງຫຼາຍຂຶ້ນ ເຊັ່ນ: ລ້າງໜ້າ, ຖູແຂ້ວ, ນຸ່ງເຄື່ອງ, ແກ້ເຄື່ອງ, ຫວີຜົມ, ມ້ຽນເຄື່ອງນອນ ແລະ ເຄື່ອງຫຼິ້ນພາຍຫຼັງໃຊ້ແລ້ວ. ຕ້ອງໃຫ້ເດັກເຮັດຊ້ຳຫຼາຍເທື່ອ ເພາະເປັນວິທີການຮຽນຮູ້ຂອງເດັກ.
- ເຝິກແອບໃຫ້ເດັກຮູ້ຫຼິ້ນແບບຫຼິ້ນຮ່ວມກັນຫຼາຍຄົນ, ຫຼິ້ນຢ່າງມ່ວນຊື່ນ ແລະ ຄູຕ້ອງນຳໃຊ້ແບບຫຼິ້ນນີ້ເປັນພື້ນຖານ ເພື່ອໃຫ້ເດັກໄດ້ມີການຄົ້ນຄິດ.
- ການຈັດປະສົບການໃຫ້ເດັກຕ້ອງມີວັດຖຸຈິງ, ໃຫ້ເດັກໄດ້ລົງມືເຮັດຕົວຈິງດ້ວຍຕົວຂອງເດັກເອງ.
- ເຝິກໃຫ້ເດັກໄດ້ຮຽນຮູ້ຈາກການຟັງ, ການຫຼິ້ນຮ່ວມກັບໝູ່ຄູ່ຈະຕ້ອງພະຍາຍາມຊຸກຍູ້ໃຫ້ເດັກໄດ້ມີສ່ວນຮ່ວມໃນກິດຈະກຳຕ່າງໆ ຕາມຄວາມສາມາດຂອງເດັກໃຫ້ຫຼາຍຂຶ້ນ.
- ການສຶກສາເຝິກແອບເດັກໃນໄວນີ້ ຄູຕ້ອງຮັກເດັກທຸກຄົນຢ່າງເທົ່າທຽມກັນ, ຄູຕ້ອງເປັນແບບຢ່າງທີ່ດີໃຫ້ແກ່ເດັກໃນທຸກເມື່ອ ທຸກເວລາ, ບໍ່ໄດ້ໃຊ້ທ່າທີເຄັ່ງຂຶມຕໍ່ເດັກ, ບໍ່ເຮັດໃຫ້ເດັກຢ້ານ, ບໍ່ສ້າງໃຫ້ເດັກຢາກຮ້າຍ, ຮ້ອງໄຫ້, ບໍ່ລົງໂທດເດັກ ມີແຕ່ເວົ້າຄວາມດີໃຫ້ເດັກຄ່ອຍໆເຂົ້າໃຈເຫດຜົນເທື່ອລະໜ້ອຍ.
- ເລີ່ມເຝິກໃຫ້ເດັກອາຍຸ 24 – 36 ເດືອນ ໃນດ້ານສິລະປະກຳ, ທາສີຮູບ, ແຕ້ມ, ປັ້ນ, ຕິດ, ເປັນຮູບຕ່າງໆ ແບບງ່າຍດາຍ ຕາມຈິນຕະນາການຂອງເດັກເປັນສ່ວນຫຼາຍ.

### 1.3.2 ເນື້ອໃນເຝິກແອບແລະສຶກສາອົບຮົມເດັກອາຍຸ 24 ເດືອນ ຫາ 36 ເດືອນ

- **ການເຝິກແອບເດັກອາຍຸ 24 ເດືອນ - 36 ເດືອນ**

1) ການເຝິກຮ່າງກາຍ

- ກິດຈະກ□າສ້າງສັນ
- ເພງ-ຟ້ອນ
- ຄ□າຄ່ອງ-ການເລົ່າເລື່ອງ
- ຄະນິດສາດ
- ແບບຫຼິ້ນ
- ການສັງກັດ ແລະ ສົນທະນາ

### 1.3.3 ກິດຈະກຳການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 24 ເດືອນ ຫາ 36 ເດືອນ

- **ກິດຈະກຳເຝິກແອບເພື່ອພັດທະນາທາງດ້ານຮ່າງກາຍ**

ຈັດກິດຈະກຳໃຫ້ເດັກໄດ້ຫຼິ້ນ, ໄດ້ເຝິກແອບທ່າກິລາ, ກາຍກາຍຍະກຳສຳລັບເດັກ, ແບບຫຼິ້ນປະເພດຕ່າງໆ ແລະ ກິດຈະກຳເສີມຫຼັກສູດແບບໄດ້ເຄື່ອນໄຫວ ເພື່ອພັດທະນາທາງດ້ານຮ່າງກາຍຂອງເດັກ.

- **ກິດຈະກຳເພື່ອພັດທະນາທາງດ້ານອາລົມ - ຈິດໃຈ**

ຈັດກິດຈະກຳໃຫ້ເດັກໄດ້ເຄື່ອນໄຫວເຝິກແອບຮ່ຳຮຽນຢ່າງເບີກບານມ່ວນຊື່ນເຊັ່ນ: ຫຼິ້ນແບບຫຼິ້ນຮ້ອງເພງ, ເລົ່າຄຳຄ່ອງ ຫຼື ກາບກອນ, ສົນທະນາລົມເລື່ອງກັບເພື່ອນ, ຄູບໍ່ຄວນຕິຕຽນເດັກໂດຍທ່າທີ ແລະ ຄຳເວົ້າທີ່ເຄັ່ງຂຶມ ເພາະຈະເຮັດໃຫ້ເດັກເສຍໃຈບໍ່ມ່ວນຊື່ນ.

- **ກິດຈະກຳເພື່ອພັດທະນາທາງດ້ານສັງຄົມ**

ຈັດກິດຈະກຳໃຫ້ເດັກໄດ້ເຄື່ອນໄຫວຮ່ວມກັບເພື່ອນຝູງຂອງເດັກເອງ, ພາເດັກອອກທັດສະນະສຶກສານອກສະຖານທີ່, ຈັດໃຫ້ເດັກໄດ້ພົບປະສົນທະນາລົມເລື່ອງຕ່າງໆ ລະຫວ່າງເດັກຕໍ່ເດັກ ເພື່ອໃຫ້ເດັກໄດ້ເຂົ້າໃຈກັນດີຂຶ້ນ ແລ້ວຍັງຊ່ວຍພັດທະນາທາງດ້ານສະຕິປັນຍາ ແລະ ພາສາອີກດ້ວຍ.

- **ກິດຈະກຳເພື່ອພັດທະນາທາງດ້ານສະຕິປັນຍາ ແລະ ພາສາ**

ຈັດໃຫ້ເດັກໄດ້ເຂົ້າຮ່ວມກິດຈະກຳທີ່ມີການຄົ້ນຄິດ, ສົນທະນາ, ຕອບຄຳຖາມ, ອະທິບາຍດ້ວຍຄຳເວົ້າປະໂຫຍກສັ້ນໆ ທີ່ສະແດງເຖິງຄວາມຕ້ອງການ, ຈຸດມຸ່ງໝາຍຂອງຕົນເອງໄດ້, ໃຊ້ພາສາເພື່ອອະທິບາຍສິ່ງຕ່າງໆໄດ້ຫຼາຍຂຶ້ນເຊັ່ນ ການຕັ້ງຄຳຖາມ: ແມ່ນຫຍັງ? ເຮັດຫຍັງ? ຢູ່ໃສ? ໄປໃສ? ນັບໄດ້ວ່າ ເດັກສໍ່າອາຍຸນີ້ມີການປ່ຽນແປງທາງດ້ານທາງດ້ານພາສາຢ່າງຫຼວງຫຼາຍ.

ລວມຄວາມວ່າ ເດັກສໍ່າອາຍຸ 24 ເດືອນຫາ 36 ເດືອນ ເປັນສໍ່າອາຍຸທີ່ກຳລັງຈະສິ້ນສຸດລັກສະນະຂອງເດັກກ້າວສູ່ສໍ່າອາຍຸທີ່ມີການພັດທະນາດ້ານການຄິດ, ການໃຊ້ພາສາຢ່າງກ້ວາງຂວາງຂຶ້ນ, ເດັກມີຄວາມຢາກຮູ້ຢາກເຫັນ ແລະ ຕ້ອງການຮຽນຮູ້ກ່ຽວກັບສິ່ງຕ່າງໆທີ່ຢູ່ອ້ອມຕົວຂອງເດັກເອງ. ດັ່ງນັ້ນ ການຈັດກິດຈະກຳໃຫ້ເດັກໃນສໍ່າອາຍຸນີ້ຈຶ່ງມີທັງການເຄື່ອນໄຫວເຝິກແອບ ,ສຶກສາອົບຮົມ ແລະ ຮຽນ.

- **ສິ່ງທີ່ຄວນເອົາໃຈໃສ່**

ການສຶກສາແອບ, ຮ່ຳຮຽນຂອງເດັກໃນສໍ່າອາຍຸ3 ເດືອນຫາ 36 ເດືອນ ຕ້ອງມີການປະເມີນຜົນພັດທະນາການຂອງເດັກ ແລະ ມີການຕິດຕາມປະເມີນຜົນຢູ່ຕະຫຼອດເວລາ.

## 2. ການຜະລິດສື່ປະກອບການສອນສຳລັບເດັກ 3 ເດືອນ ຫາ 12 ເດືອນ.

- ຫຼັກການຜະລິດອຸປະກອນ: ຕ້ອງມີຈຸດປະສົງຢ່າງຈະແຈ້ງ ການອອກແບບອຸປະກອນຕ້ອງແຕ່ງ່າຍຫາຍາກ ອຸປະກອນແຕ່ລະຢ່າງຕ້ອງມີການພົວພັນກັນຢ່າງຕໍ່ເນື່ອງ ອຸປະກອນອອກແບບເປັນລຳລັບ, ອຸປະກອນຕ້ອງຮັບປະກັນສ້ອມແປງເອງໄດ້.
- ການຜະລິດສື່ປະກອບການສອນແມ່ນຜະລິດໄປຕາມແຜນຈັດປະສົບການ, ໜ່ວຍການສອນ, ຕາມບົດສອນທີ່ຈະສອນໃນອາທິດ ຫຼື ມື້ທີ່ຈະສອນໃຫ້ເໝາະສົມກັບສໍ່າອາຍຸຂອງເດັກ.
- ອຸປະກອນ ຫຼື ສື່ການສອນຕ້ອງຮັບປະກັນຄວາມປອດໄພຕໍ່ກັບເດັກ ແລະ ເໝາະສົມມີສີສັນສວຍງາມ.

## 3. ບົດສອນແບບຢ່າງແຕ່ລະກິດຈະກຳ ແລະ ເຝິກສອນຕົວຈິງເດັກອາຍຸ 3 ເດືອນ 12 ເດືອນ

### ບົດສອນ

**ໜ່ວຍ: ໜ່ວຍສັດລ້ຽງ ລ້ຽງເດັກ ອາຍຸ 3 – 12 ເດືອນ ເວລາ 3-5 ນາທີ**

**/. ຈຸດປະສົງລວມ**:

1. ສົ່ງເສີມການພັດທະນາກ້າມຊີ້ນໃຫ່ຍ
2. ຝຶກປະສາດສຳພັນລະຫວ່າງມື ແລະ ຕາ

3. ຮູ້ຈັກຊື່ຂອງສັດລ້ຽງບາງຊະນິດເຊັ່ນ: ໄກ່,ເປັດ,ແມວ,ໝາ.
4. ຮູ້ຄຸນປະໂຫຍດຂອງສັດລ້ຽງ
5. ຝຶກມາລະຍາດໃນການຟັງ-ການເວົ້າ.
6. ສົ່ງເສີມໃຫ້ເດັກມີຄວາມກ້າຫານ,ກ້າສະແດງອອກ.
7. ເຂົ້າໃຈ ແລະ ຮູ້ຄວາມໝາຍບາງຄຳສັບທີ່ງ່າຍ 1 -2 ຄຳໄດ້.

## ແຍກພັດທະນາການ 5 ດ້ານ

| | |
|---|---|
| **ດ້ານຮ່າງກາຍ**<br>1. ສົ່ງເສີມການພັດທະນາກ້າມຊີ້ນໃຫ່ຍ<br>2. ຝຶກປະສາດສຳພັນລະຫວ່າງມື ແລະ ຕາ | **ດ້ານອາລົມ-ຈິດໃຈ**<br>5. ຝຶກມາລະຍາດໃນການຟັງ-ການເວົ້າ. |
| ດ້ານສັງຄົມ<br>6. ຝຶກມາລະຍາດໃນການຟັງ-ການເວົ້າ.<br>7. ສົ່ງເສີມໃຫ້ເດັກມີຄວາມກ້າຫານ,ກ້າສະແດງອອກ. | ດ້ານສະຕິປັນຍາ<br>7. ເຂົ້າໃຈແລະຮູ້ຄວາມໝາຍບາງຄຳສັບທີ່ງ່າຍ 1 -2 ຄຳໄດ້.<br>3. ຮູ້ຈັກຊື່ຂອງສັດລ້ຽງບາງຊະນິດເຊັ່ນ: ໄກ່,ເປັດ,ແມວ,ໝາ.<br>4. ຮູ້ຄຸນປະໂຫຍດຂອງສັດລ້ຽງ |
| ດ້ານພາສາ<br>3. ຮູ້ຈັກຊື່ຂອງສັດລ້ຽງບາງຊະນິດເຊັ່ນ: ໄກ່,ເປັດ,ແມວ,ໝາ.<br>7. ເວົ້າ ແລະ ຮູ້ຄວາມໝາຍບາງຄຳສັບທີ່ງ່າຍ 1 -2 ຄຳໄດ້. | |

## ບົດສອນ

## ກິດຈະກຳເຝິກແອບຮ່າງກາຍ

ໜ່ວຍ: **ສັດລ້ຽງ ເຝິກແອບຮ່າງກາຍ ລ້ຽງເດັກ ອາຍຸ 3 – 12 ເດືອນ ເວລາ 5-7 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| –ສົ່ງເສີມການພັດທະນາກ້າມຊີ້ນໃຫຍ່. | ການໄຂ່ວແຂນຢູ່ໜ້າເອິກ | ☞ **ຂັ້ນນຳ**<br>- ຄູໂອ້ລົມ,ຢອກສະແດງຄວາມຮັກກັບເດັກດ້ວຍການອຸ້ມ,ຫອມແກ້ມເດັດເບົາໆ<br>☞ **ຂັ້ນດຳເນີນການສອນ**<br>- ຄູເອົາເດັກນອນງ່າຍຢູ່ເທິງເບາະຜ້າເສື່ອ,ມືຂອງຄູທັງສອງເບື້ອງຈັບມືຂອງດັກ.<br>– ຄູຄ່ອຍໆວາແຂນເດັກອອກແລ້ວພັບແຂນຂອງເດັກເຂົ້າມາໄຂ່ວກັນໃສ່ໜ້າເອິກ,ຄູຈັບມືເດັກພັບເຂົ້າໜ້າເອິກແລ້ວວາແຂນເດັກອອກ 4 – 5 | - ເບາະຫຼືແພປູ | - ສັງເກດການມີສ່ວນຮ່ວມຂອງເດັກ |

| | | | | |
|---|---|---|---|---|
| | | ເທື່ອສະຫຼັບກັນໄປມາ.<br>– ໃນເວລາປະຕິບັດຄູກໍ່ຕ້ອງໂອ້ລົມກັບເດັກໄປພ້ອມເຊັ່ນ:ຄູຈະນັບ1 ແລ້ວວາແຂນອອກ,ນັບ2 ພັບແຂນເດັກເຂົ້າເອິກ,ເພື່ອເຮັດໃຫ້ເດັກມີອາລົມ ແລະ ມີສວນຮ່ວມຫຼາຍຂຶ້ນ.<br>☞ **ຂັ້ນສະຫຼູບ**<br>- ຄູຮ້ອງເປັດນ້ອຍໃຫ້ເດັກຟັງພ້ອມທັງກຳແຂນຂອງເດັກເບົາໆແຕ່ກົກແຂນຈົນຮອດນິ້ວມື 1–2 ເທື່ອ ຄູອຸ້ມເດັກເຂົ້າຫາເອິກແລ້ວລູບຫຼັງເບົາໆ<br>- ໃຫ້ເດັກພັກຜ່ອນ | | |

## ບົດສອນ

### ກິດຈະກຳ ວົງມົນ

**ໜ່ວຍ: ສັດລ້ຽງ ອາຍຸ 3 -12 ເດືອນ ເວລາ 5 – 7 ນາທີ**

**ຫວົຂໍ້: ສັງເກດແອບເວົ້າ ຄຸນປະໂຫຍດຂອງສັດ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| -ໃຫ້ເດັກຮູ້ຄຸນໂຫຍດຂອງສັດລ້ຽງ<br><br>ຝຶກໃຫ້ເດັມີສາມະທິໃນການຟັງຄຳຄ່ອງ | - ເພງ ເປັດນ້ອຍ<br><br>-ໄວ້ເປັນອາຫານເຊັ່ນ:ຊີ້ນ ໄຂ່ເຮັດຮ່າງກາຍແຂງແຮງ<br>- ຄຳຄ່ອງ ໄຂ່ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນນັ່ງເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>☺ **ຂັ້ນດຳເນີນການສອນ.**<br>- ຄູຍົກຮູບພາບໄກ່,ເປັດ,ແມວ ໃຫ້ເດັກເບິ່ງແລ້ວບອກຄູນປະໂຫຍດຂອງສັດລ້ຽງເຊັ່ນ: ຊີ້ນ, ໄຂ່ ເຮັດໃຫ້ຮ່າງກາຍແຂງແຮງ.<br>- ຄູເລົ່າຄຳຄ່ອງໃຫ້ເດັກຟັງ 1 – 3 ເທື່ອ.<br>- ຄູເລົ່າປະກອບທ່າທາງໃຫ້ເດັກ 1-2ເທື່ອໃຫ້ເດັກສັງເກດ..<br>- ຄູຍ້ອງຍໍຊົມເຊີຍ<br>☞ **ຂັ້ນສະຫຼູບ**<br>- ຄູເອົາຮູບພາບໄກ່,ເປັດ,ແມວໃຫ້ເດັກເບິ່ງແລ້ວຄູເວົ້າຊື່ຕາມຮູບພາບໃຫ້ເດັກຟັງ<br>- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກເບິ່ງ | - ບົດເພງ ຮູບອາຫານ. ການຄ້າຂາຍສັດລ້ຽງ<br>- ຮູບພາບ ໄກ່,ເປັດ,ໄຂ່ ແມວ.<br>-ບົດຄຳຄ່ອງ | –ສັງເກດ ຄວາມສົນໃຈຂອງເດັກ. |

| | | | | |
|---|---|---|---|---|
| | | - ຄູອຸ້ມເດັກລູບຫົວເດັກແຕ່ລະຄົນ<br>- ໃຫ້ເດັກພັກຜ່ອນ. | | |

## 4. ບົດສອນແບບຢ່າງແຕ່ລະກິດຈະກຳແລະ ເຝິກສອນຕົວຈິງເດັກອາຍຸ 12 ເດືອນ 24 ເດືອນ

## ບົດສອນ

**ໜ່ວຍ: ໝາກໄມ້ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7- 10 ນາທີ**

**/. ຈຸດປະສົງລວມ**:

1. ສົ່ງເສີມການພັດທະນາກ້າມຊີ້ນ ແລະປະສາດສຳພັນຂອງເດັກ
2. ບອກຊື່ໝາກໄມ້ທີ່ກິນໄດ້ບາງຊະນິດ
3. ຮູ້ຄຸນປະໂຫຍດຂອງໝາກໄມ້
4. ເຂົ້າໃຈ ແລະ ເວົ້າຄຳສັບໄດ້ບາງຄຳສັບ.
5. ສົ່ງເສີມໃຫ້ເດັກມີຄວາມຄິດສ້າງສັນ
6. ໃຫ້ເດັກມີຄວາມກ້າສະແດງອອກ

## ແຍກພັດທະນາການ 5 ດ້ານ

| | |
|---|---|
| **ດ້ານຮ່າງກາຍ**<br>1. ສົ່ງເສີມການພັດທະນາກ້າມຊີ້ນ ແລະປະສາດສຳພັນຂອງເດັກ | **ດ້ານອາລົມ-ຈິດໃຈ**<br>1. ສົ່ງເສີມໃຫ້ເດັກມີຄວາມຄິດສ້າງສັນ<br>2 ໃຫ້ເດັກມີຄວາມກ້າສະແດງອອກ |
| **ດ້ານສັງຄົມ**<br>1 ໃຫ້ເດັກມີຄວາມກ້າສະແດງອອກ | **ດ້ານສະຕິປັນຍາ**<br>1. ເຂົ້າໃຈ ແລະ ເວົ້າຄຳສັບໄດ້ບາງຄຳສັບ1 -2ຄຳໄດ້.<br>2. ຮູ້ຈັກຊື່ໝາກໄມ້ທີ່ກິນໄດ້ບາງຊະນິດ<br>3. ຮູ້ຄຸນປະໂຫຍດຂອງໝາກໄມ້ |
| ດ້ານພາສາ<br>1. ເຂົ້າໃຈ ແລະ ເວົ້າຄຳສັບໄດ້ບາງຄຳສັບ1 -2ຄຳໄດ້.<br>2. ຮູ້ຈັກຊື່ໝາກໄມ້ທີ່ກິນໄດ້ບາງຊະນິດ<br>3. ຮູ້ຄຸນປະໂຫຍດຂອງໝາກໄມ້ | |

## ບົດສອນ

## ການເຝິກແອບຮ່າງກາຍ

**ໜ່ວຍ: ໝາກໄມ້ ເຝິກແອບຮ່າງກາຍ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7 - 10 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| - ເຝິກແອບເດັກເຄື່ອນໄຫວຮ່າງກາຍຮຽນແບບນຳຄູໄດ້ | - ເພງ ກຳມື-ແບມື<br><br>- ແອບເດັກໂບກມືໄປມາເປັນຈັງຫວະ<br><br>- ເພງ ກຳມື–ແບມື | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນຢືນເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>-ຄູພາເດັກ ຕົບມື,ແກ່ວງແຂນ,ຍ່າງເປັນວົງມົນ.<br>☺ **ຂັ້ນດຳເນີນການສອນ.**<br>- ຄູໃຫ້ເດັກຢືນເປັນວົງມົນ,ຄູຢືນຢູ່ກາງວົງ<br>ເພື່ອນຳພາເດັກເຄື່ອນໄຫວ.<br>– ຄູສາທິດໃຫ້ເດັກເບິ່ງກ່ອນ 1 – 2 ຄັ້ງ<br>– ຄູໃຫ້ເດັກເຮັດຕາມ 1–2 ຄັ້ງ<br>– ຄູພາເດັກຮ້ອງເພງ<br>☞ **ຂັ້ນສະຫຼຸບ**<br>- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກເບິ່ງ<br>- ຄູໃຫ້ເດັກເລົ່າຄຳຄ່ອງປະກອບທ່າທາງນຳຄູ<br>- ໃຫ້ເດັກພັກຜ່ອນ | - ບົດເພງ<br><br>- ຕົວເດັກ | - ສັງເກດຄວາມສົນໃຈຂອງເດັກ. |

## ບົດສອນ

## ກິດຈະກຳການຫຼິ້ນແບບຫຼິ້ນ

**ໜ່ວຍ: ໝາກໄມ້ ແບບຫຼິ້ນ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7 - 10 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| - ຝຶກປະສາດສຳຜັດລະຫວ່າງມື ແລະ ສາຍຕາ | - ເພງ ໝາກກ້ຽງນ້ອຍ<br>-ແອບເດັກ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນນັ່ງເປັນຮູບເຄິ່ງວົງມົນ<br>- ຄູພາເດັກຮ້ອງເພງ<br>☺ **ຂັ້ນດຳເນີນການສອນ.**<br>- ຄູຈັດເດັກຢືນເປັນວົງມົນ,ຄູເອົາກະຕ່າໄວ້ທາງກາງ.<br>– ຄູສາທິດໂຍນບານໃຫ້ເດັກເບິ່ງ 1 – 2 ເທື່ອ | - ບົດເພງ<br><br>- ໝາບານ | ສັງເກດການໂຍນບານຂອງ |

| | | | | |
|---|---|---|---|---|
| - ໃຫ້ເດັກສາມາດໄປເຖິງບ່ອນທີ່ກຳນົດໄດ້. | ໂຍນໝາກບານເຂົ້າກະຕ່າ<br><br>- ຄຳຄ່ອງໝາກກ້ຽງ | - ຄູເອົາບານໃຫ້ເດັກເທື່ອລະຄົນໂຍນບານເຂົ້າກະຕ່າຜູ້ລະ 1 - 2 ຄັ້ງ<br>- ຍ້ອງຍໍຊົມເຊີຍ<br>- ຄູເລົ່າປະກອບທ່າທາງ<br>- ຄູຍ້ອງຍໍຊົມເຊີຍ<br>☞ **ຂັ້ນສະຫຼຸບ**<br>- ຄູເອົາໝາກບານໃຫ້ເດັກໂຍນໃສ່ກະຕ່າຄືນ<br>- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກເບິ່ງ<br>- ໃຫ້ເດັກພັກຜ່ອນ. | ກະຕ່າ<br>- ບົດຄຳຄ່ອງ | ເດັກ. |

## ບົດສອນ

## ກິດຈະກຳວົງມົນ

**ໜ່ວຍ: ໝາກໄມ້ ຮ້ອງ ເພງ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7 - 10 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| - ບອກຊື່ໝາກໄມ້ທີ່ກິນໄດ້ບາງຊະນິດ<br><br>ສາມາດຮ້ອງເພງປະກອບທ່າທາງໄດ້ | - ເພງ ໝາກກ້ຽງນ້ອຍ<br><br>-ໝາກກ້ຽງ, ໝາກກວ້ຍ, ແອັບເປີ້ນ.<br>- ບົດເພງກ້ວຍ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນນັ່ງເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>☺ **ຂັ້ນດຳເນີນການສອນ.**<br>– ຄູເອົາໝາກໄມ້ຕົວຈິງມາໃຫ້ເດັກສັງເກດພ້ອມບອກຊື່ໝາກໄມ້.<br>– ຄູຍ້ອງຍໍຊົມເຊີຍ ( ບອກຊື່ໝາກໄມ້ໃຫ້ເດັກຮູ້ )<br>- ຄູສະເໜີເພງທີ່ຈະພາເດັກຮ້ອງ ( ເພງ ກ້ວຍ)<br>- ຄູຮ້ອງເພງໃຫ້ເດັກຟັງກ່ອນ1 – 2 ຄັ້ງ<br>– ຄູຮ້ອງເພງປະກອບທ່າທາໃຫ້ເດັກຟັງກ່ອນ 1 – 2 ຄັ້ງ<br>– ໃຫ້ເດັກຮ້ອງເພງຕາມຄູ 1 – 2 ຄັ້ງ<br>- ຍ້ອງຍໍຊົມເຊີຍ<br>- ຄູພາເດັກນັບເລກປາກເປົ່າ 1 - 7<br>- ຄູຍ້ອງຍໍຊົມເຊີຍ | - ບົດເພງ<br><br>- ໝາກໄມ້ຈິງ<br><br>-ບົດເພງ | –ສັງເກດຄວາມສົນໃຈຂອງເດັກ<br>–ສັງເກດການຮ້ອງເພຂອງເດັກ. |

| | | | | |
|---|---|---|---|---|
| | | ☞ **ຂັ້ນສະຫຼຸບ**<br>- ຄູເອົາໝາກໄມ້ ມາໃຫ້ເດກສັງເກດພ້ອມ ບອກຊື່ໝາກໄມ້.<br>- ຄູພາເດັກຮ້ອງເພງປະກອບທ່າທາງ<br>- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກ ເບິ່ງ<br>- ໃຫ້ເດັກພັກຜ່ອນ. | | |

## ບົດສອນ

## ກິດຈະກຳວົງມົນ

**ໜ່ວຍ: ໝາກໄມ້ ຄຳຄ່ອງ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7 - 10 ນາທີ**

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| –ໃຫ້ເດັກບອກຄຸນປະໂຫຍດຂອງໝາກໄມ້ໄດ້<br><br>-ໃຫ້ເດັກສາມາດຟັງແລະເວົ້າຄຳຄ່ອງໄດ້ | - ເພງ ໝາກກ້ຽງນ້ອຍ ໝາກກ້ວຍ ,ກ້ຽງມີວິຕາມິນຊີສ່ວນໃຫ້ຮ່າງກາຍແຂງແຮງ, ໝາກແອັບເປີ້ນມີວິຕາມິນເອ ແລະ ຊີ.ຊ່ວຍໃຫ້ນອນຫຼັບດີ<br>- ຄຳຄ່ອງ ໝາກກ້ວຍສຸກ. | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນນັ່ງເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>☺ **ຂັ້ນດຳເນີນການສອນ.**<br>- ຄູເອົາໝາກກ້ວຍ,ກ້ຽງ,ແອັບເປີ້ນໃຫ້ເດັກເບິ່ງພ້ອມບອກຄຸນປະໂຫຍດຄື:ໝາກກ້ວຍ,ກ້ຽງມີວິຕາມິນຊີສ່ວນໃຫ້ຮ່າງກາຍແຂງແຮງ,ໝາກແອັບເປີ້ນມີວິຕາມິນເອ ແລະ ຊີ.ຊ່ວຍໃຫ້ນອນຫຼັບດີ<br>- ຄູຍ້ອງຍໍຊົມເຊີຍ<br>- ຄູສະເໜີຄຳຄ່ອງພ້ອມເລົ່າຄຳຄ່ອງໃຫ້ເດັກຟັງ 1 - 3 ຄັ້ງ<br>- ຄູເລົ່າຄຳຄ່ອງປະກອບທ່າທາງໃຫ້ເດັກເບິ່ງ<br>-ໃຫ້ເດັກເລົ່າຄຳຄ່ອງປະກອບທ່າທາງຕາມຄູ 1-2 ຄັ້ງ<br>-ໃຫ້ເດັກເລົ່າປະກອບທ່າທາງຕາມຄູ<br>- ຍ້ອງຍໍຊົມເຊີຍ<br>☞ **ຂັ້ນສະຫຼຸບ**<br>- ຄູເອົາໝາກກ້ວຍ,ກ້ຽງ,ແອັບເປີ້ນໃຫ້ເດັກເບິ່ງບອກຄຸນປະໂຫຍດຄື:ໝາກກ້ວຍ ,ກ້ຽງມີວິຕາມິນຊີສ່ວນໃຫ້ຮ່າງກາຍແຂງແຮງ,ໝາກແອັບເປີ້ນມີວິຕາມິນເອ ແລະ ຊີ.ຊ່ວຍໃຫ້ນອນຫຼັບດີ<br>- ຄູພາເດັກເລົ່າຄຳຄ່ອງຄືນ 1 ຄັ້ງ<br>– ສຶກສາອົບຮົມ: ເວລາກິນໝາກໄມ້ຕ້ອງ | - ບົດເພງ<br>- ໝາກກວ້ຍ,ໝາກກ້ຽງ, ໝາກແອັບເປີ້ນ.<br><br>- ບົດຄຳຄ່ອງ | ສັງເກດການສົນທະນາຂອງເດັກ<br><br>ສັງເກດການເລົ່າຄຳຄ່ອງຂອງເດັກ |

| | | | | |
|---|---|---|---|---|
| | | ລ້າງໃຫ້ສະອາດຈິ່ງກິນ.<br>- ໃຫ້ເດັກພັກຜ່ອນ. | | |

**ບົດສອນ**

**ກິດຈະກຳວົງມົນ**

ໜ່ວຍ: ໝາກໄມ້ ເລົ່າເລື່ອງ ລ້ຽງເດັກ ອາຍຸ 12 - 24 ເດືອນ ເວລາ 7 – 10 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| - ເຂົ້າໃຈ ແລະ ເວົ້າຄຳສັບໄດ້ບາງຄຳສັບ.<br>- ສາມາດຈື່ບາງຕອນຂອງເລື່ອງໄດ້ | - ເພງ ໝາກກ້ອຍ ໝາກກ້ອຍ, ໝາກກ້ຽງ, ໝາກແອັບເປີ້ນ.<br>- ເລື່ອງ: ຕົ້ນໄມ້ປາກເປັນ | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນນັ່ງເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>☺ **ຂັ້ນດຳເນີນການສອນ.**<br>- ຄູເອົາໝາກໄມ້ມາໃຫ້ເດັກສັງເກດເບິ່ງພ້ອມທັງ ເວົ້າຄຳສັບ.<br>- ຄູສະເໜີເລື່ອງທີ່ເລົ່າໃຫ້ເດັກຟັງ ( ຕົ້ນໄມ້ປາກເປັນ)<br>- ຄູເລົ່າເລື່ອງປະກອບຮູບພາບໃຫ້ເດັກຟັງ1 - 2 ຄັ້ງ<br>- ຄູ ແລະ ເດັກສົນທະນາເນື້ອໃນບົດເລື່ອງວ່າເວົ້າເຖິງຫຍັງ.<br>- ຄູພາເລົ່າຄຳຄ່ອງປະກອບທ່າທາງ<br>-ຍ້ອງຍໍຊົມເຊີຍ<br>☞ **ຂັ້ນສະຫຼຸບ**<br>- ຄູເອົາໝາກໄມ້ມາໃຫ້ເດັກສັງເກດເບິ່ງພ້ອມທັງເວົ້າຄຳສັບໝາກກ້ອຍ,ໝາກກ້ຽງ,ໝາກແອັບເປີ້ນ.<br>- ຄູເລົ່າເລື່ອງປະກອບຮູບພາບຄືນ1 ຄັ້ງ<br>- ສຶກສາອົບຮົມເດັກ:ພວກຫຼານກ່ອນກິນໝາກໄມ້ ຕ້ອງລ້າງໃຫ້ສະອາດ<br>- ໃຫ້ເດັກພັກຜ່ອນ. | - ບົດເພງ<br><br>- ໝາກກ້ອຍ ໝາກກ້ຽງ, ໝາກແອັບເປີ້ນ.<br>-ບົດຄຳຄ່ອງ | - ສັງເກດການບອກຊື່ຂອງເດັກ.<br>- ສັງເກດຄວາມສົນໃຈຂອງເດັກ |

# ບົດສອນ

**ໜ່ວຍ: ໄຂ່ ແລະ ຊີ້ນ ລ້ຽງເດັກ ອາຍຸ 24 - 36 ເດືອນ ເວລາ 10- 15 ນາທີ**

**/. ຈຸດປະສົງລວມ**:

1. ສົ່ງເສີມການພັດທະນາກ້າມຊີ້ນໃຫ້ມີການຂະຫຍາຍຕົວ
2. ບອກຊື່ໄຂ່ ແລະ ຊີ້ນບາງຊະນິດໄດ້:ໄຂ່ເປັດ,ໄຂ່ໄກ່,ຊີ້ນໝູ – ຊີ້ນຄວາຍ ຫຼື ຊີ້ນງົວ.
3. ຮູ້ຄຸນປະໂຫຍດຂອງການກິນໄຂ່ ແລ ຊີ້ນ
4. ຮູ້ວິທີກິນໄຂ່ ແລະ ຊີ້ນຢ່າງຖືກຕ້ອງ.
5. ໃຫ້ເດັກຮຽນເວົ້າເປັນຄຳ,ເປັນປະໂຫຍກໄດ້
6. ຝຶກໃຫ້ເດັກຮູ້ຈຳແນກສີ 3 ສີພື້ນຖານໄດ້
7. ຝຶກໃຫ້ເດັກຮູ້ຈັກການຫຼິ້ນ,ຫຼິ້ນຮ່ວມກັບໝູ່ຫຼາຍຄົນ.
8. ຝຶກມີຄວາມກ້າຫານ,ເຂົ້າໃຈ ແລະ ສົນທະນາກັບຄູໄດ້
9. ຝຶກປະສາດສຳຜັດລະຫວ່າງມື ແລະ ຕາ
10. ສາມາດຮ້ອງເພງ,ເວົ້າຄຳຄ່ອງ,ສັງເກດແອບເວົ້າ ແລະ ຈື່ໄດ້ເນື້ອຂອງບົດເລື່ອງໄດ້

## ແຍກພັດທະນາການ 5 ດ້ານ

| | |
|---|---|
| **ດ້ານຮ່າງກາຍ**<br>1.ສົ່ງເສີມການພັດທະນາກ້າມຊີ້ນໃຫ້ມີການຂະຫຍາຍຕົວ<br>8. ຝຶກປະສາດສຳຜັດລະຫວ່າງມື ແລະ ຕາ | **ດ້ານອາລົມ-ຈິດໃຈ**<br>5. ຝຶກໃຫ້ເດັກຮູ້ຈັກການຫຼິ້ນ,ຫຼິ້ນຮ່ວມກັບໝູ່ຫຼາຍຄົນ.<br>6. ຝຶກໃຫ້ເດັກກ້າສະແດງອອກໃນຄວາມຄິດສ້າງສັນ |
| ດ້ານສັງຄົມ<br>6. ຝຶກໃຫ້ເດັກຮູ້ຈັກການຫຼິ້ນ,ຫຼິ້ນຮ່ວມກັບໝູ່ຫຼາຍຄົນ.<br>7. ຝຶກໃຫ້ເດັກກ້າສະແດງອອກໃນຄວາມຄິດສ້າງສັນ. | ດ້ານສະຕິປັນຍາ<br>2. ບອກຊື່ໄຂ່ ແລະ ຊີ້ນບາງຊະນິດໄດ້:ໄຂ່ເປັດ,ໄຂ່ໄກ່,ຊີ້ນໝູ – ຊີ້ນຄວາຍ ຫຼື ຊີ້ນງົວ.<br>3. ຮູ້ຄຸນປະໂຫຍດຂອງການກິນໄຂ່ ແລ ຊີ້ນ<br>4. ຮູ້ວິທີກິນໄຂ່ ແລະ ຊີ້ນຢ່າງຖືກຕ້ອງ.<br>5. ໃຫ້ເດັກຮຽນເວົ້າເປັນຄຳ,ເປັນປະໂຫຍກໄດ້<br>6. ຝຶກໃຫ້ເດັກຮູ້ສັງເກດປຽບທຽບໜ້ອຍ – ຫຼາຍ,ໜັກ – ເບົາ<br>10.ສາມາດຮ້ອງເພງ,ເວົ້າຄຳຄ່ອງ,ສັງເກດແອບເວົ້າ ແລະ ຈື່ໄດ້ເນື້ອຂອງບົດເລື່ອງໄດ້ |
| ດ້ານພາສາ<br>1.ບອກຊື່ໄຂ່ ແລະ ຊີ້ນບາງຊະນິດໄດ້:ໄຂ່ເປັດ,ໄຂ່ໄກ່,ຊີ້ນໝູ – ຊີ້ນຄວາຍ ຫຼື ຊີ້ນງົວ.<br>2. ຮູ້ຄຸນປະໂຫຍດຂອງການກິນໄຂ່ ແລ ຊີ້ນ<br>3.ຮູ້ວິທີກິນໄຂ່ ແລະ ຊີ້ນຢ່າງຖືກຕ້ອງ.<br>5.ໃຫ້ເດັກຮຽນເວົ້າເປັນຄຳ,ເປັນປະໂຫຍກໄດ້<br>6.ຝຶກໃຫ້ເດັກຮູ້ສັງເກດປຽບທຽບໜ້ອຍ – ຫຼາຍ,ໜັກ – ເບົາ | |

## ບົດສອນ

## ການເຝິກແອບຮ່າງກາຍ

ໜ່ວຍ: ໄຂ່ ແລະ ຊີ້ນ   ເຝິກແອບຮ່າງກາຍ   ລ້ຽງເດັກ   ອາຍຸ 24 – 36 ເດືອນ   ເວລາ 10- 15 ນາທີ

| ຈຸດປະສົງ | ເນື້ອໃນ | ກິດຈະກຳ | ອຸປະກອນ | ປະເມີນ |
|---|---|---|---|---|
| ສົ່ງເສີມການພັດທະນາກ້າມຊີ້ນໃຫ້ມີການຂະຫຍາຍຕົວ<br><br>ສາມາດປະກອບທ່າທາງຕາມສຽງເພງ | - ເພງ ກຳມື-ແບມື<br><br>- ເພງ ກຳມື | ☞ **ຂັ້ນນຳເຂົ້າສູ່ບົດຮຽນ**<br>- ຈັດນັກຮຽນຢືນເປັນຮູບວົງມົນ<br>- ຄູພາເດັກຮ້ອງເພງ<br>- ກັບທີ່: ຄູພາເດັກ ຕົບມື,ແກ່ວງແຂນ,ໝູນເຂົ່າ.<br>– ເຄື່ອນທີ່: ພາເດັກຍ່າງເປັນວົງມົນ.<br>☺ **ຂັ້ນດຳເນີນການສອນ.**<br>- ຄູໃຫ້ເດັກຢືນເປັນວົງມົນ,ຄູຢືນຢູ່ກາງວົງ<br>ພາເດັກຮ້ອງເພງກຳມືພ້ອມສາທິດໃຫ້ເດັກເບິ່ງກ່ອນ 1 – 2 ຄັ້ງ<br>– ຄູໃຫ້ເດັກເຮັດຕາມ 1–2 ຄັ້ງ<br>– ຄູພາເດັກນັບເລກ 1 – 10<br>– ຍ້ອງຍໍຊົມເຊີຍ<br><br>☞ **ຂັ້ນສະຫຼຸບ**<br>- ຄູ ແລະ ເດັກຮ້ອງເພງປະກອບທ່າທາງຄືນ<br>–ໃຫ້ເດັກຍ່າງເປັນວົງມົນຊ້າໆຮອບວົງ<br>-ໃຫ້ເດັກພັກຜ່ອນ | - ບົດເພງ<br><br>ຕົວເດັກ | ສັງເກດການປະກອບທ່າທາງຕາມສຽງເພງຂອງເດັກ |

## ຄຳຖາມ

1. ຈົ່ງບອກເນື້ອໃນເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 36 ເດືອນ?
2. ວິທີການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 36 ເດືອນມີຄືແນວໃດ?
3. ກິດຈະກຳການເຝິກແອບ ແລະ ສຶກສາອົບຮົມເດັກອາຍຸ 3 ເດືອນຫາ 36 ເດືອນມີຄືແນວໃດ?
4. ໂຄ້ງຮ່າງການແຕ່ງບົດສອນປະກອບມີແນວໃດ?

# ບົດທີ 3
# ຫຼັກສູດຊັ້ນອະນຸບານສຶກສາ

**ຈຳນວນ 5 ຊົ່ວໂມງ**

**ຈຸດປະສົງ ໃຫ້ນັກຮຽນຄູສາມາດ:**

- ວິເຄາະ ການຈັດການສຶກສາໃນຫຼັກສູດສຳລັບເດັກກ່ອນໄວຮຽນ, ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາໄດ້
- ອະທິບາຍ ຫຼັກສູດຊັ້ນອະນຸບານສຶກສາ, ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກສູດ, ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ, ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ, ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມໄດ້.
- ບອກຫຼັກການຈັດປະສົບການ, ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດໄດ້
- ອະທິບາຍການຕິດຕາມ ແລະ ປະເມີນຜົນການນຳໃຊ້ຫຼັກສູດໄດ້
- ບອກການລາຍງານຜົນການປະຕິບັດຫຼັກສູດໄດ້

## 1. ວິເຄາະການຈັດການສຶກສາໃນຫຼັກສູດສຳລັບເດັກກ່ອນໄວຮຽນ, ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາ

### 1.1 ການຈັດການສຶກສາໃນຫຼັກສູດສຳລັບເດັກກ່ອນໄວຮຽນ

ການຈັດການຮຽນ-ການສອນໃຫ້ແກ່ເດັກແມ່ນມີຫຼາກຫຼາຍວິທີທີ່ຄູຄວນຈັດ ເຊິ່ງຕ້ອງເລືອກໃຊ້ໃຫ້ເໝາະສົມກັບຈຸດປະສົງທີ່ຕ້ອງການ ບໍ່ມີວິທີການຈັດການຮຽນ-ການສອນວິທີໃດດີທີ່ສຸດ ແຕ່ລະວິທີມີຂໍ້ດີ ແລະ ຂໍ້ເສຍ ເຊິ່ງການຈັດການຮຽນ-ການສອນທີ່ເໝາະສົມຕ້ອງຂຶ້ນຢູ່ກັບອົງປະກອບຫຼາຍປະການດ້ວຍກັນ.

- ການຈັດການຮຽນ-ການສອນແບບປະຕິບັດການ ຫຼື ທົດລອງ ການຈັດການຮຽນ-ການສອນວິທີນີ້ ເດັກເປັນຜູ້ຮຽນຮູ້ດ້ວຍຕົນເອງ ໂດຍຄູຈະເປັນພຽງຜູ້ໃຫ້ຄຳແນະນຳຊ່ວຍເຫຼືອ
- ການຈັດການຮຽນ-ການສອນໂດຍການເລົ່ານິທານ ຈະເປັນການເລົ່ານິທານຈະເປັນການນຳເລື່ອງລາວຂອງນິທານມາເລົ່າສູ່ກັນຟັງ ເດັກຈະໄດ້ຮັບຄວາມ່ວນຊື່ນສະໜຸກສະໜານຈາກນິທານ ແລະ ຍັງສາມາດສອດແຊກຄວາມຄິດຄຸນນະທຳທີ່ດີງາມໃຫ້ເດັກເຊິ່ງຈະເປັນແນວທາງໃນການນຳໄປປະຕິບັດໃນການດຳລົງຊີວິດ
- ການຈັດການຮຽນ-ການສອນແບບສາທິດຄູຈະເປັນຜູ້ເຮັດໃຫ້ເບິ່ງກ່ອນ ແລະ ມີການແນະນຳ
- ການຈັດການຮຽນ-ການສອນ ແບບໃຊ້ເກມ ເດັກໆຈະໄດ້ຮັບຄວາມສະໜຸກສະໜານ ແຕ່ຈະມີກົດກະຕິກາເຂົ້າມາຄວບຄຸມຊ່ວຍ
- ການຈັດການຮຽນ-ການສອນແບບສົນທະນາອະພິປາຍ ວິທີນີ້ເປັນການແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນລະຫວ່າງຄູກັບເດັກ ຫຼື ເດັກກັບເດັກດ້ວຍກັນກໍ່ໄດ້ ຄູຄວນເປັນຜູ້ແນະນຳໃຫ້ເດັກຄິດໄປຕາມລຳດັບ
- ການຈັດການຮຽນ-ການສອນແບບສຶກສານອກສະຖານທີ ວິທີນີ້ຄູເປັນຜູ້ພາເດັກໄປສຶກສາສະພາບຄວາມເປັນຈິງອາດເປັນນອກຫ້ອງຮຽນ ຫຼື ນອກໂຮງຮຽນ

- ການຈັດການຮຽນ-ການສອນແບບເຊີນວິທະຍາກອນ ໂດຍການເຊີນບຸກຄົນທີ່ມີຄວາມຮູ້ຄວາມສາມາດ ເຊິ່ງອາດຈະເປັນຜູ້ປົກຄອງຂອງເດັກ ມາເວົ້າລົມກັບເດັກ ອາດມາຮ່ວມກິດຈະກຳກັບເດັກໃນຮູບແບບຕ່າງໆທີ່ເໝາະສົມກັບໄວຂອງເດັກ

### 1.2 ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາ

ການສຶກສາຊັ້ນອະນຸບານສຶກສາເປັນການພັດທະນາເດັກອາຍຸ 3 ຫາ 6 ປີຕາມ 5 ຫຼັກມູນການສຶກສາຄື : ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພະລະສຶກສາ, ແຮງງານສຶກສາ ໂດຍຈັດການສຶກສາອົບຮົມ, ລ້ຽງດູ,ສົ່ງເສີມຂະບວນການຮຽນຮູ້ທີ່ຕອບສະໜອງຕໍ່ທຳມະຊາດ ແລະ ພັດທະນາການຂອງເດັກແຕ່ລະຄົນພາຍໃຕ້ສັງຄົມ-ວັດທະນະທຳທີ່ເດັກອາໄສຢູ່ດ້ວຍຄວາມຮັກແພງ, ຄວາມເຂົ້າໃຈຂອງທຸກຄົນເພື່ອສ້າງພື້ນຖານຄຸນນະພາບຊີວິດໃຫ້ເດັກພັດທະນາໄປສູ່ຄວາມເປັນພົນລະເມືອງລາວເຊິ່ງປະກອບດ້ວຍຄວາມຮູ້, ຄວາມສາມາດດ້ານວິທະຍາສາດ ແລະ ຄຸນສົມບັດສິນລະທຳປະຕິວັດ, ດຳລົງຊີວິດຢູ່ໃນຄອບຄົວ ແລະ ສັງຄົມພາຍໃຕ້ປະເພນີອັນດີງາມຂອງຊາດລາວ.

## 2. ຫຼັກສູດຊັ້ນອະນຸບານສຶກສາ, ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກສູດ, ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ, ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ, ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມ.

### 2.1 ຫຼັກສູດຊັ້ນອະນຸບານສຶກສາ

ຫຼັກສູດຊັ້ນອະນຸບານສຶກສາແຫ່ງ ສ ປປ ລາວ ເລກທີ 8400/ສສກ.ສວສ/2012, ນະຄອນຫຼວງວຽງຈັນ, ວັນທີ 05 / 09 / 2012 ໄດ້ກຳນົດເນື້ອໃນໄວ້ດັ່ງນີ້:

### 2.2 ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກສູດ

ການສຶກສາຊັ້ນອະນຸບານ ສິສາໝາຍເຖິງການລ້ຽງດູ, ການຮຽນ ແລະ ການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3-6 ປີ. ການພັດທະນາເດັກໃນຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ຂັ້ນຕໍ່ໄປ.

- ອະນຸບານ 1 ຮັບເດັກອາຍຸ 3-4 ປີ.
- ອະນຸບານ 2 ຮັບເດັກອາຍຸ 4-5 ປີ.
- ອະນຸບານ 3 ຮັບເດັກອາຍຸ 5-6 ປີ.

### 2.3 ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ

ຫຼັກສູດຊັ້ນອະນຸບານສຶກສາແມ່ນອີງໃສ່ຫຼັກການພັດທະນາເດັກແບບຮອບດ້ານໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມເພື່ອໃຫ້ເດັກມີຄວາມຮູ້ພື້ນຖານທີ່ຈະໄປຮຽນຕໍ່ໃນຊັ້ນຕໍ່ໄປໃນຂັ້ນປະຖົມສຶກສາປີທີ່ 1 ຢ່າງມີຄຸນນະພາບ.

ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາປະກອບມີ 6 ຫຼັກການດັ່ງນີ້:

1) ສົ່ງເສີມຂະບວນການກຽມພ້ອມໃນການຮຽນຮູ້ ແລະ ພັດທະນາການຂອງເດັກອາຍຸ 3 ຫາ 6 ປີ.

2) ເບິ່ງແຍງ, ລ້ຽງດູເດັກໃຫ້ເຕີບໃຫຍ່ຕາມໄວອາຍຸ ແລະ ສຶກສາອົບຮົມໃນການຮຽນໂດຍຄຳນຶງເຖິງພັດທະນາການຂອງເດັກແຕ່ລະຄົນ, ແບບແຜນດຳລົງຊີວິດໃນສັງຄົມ, ວັດທະນະທຳຂອງຊາດ ແລະ ທ້ອງຖິ່ນ.
3) ພັດທະນາການຂອງເດັກໂດຍຜ່ານການຫຼິ້ນ ແລະ ປະຕິບັດກິດຈະກຳດ້ວຍຫຼາຍຮູບແບບທີ່ເໝາະສົມກັບໄວອາຍຸ, ເພດ, ເຜົ່າ ແລະ ຕາມສະພາບຕົວຈິງໃນແຕ່ລະທ້ອງຖິ່ນ.
4) ຈັດປະສົບການໃຫ້ເດັກໄດ້ຮຽນຮູ້ ແລະ ນຳໃຊ້ເຂົ້າໃນຊີວິດປະຈຳວັນໄດ້ຢ່າງມີຄວາມສຸກ ແລະ ມີຄຸນນະພາບ.
5) ຈັດການຮຽນ-ການສອນແບບບູລະນາການດ້ວຍກິດຈະກຳການຫຼິ້ນ ແລະ ຮຽນ ເຊິ່ງປະກອບມີກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ, ກິດຈະກຳໃນວົງມົນ, ກິດຈະກຳສິລະປະສ້າງສັນ, ການເຄື່ອນໄຫວຫຼິ້ນຕາມມຸມ, ກິດຈະກຳກາງແຈ້ງ ແລະ ກິດຈະກຳເກມການສຶກສາ.
6) ພັດທະນາເດັກແບບຮອບດ້ານເພື່ອເຊື່ອມຕໍ່ການຮຽນລະຫວ່າງຊັ້ນອະນຸບານສຶກສາ ແລະ ຂັ້ນປະຖົມສຶກສາປີທີ 1 ໂດຍມີການຮ່ວມມື ແລະ ປະສານງານລະຫວ່າງໂຮງຮຽນ, ຄອບຄົວ ແລະ ຊຸມຊົນ.

**2.4 ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ**

ຈຸດປະສົງສະເພາະໃນການສົ່ງເສີມພັດທະນາການເດັກອະນຸບານແມ່ນສ້າງໃຫ້ເດັກ 3-6 ປີ ມີການພັດທະນາຮອບດ້ານດັ່ງນີ້:

1) ມີສຸກຂະພາບດີ, ຮ່າງກາຍຈະເລີນເຕີບໂຕໃຫ່ຍຕາມໄວອາຍຸ, ມີນິດໄສຮັກການອະນາໄມ, ປ້ອງກັນຄວາມປອດໄພໃນການຫຼິ້ນ ແລະ ຮຽນ.
2) ນຳໃຊ້ກ້າມຊີ້ນໃຫ່ຍ, ກ້າມຊີ້ນນ້ອຍໃນການເຄື່ອນໄຫວໃຫ້ມີຄວາມຄ່ອງແຄ້ວ ແລະ ປະສານສຳພັນກັນ.
3) ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ.
4) ມີອາລົມ-ຈິດໃຈທີ່ດີ, ມີຄວາມສຸກໃນການຫຼິ້ນ ແລະ ການຮຽນ.
5) ມີມາລະຍາດ, ມີລະບຽບວິໄນ ແລະ ຄວາມຮັບຜິດຊອບ, ມີຄວາມສັດຊື່ ແລະ ຈິດໃຈດີງາມ.
6) ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າສະແດງອອກທາງດ້ານສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ.
7) ຮັກທຳມະຊາດ, ສິ່ງແວດລ້ອມ ວັດທະນາທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ
8) ປະຕິບັດຕົນເປັນສະມາຊິກທີ່ດີຂອງໂຮງຮຽນ, ຄອບຄົວ ແລະ ສັງຄົມ ຢູ່ຮ່ວມກັບຄົນອື່ນໄດ້ຢ່າງມີຄວາມສຸກ.
9) ມີຄວາມສາມາດໃນການຄິດ ແລະ ແກ້ໄຂບັນຫາໄດ້ເໝາະກັບໄວອາຍຸ.
10) ມີເຈດຕະນາທີດີຕໍ່ການຮຽນຮູ້ ແລະ ມີທັກສະໃນການສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ.
11) ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ.
12) ອ່ານປຶ້ມ ແລະ ສ້າງຄວາມຮູ້, ທັກສະ, ນິດໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ.

13) ຂຽນຕົວອັກສອນລາວ ແລະ ສ້າງຄວາມຮູ້, ທັກສະ, ນິດໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ.

## 2.5 ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມ

2.5.1 ເນື້ອໃນ ທີ່ນໍາມາຮຽນໃນຫຼັກສູດສະບັບນີ້ປະກອບດ້ວຍ 5 ເນື້ອໃນໃຫ່ຍເຊັ່ນ:

1) ເລື່ອງກ່ຽວກັບຕົວເດັກ: ປະກອບມີຫົວຂໍ້ກ່ຽວກັບເລື່ອງໂຮງຮຽນ, ຕົວເດັກ, ຕອບຄົວ, ມາລະຍາດ, ຄວາມປອດໄພ ແລະ ສຸຂະພາບ
2) ເລື່ອງກ່ຽວກັບບຸກຄົນ: ອາຊີບ ແລະ ທ້ອງຖິ່ນ: ປະກອບມີຫົວຂໍ້ກ່ຽວກັບເລື່ອງ ບຸກຄົນໃນຄອບຄົວ, ທີ່ຢູ່ອາໄສ, ບຸກຄົນສໍາຄັນຂອງຊາດ, ບຸກຄົນສໍາຄັນຂອງທ້ອງຖິ່ນ ແລະ ອາຊີບຂອງຄົນໃນທ້ອງຖິ່ນ.
3) ເລື່ອງກ່ຽວກັບສະຖານທີ ແລະ ວັດທະນະທໍາ: ປະກອບມີຫົວຂໍ້ກ່ຽວກັບເລື່ອງບ້ານ, ເມືອງ, ແຂວງ, ສະຖານທີສໍາຕັນຂອງ, ສະຖານທີທ່ອງທ່ຽວ, ວັດທະນະທໍາທ້ອງຖິ່ນ, ວັດທະນະທໍາລາວ, ວັນບຸນປະເພນີ, ວັນບຸນສໍາຄັນຂອງຊາດ ແລະ ພູມປະຫວັດສາດ
4) ເລື່ອງກ່ຽວກັບທໍາມະຊາດ ແລະ ສິ່ງແວດລ້ອມ, ປະກອບມີຫົວຂໍ້ກ່ຽວກັບເລື່ອງນໍ້າ, ອາກາດຢູ່ອ້ອມຮອບຕົວ, ຊັບພະຍາກອນທໍາມະຊາດ( ດິນ, ຫີນ, ຊາຍ), ລະດູການ( ລະດູແລ້ງ, ລະດູຝົນ), ກາງເວັນ-ກາງຄືນ, ວັນເວລາ( ມື້ນີ້, ມື້ວານ, ມື້ອື່ນ), ສັດ( ແມງໄມ້, ສັດປີກ, ສັດນໍ້າ), ພືດ( ຕົ້ນໄມ້, ໝາກໄມ້, ດອກໄມ້, ເຂົ້າ, ຜັກ).
5) ເລື່ອງກ່ຽວກັບສິ່ງຕ່າງໆຮອມຕົວເດັກ: ປະກອບມີຫົວຂໍ້ກ່ຽວກັບເລື່ອງອາຫານມີປະໂຫຍດ, ນໍ້າດື່ມສະອາດ, ການຄົມມະນາຄົມ. ການສື່ສານ, ປະສາດສໍາຜັດທັງ 5 ( ເບິ່ງ, ຟັງສຽງ, ຊີມລົດຊາດ, ດົມກິ່ນ, ຈັບບາຍ), ພະລັງງານ, ຕົວເລກ, ຕົວອັກສອນ, ຮູບຊົງເລຂາຄະນິດ, ເງິນກີບ, ການວັດແທກ, ສັນຍາລັກ ແລະ ເຄື່ອງໝາຍຕ່າງໆ, ເຄື່ອງນຸ່ງຫົ່ມ, ເຄື່ອງຫຼິ້ນ, ເຄື່ອງມື, ເຄື່ອງໃຊ້.

2.5.2 ປະສົບການທີ່ຄວນສົ່ງເສີມ

ປະສົບການທີ່ຄວນສົ່ງເສີມແມ່ນສິ່ງທີ່ສໍາຄັນ ແລະ ຈໍາເປັນໃນການສົ່ງເສີມພັດທະນາການທັງ 5 ດ້ານມີດັ່ງນີ້:

1) ປະສົບການທີ່ສົ່ງເສີມພັດທະນາການທາງຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ

- ມີສຸຂະພາບດີ, ຮ່າງກາຍຈະເລີນເຕີບໃຫ່ຍຕາມໄວອາຍຸ, ມີສຸຂະນິໄສໃນການອະນາໄມ, ມີຄວາມປອດໄພໃນການກິນ, ຫຼິ້ນ ແລະ ຮຽນ
- ນໍາໃຊ້ກ້າມຊີ້ນໃຫ່ຍ ແລະ ກ້າມຊີ້ນນ້ອຍໃນການເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວ ແລະ ປະສາດສໍາພັນກັນລະຫວ່າງມືກັບສາຍຕາ
- ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ

2) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານພາສາ

- ຟັງ, ເບິ່ງ, ເວົ້າສື່ສານໃນຊີວິດປະຈໍາວັນໄດ້ເໝາະສົມກັບໄວອາຍຸ.
- ອ່ານປຶ້ມເພື່ອສ້າງຄວາມຮູ້, ທັກສະໃນການອ່ານ ແລະ ສ້າງນິໄສຮັກການອ່ານໄດ້ເໝາະສົມກັບໄວອາຍຸ

- ຂຽນຕົວອັກສອນລາວເພື່ອສ້າງຄວາມຮູ້ ທັກສະໃນການຂຽນ ແລະ ສ້າງນິໄສຮັກການຂຽນໄດ້ເໝາະສົມກັບໄວອາຍຸ

3) ປະສົບການທີ່ສົ່ງເສີມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

- ມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ເໝາະສົມກັບໄວອາຍຸ
- ມີຄວາມສົນໃຈຮຽນຮູ້ສິ່ງຕ່າງໆ ແລະ ສະແຫວງຫາຄວາມຮູ້ທົ່ວໄປໄດ້ຢ່າງເໝາະສົມກັບໄວ

4) ປະສົບການທີ່ສົ່ງເສີມພັດທະນາການທາງດ້ານອາລົມ-ຈິດໃຈ

- ມີອາລົມ-ຈິດໃຈທີ່ດີ, ມີຄວາມສຸກໃນການຫຼິ້ນ ແລະ ຮຽນ
- ມີມາລະຍາດ, ທັດສະນະຄະຕິທີ່ດີ, ຄວາມຮັບຜິດຊອບ ແລະ ມີຈິດໃຈດີງາມ
- ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າສະແດງອອກທາງດ້ານສິລະປະກຳ, ສິລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ

5) ປະສົບການທີ່ສົ່ງເສີມທາງດ້ານສັງຄົມ

- ຮັກທຳມະຊາດສິ່ງແວດລ້ອມ, ວັດທະນະທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ.
- ຢູ່ຮ່ວມກັບຄົນອື່ນໄດ້ຢ່າງມີຄວາມສຸກ, ປະຕິບັດຕົນເປັນສະມາຊິກທີ່ດີຂອງໂຮງຮຽນ, ຄອບຄົວ ແລະ ສັງຄົມ

- **ເນື້ອໃນທີ່ນຳມາເປັນຫົວຂໍ້ຂອງໜ່ວຍການສອນມີ 8 ໜ່ວຍຄື:**

1) ໜ່ວຍຕົວຂອງຂ້ອຍ
2) ໜ່ວຍຄອບຄົວຂອງຂ້ອຍ
3) ໜ່ວຍບ້ານຂອງຂ້ອຍ
4) ໜ່ວຍໂຮງຮຽນຂອງຂ້ອຍ
5) ໜ່ວຍທຳມະຊາດອ້ອມຕົວເຮົາ
6) ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ
7) ໜ່ວຍການຄົມມະນາຄົມ ແລະ ການສື່ສານ
8) ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ

## 3. ຫຼັກການຈັດປະສົບການ, ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດ

### 3.1 ຫຼັກການຈັດປະສົບການ

ການຈັດກິດຈະກຳການຮຽນປະຈຳວັນສຳລັບເດັກອາຍຸ 3 ຫາ 6 ປີໃນໂຮງຮຽນອະນຸບານ ແມ່ນການຈັດການຮຽນ-ການສອນແບບບູລະນະການເພື່ອໃຫ້ເດັກໄດ້ຮຽນຮູ້ຈາກປະສົບການຕົວຈິງ: ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ, ມີພັດທະນາການທາງດ້ານຮ່າງກາຍ, ດ້ານອະນາໄມ ແລະ ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມໂດຍອີງຕາມຫຼັກການຈັດປະສົບການ ແລະ ການຮຽນຮູ້ດັ່ງນີ້:

1) ຈັດປະສົບການໃນການຫຼິ້ນ ແລະ ການຮຽນໃຫ້ສອດຄ່ອງກັບລະດັບການພັດທະນາການ ແລະ ຄວາມສາມາດຂອງເດັກອາຍຸ 3 - 6 ປີ ເພື່ອໃຫ້ເດັກໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ

2) ຈັດປະສົບການແບບເດັກເປັນໃຈກາງໃຫ້ເດັກໄດ້ຄົ້ນຄິດ, ວາງແຜນ, ກ້າຕັດສິນໃຈ, ສະແດງຄວາມຄິດເຫັນເພື່ອຕອບສະໜອງຄວາມຕ້ອງການ, ຄວາມສົນໃຈ, ຄວາມແຕກຕ່າງລະຫວ່າງຕົວເດັກ ແລະ ສະພາບແວດລ້ອມຂອງສັງຄົມທີ່ເດັກອາໄສຢູ່
3) ຈັດປະສົບການໃຫ້ເດັກໄດ້ຮັບການພັດທະນາໃນຮູບແບບບູລະນາການ ໂດຍເນັ້ນຂະບວນການຮຽນຮູ້ຜ່ານການຫຼິ້ນ, ການປະຕິບັດກິດຈະກຳທີ່ເໝາະສົມກັບໄວ ແລະ ຜົນໄດ້ຮັບ
4) ຈັດປະສົບການໂດຍມີການຕິດຕາມປະເມີນຜົນ ແລະ ລາຍງານພັດທະນາການເດັກ ໂດຍມີການບັນທຶກຂໍ້ມູນຂໍ້ມູນຢ່າງເປັນລະບົບ ແລະ ເປັນຂະບວນການຢ່າງຕໍ່ເນື່ອງ
5) ຈັດປະສົບການໃນການພັດທະນາເດັກໂດຍໃຫ້ຄອບຄົວດ ໂຮງຮຽນ ແລະ ຊຸມຊົນມີສ່ວນຮ່ວມໃນການວາງແຜນ, ການສະໜັບສະໜູນສື່ການຮຽນ-ການສອນ,ເຂົ້າຮ່ວມກິດຈະກຳ ແລະ ການປະເມີນຜົນພັດທະນາການຂອງເດັກ
6) ຈັດປະສົບການໃນການສົ່ງເສີມທັດສະນະຄະ ແລະ ຄ່ານິຍົມຝນການດຳລົງຊີວິດປະຈຳວັນໂດຍການເຝິກລັກສະນະນິໄສ, ວັດທະນະທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ
7) ຈັດປະສົບການໃນລັກສະນະເປັນກິດຈະກຳ, ເກມການສຶກສາບໍ່ໄດ້ຮຽນເປັນລາຍວິຊາຄືຊັ້ນປະຖົມສຶກສາ. ໃນແຕ່ລະວັນຈະມີການຈັດກິດຈະກຳການຮຽນຜ່ານການຫຼິ້ນ ແລະ ປະຕິວັດກິດຈະກຳເປັນກຸ່ມນ້ອຍ ແລະ ປະຕິບັດກິດຈະກຳເປັນກຸ່ມນ້ອຍ ແລະ ກຸ່ມໃຫຍ່ຕາມ 6 ກິດຈະກຳຫຼັກດັ່ງນັ້ນ:
   - ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ
   - ກິດຈະກຳສິລະປະສ້າງສັນ
   - ກິດຈະກຳຫຼິ້ນຕາມມຸມ
   - ກິດຈະກຳໃນວົງມົນ
   - ກິດຈະກຳຫຼິ້ນກາງແຈ້ງ
   - ກິດຈະກຳເກມການສຶກສາ

### 3.2 ການມີສ່ວນຮ່ວມໃນການນຳໃຊ້ຫຼັກສູດ

1) ຄູຜູ້ສອນ: ສຶກສາ ແລະ ທຳຄວາມເຂົ້າໃຈກ່ຽວກັບຫຼັກສູດໃຫ້ຊັດເຈນ, ວິເຄາະຜູ້ຮຽນ ແລະ ຂໍ້ມູນໃນດ້ານຕ່າງໆ ຂອງຜູ້ຮຽນ ປັບປຸງຫຼັກສູດໃຫ້ເໝາະສົມກັບສະພາບຂອງທ້ອງຖິ່ນ, ວິເຄາະຫຼັກສູດ ແລະ ເອກະສານປະກອບຫຼັກສູດ, ຈັດຫ້ອງຮຽນໃຫ້ມີບັນຍາກາດ ທີ່ເອື້ອເພື່ອຕໍ່ການຈັດການຮຽນ-ການສອນ ແລະ ກຽມສື່ການສອນ ດຳເນີນການສອນຕາມແຜນການຈັດການຮຽນຮູ້ທີ່ວາງແຜນໄວ້ ປະເມີນຜົນການຮຽນຮູ້ຂອງຜູ້ຮຽນ.

ປະຊາສຳພັນ ສະໜັບສະໜູນ ແລະ ເຜີຍແຜ່ຄວາມຮູ້ເລື່ອງຫຼັກສູດ ສະໜັບສະໜູນຊ່ວຍເຫຼືອການຈັດຫາວັດສະດຸອຸປະກອນ ແລະ ສື່ປະກອບການຮຽນ-ການສອນ ສະແດງຄວາມສົນໃຈໃນການຮຽນຂອງຜູ້ຮຽນໃຫ້ຄວາມຮ່ວມມືກັບທາງໂຮງຮຽນ ເຂົ້າຮ່ວມກິດຈະກຳຂອງໂຮງຮຽນ.

2) ຜູ້ປົກຄອງເດັກແຕ່ລະຄົນມີວິທີການລ້ຽງດູ ແລະ ສຶກສາອົບຮົມເດັກທີ່ແຕກຕ່າງກັນຕາມຮີດຄອງປະເພນີ ແລະ ສະພາບແວດລ້ອມທາງສັງຄົມທ້ອງຖິ່ນທີ່ອາໄສຢູ່. ຫຼກສູດອະນຸບານເປັນບ່ອນອີງເພື່ອໃຫ້ຜູ້ປົກຄອງເດັກສາມາດຊ່ວຍຄູໃນການຈັດກິດຈະກຳຕ່າງໆດັ່ງນີ້:

ສຶກສາອົບຮົມເດັກໃນຄອບຄົວໃຫ້ສອດຄ່ອງກັບການພັດທະນາຂອງເດັກ, ຕິດຕາມ ແລະ ປະເມີນຜົນພັດທະນາການທຸກດ້ານຂອງເດັກໂດຍການສັງເກດເດັກ, ຮັບຮູ້ຄວາມແຕກຕ່າງລະຫວ່າງເດັກດ້ວຍກັນ, ຖ້າເຫັນວ່າ

ເດັກມີພັດທະນາການຊ້າກວ່າປົກກະຕິຄວນປຶກສາຄູ ຫຼື ແພດເພື່ອໃຫ້ການຊ່ວຍເຫຼືອເດັກໃນຂັ້ນຕໍ່ໄປ, ຊຸກຍູ້ໃຫ້ລູກຫຼານມາໂຮງຮຽນເປັນປົກກະຕິສົ່ງເສີມໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມກິດຈະກຳຕ່າງໆໃນໂຮງຮຽນຕາມເວລາທີ່ເໝາະສົມ ແລະ ຊອກຫາແຫຼ່ງທຶນ, ອຸປະກອນການຮຽນ-ການສອນມາໂຮງຮຽນອະນຸບານ

3) ການນຳໃຊ້ຫຼັກສູດສຳລັບພະນັກງານວິຊາການ ແລະ ຜູ້ບໍລິຫານການສຶກສາ

ການນຳໃຊ້ຫຼັກສູດສຳລັບພະນັກງານວິຊາການ ຈັດຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ແລະ ຄູຜູ້ສອນເປັນຜູ້ປະສານງານການໃຊ້ຫຼັກສູດລະຫວ່າງໜ່ວຍງານສ່ວນກາງກັບໂຮງຮຽນ ແລະ ໜ່ວຍງານທີ່ກ່ຽວຂ້ອງ ເປັນທີ່ປຶກສາໃຫ້ແກ່ຄູສອນ ນິເທດຕິດຕາມຜົນ ການນຳຫຼັກສູດໄປໃຊ້ຂອງໂຮງຮຽນຢ່າງຕໍ່ເນື່ອງ ຈັດໃຫ້ບໍລິການກ່ຽວກັບເອກະສານຫຼັກສູດ ແລະ ເອກະສານປະກອບຫຼັກສູດ ວັດຖຸອຸປະກອນ ແລະ ສື່ການຮຽນ-ການສອນ.

ການນຳໃຊ້ຫຼັກສູດສຳລັບຜູ້ບໍລິຫານການສຶກສາ: ທຳຄວາມເຂົ້າໃຈກ່ຽວກັບຫຼັກສູດ ແລະ ເອກະສານປະກອບຫຼັກສູດປະຊາສຳພັນການໃຊ້ຫຼັກສູດ ຈັດກຽມຄວາມພ້ອມກ່ຽວກັບບຸກຄະລາກອນ ຈັດຄູເຂົ້າສອນ ໃຫ້ເໝາະສົມກັບຄວາມຮູ້ຄວາມສາມາດ ປະສົບການ ໃຫ້ບໍລິການກ່ຽວກັບຫຼັກສູດ ແລະ ສະໜັບສະໜູນການສອນຂອງຄູ. ດຳເນີນນິເທດ ການຈັດການຮຽນ-ການສອນຂອງຄູຜູ້ສອນ ໃຫ້ຂອງຂວັນ ແລະ ໃຫ້ກຳລັງໃຈແກ່ຄູຜູ້ໃຊ້ຫຼັກສູດ.

## 4. ການຕິດຕາມ ແລະ ປະເມີນຜົນການນຳໃຊ້ຫຼັກສູດ

### 4.1 ການຕິດຕາມການປະເມີນຫຼັກສູດ

### ກ. ໄລຍະເວລາຂອງການຕິດຕາມປະເມີນຜົນຫຼັກສູດ.

ການຕິດຕາມປະເມີນຜົນການປະຕິບັດຫຼັກສູດມີ 3 ໄລຍະດັ່ງນີ້:

- ການປະເມີນຜົນກ່ອນການນຳໃຊ້ຫຼັກສູດໂດຍໂຮງຮຽງເປັນຜູ້ປະເມີນກັບເດັກໃນຕົ້ນປີຮຽນໃນແແຕ່ລະປີ.
- ການປະເມີນຜົນໃນໄລຍະການນຳໃຊ້ຫຼັກສູດໂດຍຄູສອນ, ຜູ້ປົກຄອງເປັນຜູ້ຊ່ວຍສັງເກດ ແລະ ຕິດຕາມພັດທະນາການໃນແຕ່ລະດ້ານ.
- ການປະເມີນຜົນຫຼັງຈາກນຳໃຊ້ຫຼັກສູດໂດຍໂຮງຮຽນເປັນຜູ້ປະເມີນກັບເດັກໃນທ້າຍພາກຮຽນຂອງແຕ່ລະປີ.

### 4.2 ການປະເມີນການນຳໃຊ້ຫຼັກສູດ

#### 1) ຄວາມໝາຍຂອງການປະເມີນຜົນຫຼັກສູດ

ການປະເມີນຜົນຫຼັກສູດໝາຍເຖິງຂະບວນການການເກັບຮວບຮວມຂໍ້ມູນ ແລະ ການປະມວນຜົນຂໍ້ມູນເພື່ອນຳມາຕັດສິນໃຈກ່ຽວກັບຄຸນນະພາບ ທັງປະສິດທິພາບ ແລະ ປະເມີນຜົນຂອງຫຼັກສູດລວມເຖິງສິ່ງທີ່ຈະເກີດຂຶ້ນຈາກການໃຊ້ຫຼັກສູດນັ້ນໃນອະນາຄົດ ແນວຄິດການປະເມີນຫຼັກສູດປະກອບດ້ວຍຄຸນລັກສະນະສຳຄັນດັ່ງນີ້:

- ການປະເມີນເປັນການປະເມີນຄ່າຂອງເລື່ອງທີ່ຕັດສິນໃຈ.
- ການຕັດສິນໃຈມີເກນທີ່ຊັດເຈນ.
- ເກນການຕັດສິນທີ່ມີປະເດັນທີ່ຄອບຄຸມ ແລະ ເໝາະສົມກັບເນື້ອໃນ.
- ເກນສະແດງໃຫ້ເຫັນດ້ວຍບຸກຄະລິກ ແລະ ສອດຄ່ອງກັບແນວຄິດຂອງແບບຈຳລອງເພື່ອນຳໄປສູ່ການຕັດສິນໃຈ

#### 2) ຈຸດປະສົງຂອງການປະເມີນຫຼັກສູດ

ທາບາ ( Taba 1962 : 310 ) ໄດ້ກ່າວໄວ້ວ່າ ການປະເມີນຫຼັກສູດເຮັດຂຶ້ນມາເພື່ອການສຶກສາຂະບວນການຕ່າງໆທີ່ກ່ຽວຂ້ອງເຊິ່ງໄດ້ແກ່ຈຸດປະສົງ ຂອບເຂດຂອງເນື້ອໃນສາລະ ຄຸນນະພາບຂອງຜູ້ບໍລິຫານ ແລະ ຜູ້ໃຊ້ຫຼັກສູດ ສະມັດຖະພາບຂອງຜູ້ຮຽນຄວາມສຳພັນຂອງວິຊາຕ່າງໆ ການໃຊ້ສື່ວັດສະດຸການສອນ ຯລຯ.

ກ. ເພື່ອຫາຄຸນຄ່າຂອງຫຼັກສູດນັ້ນ ໂດຍເບິ່ງວ່າຫຼັກສູດທີ່ຈັດທຳຂຶ້ນນັ້ນສະມາດສະໜອງວັດຖຸປະສົງທີ່ຫຼັກສູດນັ້ນຕ້ອງການຫຼືບໍ ສະໜອງຄວາມຕ້ອງການຂອງຜູ້ຮຽນ ແລະ ສັງຄົມຄືແນວໃດ

ຂ. ເພື່ອອະທິບາຍ ແລະ ວິຈານວ່າລັກສະນະສ່ວນປະກອບຕ່າງໆຂອງຫຼັກສູດໃນແງ່ຕ່າງໆເຊັ່ນ ຫຼັກການຈຸດມຸ້ງໝາຍ ເນື້ອຫາສາລະ ການຮຽນຮູ້ ກິດຈະກຳການຮຽນ-ການສອນ ອຸປະກອນ ການສອນ ແລະ ວັດຜົນສອດຄ່ອງກັບຄວາມຕ້ອງການຫຼື ບໍ

ຄ. ເພື່ອຕັດສິນວ່າຫຼັກສູດມີຄຸນນະພາບດີຫຼືບໍ ເໝາະສົມຫຼືບໍເໝາະສົມກັບການນຳໄປໃຊ້ມີຂໍ້ຂາດຕົກບົກຜ່ອງໃນການທີ່ຈະຕ້ອງປັບປຸງແກ້ໄຂບັນຫາໃດແດ່ ການປະເມີນຜົນມີລັກສະນະນີ້ມັກຈະດຳເນີນໄປໃນຊ່ວງທີ່ພັດທະນາຫຼັກສູດຍັງຄົງດຳເນີນການຢູ່ ເພື່ອທີ່ຈະພິຈາລະນາວ່າອົງປະກອບຕ່າງໆຂອງຫຼັກສູດມີຄຸນນະພາບຫຼືບໍ

ງ. ເພື່ອຕັດສິນວ່າ ການບໍລິຫານງານດ້ານວິຊາການ ແລະ ບໍລິຫານງານດ້ານຫຼັກສູດເປັນໄປໃນທາງທີ່ຖືກຕ້ອງຫຼືບໍ ເພື່ອຫາທາງແກ້ໄຂລະບົບການບໍລິຫານຫຼັກສູດ ການນຳຫຼັກສູດໄປໃຊ້ໃຫ້ມີປະສິດທິພາບ.

ຈ. ເພື່ອຫາທາງປັບປຸງແກ້ໄຂໃນສິ່ງບົກຜ່ອງທີ່ພົບໃນອົງປະກອບຕ່າງໆໃນຫຼັກສູດ; ການປະເມີນຈະເປັນຕົວຊີ້ໃຫ້ເຫັນຄຸນນະພາບການສຶກສາຂອງສັງຄົມເຊິ່ງຈະມີຜົນກະທົບຕໍ່ຄຸນນະພາບຂອງປະຊາກອນໃນການພັດທະນາສັງຄົມໃນອະນາຄົດຕໍ່ໄປ.

**3) ປະເພດ ຫຼື ຮູບແບບຂອງການປະເມີນຫຼັກສູດ.**

ຮູບແບບຂອງການປະເມີນທີ່ນິຍົມນຳມາປະຍຸກໃຊ້ໃນການປະເມີນຫຼັກສູດສາມາດຈັດຈຳແນກໄດ້ເປັນ 3 ກຸ່ມດັ່ງນີ້:

1) ຮູບແບບການປະເມີນທີ່ຍຶດຈຸດມຸ້ງໝາຍເປັນຫຼັກ ຮູບແບບການປະເມີນແນວນີ້ ເນັ້ນການຕັດສິນຄຸນຄ່າຕາມຈຸດມຸ້ງໝາຍເປົ້າໝາຍ ຫຼື ວັດຖຸປະສົງທີ່ກຳນົດໄວ້ໃນແຜນງານໂຄງການ ຫຼື ຫຼັກສູດ ການປະເມີ ນຈຶ່ງມີລັກສະນະຂອງການປຽບທຽບຜົນທີ່ເກີດຂຶ້ນຈິງ ກັບຜົນທີ່ຄາດຫວັງໄວ້ດັ່ງນັ້ນ ຈຸດມຸ້ງໝາຍເປົ້າໝາຍ ຫຼື ວັດຖຸປະສົງຈຶ່ງຖືກໃຊ້ເປັນເກນສຳລັບຕັດສິນຄວາມສຳເລັດຂອງການດຳເນີນງານ ຜູ້ນຳແນວຄິດການປະເມີນແນວນີ້ໄດ້ແກ່ Tyler (1950.1986 ) ແລະ Hammond ( 1959 ).
2) ຮູບແບບການປະເມີນທີ່ຍຶດເກນ ຫຼື ມາດຖານເປັນຫຼັກ ຮູບແບບການປະເມີນແນວນີ້ ເນັ້ນການຕັດສິນຄຸນຄ່າຕາມເກນ ຫຼື ມາດຖານເປັນຫຼັກ ທີ່ມາຂອງເກນ ຫຼື ມາດຖານອາດກຳນົດໂດຍຜູ້ຊ່ຽວຊານ ໜ່ວຍງານເປັນທີ່ຍອມຮັບ ຜູ້ນຳແນວຄິດປະເມີນແນວນີ້ໄດ້ແກ່ Stake ( 1967 ) ແລະ Provus ( 1971 )
3) ຮູບແບບການປະເມີນທີ່ຍຶດຄວາມຕ້ອງການຕັດສິນໃຈເປັນຫຼັກ ຮູບແບບປະເມີນແບບນີ້ຕ້ອງການການສົນທະນາເພື່ອຊ່ວຍຜູ້ບໍລິຫານໃນການຕັດສິນໃຈເລືອກຕ່າງໆໄດ້ຢ່າງເໝາະສົມ ໂດຍເນັ້ນຄວາມຕ້ອງການໃຫ້ສົນທະນາການບໍລິຫານເປັນຫຼັກໃນການປະເມີນ ຜູ້ນຳແນວຄິດປະເມີນແນວນີ້ໄດ້ແກ່ Cronbach ( 1963 ), Alkin ( 1969 ) ແລະ Stufflebam ( 1971 )

**4) ຂັ້ນຕອນການປະເມີນຫຼັກສູດ**

1. ຂັ້ນກຳນົດວັດຖຸປະສົງ ຫຼື ຈຸດມຸ້ງໝາຍໃນການປະເມີນການກຳນົດຈຸດມຸ້ງໝາຍໃນການປະເມີນ ເປັນຂັ້ນຕອນທຳອິດຂອງຂະບວນການໃນການດຳເນີນການປະເມີນຫຼັກສູດ ຜູ້ປະເມີນຕ້ອງກຳນົດ ວັດຖຸປະສົງ ແລະ ເປົ້າໝາຍຂອງການປະເມີນໃຫເຊັດເຈນວ່າປະເມີນຫຍັງຈະເຮັດໃຫ້ເຮົາ ສາມາດກຳນົດວິທີການ ເຄື່ອງມື ແລະ ຂັ້ນຕອນໃນການປະເມີນໄດ້ຢ່າງຖືກຕ້ອງ.
2. ຂັ້ນກຳນົດຫຼັກເກນວິທີການທີ່ຈະໃຊ້ໃນການປະເມີນຜົນ ການກຳນົດເກນ ແລະ ວິທີການປະເມີນ ປຽບເໝືອນເຂັມທິດທີ່ຈະນຳໄປສູ່ເປົ້າໝາຍຂອງການປະເມີນຈະເປັນເຄື່ອງຊີ້ບອກຄຸນນະພາບໃນ ສ່ວນຂອງຫຼັກສູດທີ່ຖືກປະເມີນ ການກຳນົດວິທີການທີ່ຈະໃຊ້ໃນການປະເມີນຜົນເຮັດໃຫ້ເຮົາ ສາມາດດຳເນີນງານໄປຕາມຂັ້ນຕອນໄດ້ຢ່າງເໝາະສົມ.
3. ຂັ້ນການສ້າງເຄື່ອງມື ແລະ ວິທີການເກັບລວບລວມຂໍ້ມູນເຄື່ອງມືທີ່ໃຊ້ໃນການປະເມີນ ຫຼື ເກັບ ລວບລວມຂໍ້ມູນເປັນສິ່ງທີ່ມີຄວາມສຳຄັນທີ່ຈະມີຜົນເຮັດໃຫ້ການປະເມີນນັ້ນໜ້າເຊື່ອຖືຫຼາຍ ຫຼື ໜ່ອຍເທົ່າໃດເຊິ່ງຜູ້ປະເມີນຈະຕ້ອງເລືອກໃຊ້ ແລະ ສ້າງຢ່າງມີຄຸນນະພາບມີຄວາມເຊື່ອຖືໄດ້ ແລະ ມີຄວາມທ່ຽງຕົງສູງ.
4. ຂັ້ນເກັບລວບລວມຂໍ້ມູນ ໃນຂັ້ນການລວບລວມຂໍ້ມູນຜູ້ປະເມີນຕ້ອງເກັບລວບລວມຂໍ້ມູນຕາມ ຂອບເຂດ ແລະ ໄລຍະເວລາທີ່ກຳນົດໄວ້ ຜູ້ເກັບລວບລວມຂໍ້ມູນມີສ່ວນຊ່ວຍໃຫ້ຂໍ້ມູນທີ່ ລວບລວມໄດ້ມີຄວາມທ່ຽງຕົງ ແລະ ໜ້າເຊື່ອຖື.
5. ຂັ້ນວິເຄາະຂໍ້ມູນໃນຂັ້ນນີ້ຜູ້ປະເມີນຈະຕ້ອງກຳນົດວິທີການຈັດລະບົບຂໍ້ມູນພິຈາລະນາເລືອກໃຊ້ ສະຖິຕິໃນການວິເຄາະທີ່ເໝາະສົມ ແລ້ວຈຶ່ງວິເຄາະ ສັງເຄາະຂໍ້ມູນເຫຼົ່ານັ້ນໂດຍປຽບທຽບກັບເກນ ທີ່ໄດ້ກຳນົດໄວ້.
6. ຂັ້ນສະຫຼຸບຜົນການວິເຄາະຂໍ້ມູນ ແລະ ລາຍງານຜົນການປະເມີນ ໃນຂັ້ນນີ້ຜູ້ປະເມີນຈະສະຫຼຸບ ແລະ ລາຍງານຜົນການວິເຄາະຂໍ້ມູນໃນຂັ້ນຕົ້ນຜູ້ປະເມີນຈະພິຈາລະນາຮູບແບບຂອງການລາຍ ງານຜົນວ່າຄວນຈະເປັນຮູບແບບໃດ ແລະ ການລາຍງານຜົນຈະມຸ້ງສະເໜີຂໍ້ມູນທີ່ບົ່ງຊີ້ໃຫ້ເຫັນ ວ່າຫຼັກສູດມີຄຸນນະພາບຫຼືບໍ່ ພຽງໃດ ມີສ່ວນໃດທີ່ຄວນແກ້ໄຂປັບປຸງ ຫຼື ຍົກເລີກ.
7. ຂັ້ນນຳຜົນທີ່ໄດ້ຈາກການປະເມີນໄປພັດທະນາຫຼັກສູດໃນໂອກາດຕໍ່ໄປ.

## 5. ການລາຍງານຜົນການປະຕິບັດຫຼັກສູດ

ການລາຍງານຜົນຂອງການປະຕິບັດຫຼັກສູດໃໝ່ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ຈະຕ້ອງລາຍງານໃຫ້ ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບຂໍ້ມູນທີ່ຄວນປັບປຸງເປັນແຕ່ລະໄລຍະຕາມຂັ້ນຕອນດັ່ງນີ້:

- ຄູສອນລາຍງານໃຫ້ຜູ້ອຳນວຍການໃນໂຮງຮຽນທຸກໆເດືອນ ແລະ ພາກຮຽນ.
- ຜູ້ອຳນວຍການໂຮງຮຽນ ລາຍງານໃຫ້ຜູ້ປົກຄອງເດັກ, ສະມາຄົມພໍ່ແມ່ນັກຮຽນ, ອົງການຈັດຕັ້ງບ້ານ ທຸກໆເດືອນ ແລະ ພາກຮຽນ.
- ຜູ້ອຳນວຍການໂຮງຮຽນລາຍງານໃຫ້ຫ້ອງການສຶກສາທິການເມືອງພາກຮຽນລະຄັ້ງ.
- ຫ້ອງການສຶກສາທິການ ແລະ ກິລາປະຈຳເມືອງລາຍງານໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ພາກຮຽນລະຄັ້ງ.

- ພະແນກສຶກສາທິການ ແລະ ກິລາປະຈຳແຂວງ, ນະຄອນຫຼວງ ລາຍງານໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ພາກສ່ວນກ່ຽວຂ້ອງໃນກະຊວງສຶກສາທິການ ແລະ ກິລາປີລະຄັ້ງ.
- ກົມອະນຸບານ ແລະ ປະຖົມສຶກສາ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ມີໜ້າທີ່ເກັບກຳຂໍ້ມູນ ແລະ ຮຽບຮຽງຫຼັກສູດຄືນໃໝ່ຕາມຄວາມເໝາະສົມ.

## ໃຈຄວາມ

ການສຶກສາຊັ້ນອະນຸບານ ສຶກສາໝາຍເຖິງການລ້ຽງດູ, ການຮຽນ ແລະການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3-6 ປີ. ການພັດທະນາເດັກໃນຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ຂັ້ນຕໍ່ໄປ.

## ຄຳຖາມຄົ້ນຄວ້າ:

1. ການຈັດການສຶກສາໃນຫຼັກສູດສຳລັບເດັກກ່ອນໄວຮຽນ, ຈຸດໝາຍການສຶກສາເດັກຊັ້ນອະນຸບານສຶກສາມີຄືແນວໃດແດ່?
2. ອະທິບາຍ ຫຼັກສູດຊັ້ນອະນຸບານສຶກສາ, ຄວາມໝາຍ ແລະ ຄວາມສຳຄັນຂອງຫຼັກສູດ, ຫຼັກການຂອງຫຼັກສູດຊັ້ນອະນຸບານສຶກສາ, ຈຸດປະສົງຂອງຫຼັກສູດຊັ້ນອະນຸບານສຶກສາ, ເນື້ອໃນ ແລະ ປະສົບການທີ່ຄວນສົ່ງເສີມ?.
3. ບອກຫຼັກການຈັດປະສົບການ, ການມີສ່ວນຮ່ວມຂອງຜູ້ປົກຄອງເດັກໃນການນຳໃຊ້ຫຼັກສູດມີຄືແນວໃດແດ່?
4. ອະທິບາຍການຕິດຕາມ ແລະ ປະເມີນຜົນການນຳໃຊ້ຫຼັກສູດ?
5. ບອກການລາຍງານຜົນການປະຕິບັດຫຼັກສູດເຮັດຄືແນວໃດແດ່?

# ບົດທີ 4
# ສະມັດຖະພາບດ້ານການກຽມຄວາມພ້ອມໃຫ້ແກ່ເດັກຊັ້ນອະນຸບານສຶກສາ

**ຈຳນວນ 15 ຊົ່ວໂມງ**

**ຈຸດປະສົງ ໃຫ້ນັກຮຽນຄູສາມາດ:**

**ວິເຄາະ ສະມັດຖະພາບການກຽມຄວາມພ້ອມໃຫ້ແກ່ເດັກອາຍຸ 3 ປີ ຫາ 6 ປີໄດ້**

## 1. ວິເຄາະ ສະມັດຖະພາບດ້ານການກຽມຄວາມພ້ອມເດັກອາຍຸ 3 ຫາ 6 ປີ

1) ສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ
2) ມາດຖານຂອງສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ
3) ເນື້ອໃນຂອງສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ
4) ຕົວບົ່ງຊີ້ຂອງສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ອະນາໄມ ແລະ ຄວາມປອດໄພ

**ມາດຖານທີ 1: ມີສຸຂະພາບດີ, ຮ່າງກາຍຈະເລີນເຕີບໂຕຕາມໄວອາຍຸ, ມີນິດໄສໃນການອະນາໄມ, ມີການປ້ອງກັນຄວາມປອດໄພໃນການຫຼິ້ນ ແລະ ຮຽນ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 1. ນໍ້າໜັກ ແລະ ລວງສູງຖືກຕ້ອງຕາມມາດຖານ | | ມີນໍ້າໜັກ ແລະ ລວງສູງຢູ່ໃນເກນມາດຖານອາຍຸເຊິ່ງກຳນົດດ້ວຍກະຊວງສາທາລະນະສຸກ | |
| 2. ຮັກສາສຸຂະພາບ, ອະນາໄມຕົນຕົວ ແລະ ຄວາມປອດໄພ | 1. ກິນອາຫານມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນໍ້າສະອາດ | 1. ກິນອາຫານມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນໍ້າສະອາດ | 1. ກິນອາຫານມີປະໂຫຍດຖືກຕ້ອງຕາມເວລາ ແລະ ດື່ມນໍ້າສະອາດ |
| | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນໍ້າ ຫຼື ວິດຖ່າຍ | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນໍ້າ ຫຼື ວິດຖ່າຍ | 2. ລ້າງມືກ່ອນ ແລະ ຫຼັງກິນເຂົ້າ, ຫຼິ້ນເຄື່ອງຫຼິ້ນ ແລະ ໃຊ້ຫ້ອງນໍ້າ ຫຼື ວິດຖ່າຍ |
| | 3. ບອກຄວາມຕ້ອງການເມື່ອຂັບຖ່າຍ, ຂັບຖ່າຍເປັນເວລາ | 3. ບອກຄວາມຕ້ອງການເມື່ອຂັບຖ່າຍ, ຂັບຖ່າຍເປັນເວລາ | 3. ບອກຄວາມຕ້ອງການເມື່ອຂັບຖ່າຍ, ຂັບຖ່າຍເປັນເວລາ |
| | 4. ພັກຜ່ອນ ແລະ ນອນເປັນເວລາ | 4. ພັກຜ່ອນ ແລະ ນອນເປັນເວລາ | 4. ພັກຜ່ອນ ແລະ ນອນເປັນເວລາ |
| | 5. ລະມັດລະວັງ ເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ | 5. ລະມັດລະວັງ ເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ | 5. ລະມັດລະວັງ ເພື່ອໃຫ້ມີຄວາມປອດໄພຕໍ່ຕົນເອງ, ຜູ້ອື່ນໃນເວລາຫຼິ້ນ ແລະ ຮຽນ |

**ມາດຖານທີ 2: ການນຳໃຊ້ກາມຊີ້ນໃຫ່ຍ, ກ້າມຊີ້ນນ້ອຍໃຫ້ມີການເຄື່ອນໄຫວໄດ້ຢ່າງຄ່ອງແຄ້ວ ແລະ ປະສານສຳພັນກັນ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 1. ເຄື່ອນໄຫວຮ່າງກາຍ, ໃຊ້ຂາໄດ້ຢ່າງຄ່ອງແຄ້ວ ແລະ ຊົງຕົວໄດ້ດີ | 1. ຍ່າງຕາມແບບທີ່ກ□ານົດ | 1. ຍ່າງຕໍ່ຕີນໄປທາງໜ້າຕາມແບບທີ່ກຳນົດ | 1. ຍ່າງຕໍ່ຕີນຖອຍຫຼັງຕາມແບບທີ່ກຳນົດ |
| | 2. ເຕັ້ນສອງຂາຂຶ້ນລົງຢູ່ກັບບ່ອນ | 2. ເຕັ້ນຂາດຽວຢູ່ກັບບ່ອນ | 2. ເຕັ້ນຂາດຽວໄປ າງໜ້າຢ່າງຕໍ່ເນື່ອງ |
| | 3. ຍ່າງຂຶ້ນໄດສະຫຼັບຕີນໂດຍໃຊ້ມືຈັບຮາວຂັ້ນໄດ | 3. ຍ່າງຂຶ້ນ, ລົງຂັ້ນໄດສະຫລັບຕີນ | 3. ຍ່າງຂຶ້ນ, ລົງຂັ້ນໄດສະຫລັບຕີນຢ່າງຄ່ອງແຄ່ວ |
| | 4. ແລ່ນ ແລະ ຫຍຸດຢູ່ | 4. ແລ່ນ ແລະ ຢຸດໂດຍສາມາດຊົງຕົວ | 4. ແລ່ນຢ່າງວ່ອງໄວ ແລະ ຢຸດໂດຍບໍ່ໃຫ້ເສຍການຊົງຕົວ |
| 2. ພັດທະນາກ້າມຊີ້ນນ້ອຍ, ເຝິກກ້າມຊີ້ນມື ແລະ ເຝິກການຂຽນ | 1. ຂີດເສັ້ນຊື່, ເສັ້ນກົ່ງ, ເສັ້ນເນີ້ງ, ວົງມົນ | 1. ຂີດເສັ້ນຕໍ່ຈຸດເປັນຮູບພາບ | 1. ຂີດຫຼືແຕ້ມເປັນຮູບພາບ |
| | 2.ຂຽນພະຍັນຊະນະບາງຕົວຕາມຮອຍຈ□າ | 2. ຂຽນພະຍັນຊະນະ, ສະຫຼະເຄົ້າຕາມຮອຍຈ້ຳ | 2. ຂຽນເປັນຄ□າ ແລະ ປະໂຫຍກສັ້ນໆ |
| 3. ພັດທະນາກ້າມຊີ້ນນ້ອຍ ແລະ ຄວາມສຳພັນລະຫວ່າງມືກັບຕາ | 1. ຈີກ ແລະ ຕັດເຈ້ຍໃຫ້ຂາດຈາກັນ | 1. ຕັດເຈ້ຍຕາມທີ່ກ□ານົດໃຫ້ຂາດຈາກກັນ | 1. ຕັດເຈ້ຍຕາມເສັ້ນບໍ່ມີຮອຍບິດບຽວໃຫ້ຂາດຈາກກັນ |
| | 2.ປັ້ນຕາມແບບໂດຍບໍ່ໃຫ້ມີຮູບຮ່າງລະອຽດ | 2.ປັ້ນຕາມແບບໂດຍມີຮູບຮ່າງລະອຽດ | 2. ປັ້ນຕາມແບບໂດຍມີຮູບຮ່າງລະອຽດ, ຄວາມຄິດສ້າງສັນ ແລະ ແປກໃໝ່ |
| | 3. ຮ້ອຍວັດສະດຸທີ່ມີຮູຂະໜາດໃຫ່ຍ | 3.ຮ້ອຍວັດສະດຸທີ່ມີຮູຂະໜາດກາງ | 3. ຮ້ອຍວັດສະດຸທີ່ມີຮູຂະໜາດກາງ |
| | 4.ໂຍນໝາກບານດ້ວຍສອງມືໄປທາງໜ້າຢ່າງບໍ່ມີເປົ້າໝາຍ | 4.ໂຍນໝາກບານດ້ວຍສອງມືໄປທາງໜ້າຢ່າງມີເປົ້າໝາຍໃນໄລຍະທາງສັ້ນ | 4.ໂຍນໝາກບານໄປທາງໜ້າຢ່າງມີເປົ້າໝາຍໃນໄລຍະທາງຍາວ |

| | | | |
|---|---|---|---|
| | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນດ້ວຍສອງມື ໂດຍໃຊ້ແຂນສອງເບື້ອງ ແລະ ຕົນຕົວຊ່ວຍ | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນໄດ້ດ້ວຍສອງມືໂດຍໃຊ້ແຂນ ແລະ ໃຊ້ຕົນຕົວຊ່ວຍ | 5. ຮັບໝາກບານທີ່ເຕັ້ນຂຶ້ນຈາກພື້ນດ້ວຍສອງມືໂດຍບໍ່ ໃຊ້ຕົນຕົວຊ່ວຍ |
| | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆ ຕາມແບບທີ່ກຳນົດ | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆຕາມແບບທີ່ກຳນົດ | 6. ເຄື່ອນໄຫວມື ແລະ ແຂນເຮັດທ່າທາງຕ່າງໆຕາມແບບທີ່ກຳນົດ |

**ມາດຖານທີ 3: ຊ່ວຍເຫຼືອຕົນເອງໄດ້ເໝາະສົມກັບໄວອາຍຸ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 1. ປະຕິບັດກິດຈະກຳປະຈຳວັນໄດ້ດ້ວຍຕົນເອງ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 1. ເລືອກເຄື່ອງນຸ່ງຫົ່ມ, ນຸ່ງເຄື່ອງ ແລະ ແຕ່ງຕົວດ້ວຍຕົນເອງ |
| | 2. ກິນອາຫານ ແລະ ດື່ມນ□າໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳ | 2. ກິນອາຫານ ແລະ ດື່ມນ□າໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 2.ກິນອາຫານ ແລະ ດື່ມນໍ້າໄດ້ດ້ວຍຕົນເອງ |
| | 3. ໃຊ້ຫ້ອງນ□າ, ຫ້ອງຖ່າຍໄດ້ ໂດຍມີຜູ້ຊ່ວຍແນະນຳ | 3. ໃຊ້ຫ້ອງນ□າ, ຫ້ອງຖ່າຍໄດ້ດ້ວຍຕົນເອງໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 3.ໃຊ້ຫ້ອງນໍ້າ, ຫ້ອງຖ່າຍໄດ້ດ້ວຍຕົນເອງ |

## 2. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານອາລົມ-ຈິດໃຈ

1) ມາດຖານຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານອາລົມ-ຈິດໃຈ
2) ເນື້ອໃນຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານອາລົມ-ຈິດໃຈ
3) ຕົວບົ່ງຊີ້ຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານອາລົມ-ຈິດໃຈ

**ມາດຖານ, ເນື້ອໃນ ແລະ ຕົວບົ່ງຊີ້ ຂອງສະມັດຕະພາບການກຽມຄວາມພ້ອມທາງດ້ານອາລົມ- ຈິດໃຈ**

ມາດຖານທີ 1: ມີອາລົມ, ຈິດໃຈທີ່ດີ ແລະ ມີຄວາມສຸກໃນການຫຼິ້ນ ແລະ ຮຽນ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 2. ມີອາລົມ, ຈິດໃຈທີ່ດີໃນການຫຼິ້ນ ແລະ ຮຽນ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ | ສະແດງອອກທາງອາລົມເບີກບານມ່ວນຊື່ນຢ່າງເໝາະສົມກັບໄວອາຍຸ ແລະ ສະຖານະການ |
| 1. ມີຄວາມຮູ້ສຶກທີ່ດີຕໍ່ຕົນເອງ ແລະ ຜູ້ອື່ນ | 1. ໝັ້ນໃຈຕົນເອງ ແລະ ກ້າສະແດງອອກໃນການຫຼິ້ນ ແລະ ຮຽນ | 1. ໝັ້ນໃຈຕົນເອງ ແລະ ກ້າສະແດງອອກໃນການຫຼິ້ນ ແລະ ຮຽນ | 1. ໝັ້ນໃຈຕົນເອງ ແລະກ້າສະແດງອອກໃນການຫຼິ້ນ ແລະ ຮຽນ |
| | 2. ພໍໃຈໃນສິ່ງທີ່ຕົນເຮັດໄດ້, ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ | 2. ພໍໃຈໃນສິ່ງທີ່ຕົນເຮັດໄດ້, ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ | 2. ພໍໃຈໃນສິ່ງທີ່ຕົນເຮັດໄດ້, ຊົມເຊີຍຄວາມສາມາດຂອງຕົນເອງ ແລະ ຜູ້ອື່ນ |

ມາດຖານທີ 2: ມີມາລະຍາ, ມີລະບຽບວິໄນ ແລະ ຄວາມຮັບຜິດຊອບ, ມີຄວາມຊື່ສັດ ແລະ ຈິດໃຈດີງາມ

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 1.ມີມາລະຍາດທີ່ດີ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ, ຍ່າງ ແລະ ກິນ | ມີມາລະຍາດໃນການຟັງ, ເວົ້າ, ນັ່ງ , ຍ່າງ ແລະ ກິນ |
| 2.ມີລະບຽບວິໄນ ແລະ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນໂດຍມີຜູ້ຊ່ວຍແນະນຳ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 1. ເກັບມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້ເຂົ້າໄວ້ໃນບ່ອນມ້ຽນໂດຍດ້ວຍຕົນ |

| | | | |
|---|---|---|---|
| ຄວາມຮັບຜິດຊອບ | | | ເອງ |
| | 2.ອົດທົນປະຕິບັດກິດຈະກ□າທີ່ໄດ້ຮັບ ມອບໝາຍໂດຍມີຜູ້ຊ່ວຍແນະນຳ | 2. ອົດທົນປະຕິບັດກິດຈະກ□າທີ່ໄດ້ຮັບມອບ ໝາຍສຳເລັດ ໂດຍມີຜູ້ຊ່ວຍແນະນຳບາງຄັ້ງ | 2. ອົດທົນປະຕິບັດກິດຈະກ□າທີ່ ໄດ້ຮັບມອບໝາຍດ້ວຍຕົນເອງ |
| 3. ມີຄວາມສັດຊື່ ແລະ ຍອມຮັບຄວາມຜິດພາດຂອງ ຕົນເອງ ແລະ ຜູ້ອື່ນ | 1. ຮູ້ຈັກເຄື່ອງໃຊ້ຂອງເອງ | 1. ຮູ້ຈັກເຄື່ອງໃຊ້ຂອງເອງ ແລະ ເຄື່ອງຂອງຜູ້ ອື່ນ | 1. ຮູ້ຈັກເຄື່ອງໃຊ້ຂອງເອງ |
| | 2. ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ເຮັດຜິດ | 2. ຂໍໂທດເມື່ອຕົນເອງເຮັດບໍ່ຖືກຕ້ອງ ແລະ ໃຫ້ ອະໄພຜູ້ອື່ນທີ່ເຮັດຜິດ | 2. ຂໍໂທດເມື່ອຕົນເອງເຮັດບໍ່ ຖືກຕ້ອງ ແລະ ໃຫ້ອະໄພຜູ້ອື່ນທີ່ ເຮັດຜິດ |
| 4. ຄວາມຮັກ, ນັບຖື, ເມດ ຕາກະລຸນາ ແລະ ຊ່ວຍເຫຼືອ ແບ່ງປັນຜູ້ອື່ນ | 1. ສະແດງຄວາມຮັກແພງນັບຖືຕໍ່ຜູ້ ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ຄູ່ | 1. ສະແດງຄວາມຮັກແພງນັບຖືຕໍ່ຜູ້ອາວຸໂສ, ພໍ່ ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ຄູ່ | 1. ສະແດງຄວາມຮັກແພງນັບຖືຕໍ່ ຜູ້ອາວຸໂສ, ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ໝູ່ຄູ່ |
| | 2. ແບ່ງປັ່ນສິ່ງຂອງ ແລະ ໃຫ້ຄວາມ ຊ່ວຍເຫຼືອຜູ້ອື່ນ | 2. ແບ່ງປັ່ນສິ່ງຂອງ ແລະ ໃຫ້ຄວາມຊ່ວຍເຫຼືອຜູ້ ອື່ນ | 2. ແບ່ງປັ່ນສິ່ງຂອງ ແລະ ໃຫ້ ຄວາມຊ່ວຍເຫຼືອຜູ້ອື່ນ |
| 5. ມີຄວາມຮັກແພງ ແລະ ຊ່ວຍລ້ຽງດູສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູ ສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູ ສັດລ້ຽງ | ສະແດງຄວາມຮັກແພງ ແລະ ຊ່ວຍລ້ຽງດູສັດລ້ຽງ |

**ມາດຖານທີ 3: ມີຄວາມສົນໃຈ, ພໍໃຈ, ມ່ວນຊື່ນ, ກ້າມຫານສະແດງອອກທາງສີລະປະກຳ, ສີລະປະດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2 (4-5ປີ) | ອະນຸບານ3 (5-6ປີ) |
| 1. ສົນໃຈ, ພໍໃຈ, ມ່ວນຊື່ນ ກັບສີລະປະກຳ, ສີລະປະ | ສົນໃຈ, ພໍໃຈ, ມ່ວນຊື່ນກັບສີລະປະກຳ, ສີລະປະດົນຕີ, ການຫຼິ້ນ ແລະ ການອອກ | ສົນໃຈ, ພໍໃຈ, ມ່ວນຊື່ນກັບສີລະປະກຳ, ສີລະປະ | ສົນໃຈ, ພໍໃຈ, ມ່ວນຊື່ນກັບສີລະ ປະກຳ, ສີລະປະດົນຕີ, ການຫຼິ້ນ |

| | | | |
|---|---|---|---|
| ດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ | ກຳລັງກາຍ | ດົນຕີ, ການຫຼິ້ນ ແລະ ການອອກກຳລັງກາຍ | ແລະ ການອອກກຳລັງກາຍ |
| 2. ກ້າຫານ ແລະ ສະແດງອອກທາງດ້ານສິລະປະດົນຕີ | ສະແດງການເຄື່ອນໄຫວປະກອບເພງ, ຈັງຫວະດົນຕີ, ຕາມຄຳສັ່ງ ແລະ ຈິນຕະນາການ | ການເຄື່ອນໄຫວປະກອບເພງ, ຈັງຫວະດົນຕີ, ຕາມຄຳສັ່ງ ແລະ ຈິນຕະນາການ | ການເຄື່ອນໄຫວປະກອບເພງ, ຈັງຫວະດົນຕີ, ຕາມຄຳສັ່ງ ແລະ ຈິນຕະນາການ |
| 3. ກ້າຫານ ແລະ ສະແດງຜົນງານທາງດ້ານສິລະປະກຳ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດ ຕາມແບບ ແລະ ຈິນຕະນາການ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດ ຕາມແບບ ແລະ ຈິນຕະນາການ | ສະແດງຜົນງານການແຕ້ມ, ປັ້ນ, ຮ້ອຍ, ຕັດ, ຕິດ ຕາມແບບ ແລະ ຈິນຕະນາການ |

## 3. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານສັງຄົມ

1) ມາດຖານຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສັງຄົມ
2) ເນື້ອໃນຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສັງຄົມ
3) ຕົວບົ່ງຊີ້ຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສັງຄົມ

**ມາດຖານ, ເນື້ອໃນ ແລະ ຕົວບົ່ງຊີ້ ຂອງສະມັດຕະພາບການກຽມຄວາມພ້ອມທາງດ້ານສັງຄົມ**

**ມາດຖານທີ1: ຮັກທຳມະຊາດ, ສິ່ງແວດລ້ອມ, ວັດທະນະທຳອັນດີງາມຂອງຊາດ ແລະ ທ້ອງຖິ່ນ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3–4ປີ) | ອະນຸບານ2 (4–5ປີ) | ອະນຸບານ3 (5–6ປີ) |
| 1. ປົກປັກຮັກສາທ□ຳມະ | 1. ສະແດງຄວາມສົນໃຈໃນການບົວລະບັດ | 1. ສະແດງຄວາມສົນໃຈໃນການບົວລະບັດ | 1. ສະແດງຄວາມສົນໃຈໃນ |

| | | | |
|---|---|---|---|
| ຊາດ, ແລະ ປະຫຍັດສິ່ງຂອງເຄື່ອງໃຊ້ | ຮັກສາທຳມະຊາດ ແລະ ສິ່ງແວດລ້ອມ | ຮັກສາທຳມະຊາດ ແລະ ສິ່ງແວດລ້ອມ | ການປົວລະບັດຮັກສາທຳມະຊາດ ແລະ ສິ່ງແວດລ້ອມ |
| | 2. ຖິ້ມຂີ້ເຫຍື້ອຖືກບ່ອນ | 2. ຖິ້ມຂີ້ເຫຍື້ອຖືກບ່ອນ | 2. ຖິ້ມຂີ້ເຫຍື້ອຖືກບ່ອນ |
| | 3. ຊ່ວຍປົວລະບບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນ | 3. ຊ່ວຍປົວລະບບັດຮັກສາຕົ້ນໄມ້ ແລະ ສະຖານທີ່ສຳຄັນ | 3. ຊ່ວຍປົວລະບບັດຮັກສາ ຕົ້ນໄມ້ ແລະ ສະຖານທີ່ສຳຄັນ |
| | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດ ໂດຍມີຜູ້ຊ່ວຍແນະນຳ | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 4. ນຳໃຊ້ສິ່ງຂອງເຄື່ອງໃຊ້, ນ້ຳ ແລະ ໄຟຢ່າງປະຢັດໄດ້ດ້ວຍຕົນເອງ |
| 2.ມີສຳມາຄາລະວະ, ມາລະຍາດຕາມວັດທະນະທຳ ແລະ ຮີດຄອງປະເພນີລາວ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫ່ຍ, ຜູ້ອາວຸໂສ ແລະ ພະສົງໂດຍມີຜູ້ແນະນຳ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫ່ຍ, ຜູ້ອາວຸໂສ ແລະ ພະສົງໂດຍມີຜູ້ແນະນຳໃນບາງຄັ້ງ | 1. ສະແດງຄວາມເຄົາລົບນັບຖືຜູ້ໃຫ່ຍ, ຜູ້ອາວຸໂສ ແລະ ພະສົງໄດ້ດ້ວຍຕົນເອງ |
| | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະ ໂດຍມີຜູ້ຊ່ວຍແນະນຳ | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 2. ປະຕິບັດຕົນໃນການນຸ່ງຖື, ເຄື່ອນໄຫວໄປມາໄດ້ເໝາະສົມຕາມກາລະເທສະໄດ້ດ້ວຍຕົນເອງ |
| | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ,ວັດທະນະທຳຂອງຊາດ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳ | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ,ວັດທະນະທຳຂອງຊາດ ແລະ ທ້ອງຖິ່ນ ໂດຍມີຜູ້ຊ່ວຍແນະນຳໃນບາງຄັ້ງ | 3. ສະແດງຄວາມເຄົາລົບນັບຖືສະຖານທີ່ສຳຄັນທາງປະຫວັດສາດ,ວັດທະນະທຳຂອງຊາດ ແລະ ທ້ອງຖິ່ນໄດ້ດ້ວຍຕົນເອງ |

**ມາດຖານທີ2: ປະຕິບັດຕົນເປັນສະມາຊິກທີ່ດີຂອງຄອບຄົວ, ໂຮງຮຽນສັງຄົມ ແລະ ຢູ່ຮ່ວມກັນກັບຜູ້ອື່ນໄດ້ຢ່າງມີຄວາມສຸກ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2(4-5ປີ) | ອະນຸບານ3 (5-6ປີ) |
| 1. ຫຼິ້ນ ແລະ ເຮັດວຽກຮ່ວມກັບຜູ້ອື່ນໄດ້ | 1. ລໍຖ້າຕາມລ□າດັບກ່ອນ, ຫຼັງ ແລະ ຍອມຮັບຄໍາຄິດເຫັນຂອງຜູ້ອື່ນ | 1.ລໍຄອຍຕາມລ□າດັບກ່ອນ, ຫຼັງ ແລະ ຍອມຮັບຄໍາຄິດເຫັນຂອງຜູ້ອື່ນ | 1. ລໍຄອຍຕາມລ□າດັບກ່ອນ, ຫຼັງ ແລະ ຍອມຮັບຄໍາຄິດເຫັນຂອງຜູ້ອື່ນ |
| | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ | 2. ຫຼິ້ນ ແລະ ຮຽນຮ່ວມກັບເດັກຄົນອື່ນເປັນກຸ່ມ |
| 2. ປະຕິບັດຕົນໃນການເປັນສະມາຊິກທີ່ດີຂອງໂຮງຮຽນແບະ ສັງຄົມ | 1. ປະຕິບັດຕົນຕາມຂໍ້ຕົກລົງການເຄື່ອນໄຫວກິດຈະກໍາການຫຼິ້ນ ແລະ ຮຽນໄດ້ໂດຍມີຜູ້ຊ່ວຍແນະນໍາ | 1. ປະຕິບັດຕົນຕາມຂໍ້ຕົກລົງການເຄື່ອນໄຫວກິດຈະກໍາການຫຼິ້ນ ແລະ ຮຽນໄດ້ໂດຍມີຜູ້ຊ່ວຍແນະນໍາ | 1. ປະຕິບັດຕົນຕາມຂໍ້ຕົກລົງການເຄື່ອນໄຫວກິດຈະກໍາການຫຼິ້ນ ແລະ ຮຽນໄດ້ໂດຍມີຜູ້ຊ່ວຍແນະນໍາ |
| | 2 .ປະຕິບັດຕົນເປັນຜູ້ນ□າພາໝູ່ແລະຜູ້ເຮັດຕາມໝູ່ | 2. ປະຕິບັດຕົນເປັນຜູ້ນ□າພາໝູ່ແລະຜູ້ເຮັດຕາມໝູ່ | 2. ປະຕິບັດຕົນເປັນຜູ້ນ□າພາໝູ່ແລະຜູ້ເຮັດຕາມໝູ່ |

## 4. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

1) ມາດຖານຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ
2) ເນື້ອໃນຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ
3) ຕົວບົ່ງຊີ້ຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ

**ມາດຖານ, ເນື້ອໃນ ແລະ ຕົວບົ່ງຊີ້ ຂອງສະມັດຕະພາບການກຽມຄວາມພ້ອມທາງດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ**

ມາດຖານທີ1: ມີຄວາມສາມາດໃນການຄິດ ແລະ ການແກ້ໄຂບັນຫາໄດ້ຢ່າງເໝາະສົມກັບໄວອາຍຸ

| ເນື້ອໃນ | ຕົວບອກຊີ້ | | |
|---|---|---|---|
| | ອະນຸບານ1 (3-4ປີ) | ອະນຸບານ2(4-5ປີ) | ອະນຸບານ3 (5-6ປີ) |
| ເນື້ອໃນທີ1: ຈຳນວນ | | | |
| 1. ເຂົ້າໃຈການສະແດງ ຈຳນວນ | 1. ນັບປາກເປົ່າຈາກ1 ເຖິງ 10 | 1. ນັບປາກເປົ່າຈາກ 1 ເຖິງ 10 ຕາມ ລຳດັບບໍ່ໃຫ້ຂ້າມ | 1. ນັບປາກເປົ່າຈາກ 1 ເຖິງ 20 |
| 1. ການໃຊ້ຈ□ານວນບອກ ສິ່ງທີ່ໄດ້ຈາກການນັບ ແລະ ຮູ້ຄ່າຈຳນວນ. | 1. ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 5 ຢ່າງໂດຍການນັບ ແລະ ອ່ານຕົວ ເລກ<br>2. ສະແດງສິ່ງຕ່າງໆຕາມຈ□ານວນທີ່ ກຳນົດໃຫ້ແຕ່ 1ເຖິງ 5 | 1. ບອກຈ□ານວນຂອງສິ່ງຕ່າງໆບໍ່ເກີນ 10 ຢ່າງໂດຍການນັບ, ອ່ານຕົວເລກ<br>2. ສະແດງສິ່ງຕ່າງໆຕາມຈຳນວນທີ່ ກຳນົດໃຫ້ ແຕ່ 1 ເຖິງ 10 | 1. ນັບຖອຍຫຼັງປາກເປົ່າຈາກ 10 ເຖິງ 1<br>2. ບອກຈຳນວນຂອງສິ່ງຕ່າງໆບໍ່ເກີນ 20ຢ່າງ ໂດຍການັບ<br>3. ສະແດງສິ່ງຕ່າງໆ ຕາມຈ□ານວນທີ່ ກຳນົດໃຫ້ແຕ່ 1 ເຖິງ 20 |
| 1. ການອ່ານຕົວເລກອາຣັບ ແລະ ຕົວເລກລາວ | ອ່ານຕົວ ເລກອາຣັບ 1 ເຖິງ 5 | ອ່ານຕົວ ເລກອາຣັບ 1 ເຖິງ 10 | 1. ອ່ານຕົວເລກອາຣັບແຕ່ 1 ເຖິງ 20<br>2. ອ່ານຕົວເລກລາວແຕ່ 1 ເຖິງ 9 |
| 1. ການຂຽນຕົວເລກອາຣັບ ແລະ ສະແດງຈຳນວນ | 1. ລະບຸຕົວເລກອາຣັບສະແດງ ຈຳນວນຂອງສິ່ງຕ່າງໆຕັ້ງແຕ່ 1 ເຖິງ 5<br>2. ຂຽນຕົວເລກອາຣັບແຕ່ 1 ເຖິງ 9 ຕາມຮອຍຈ້ຳ | 1. ລະບຸຕົວເລກອາຣັບສະແດງຈ□ານວນ ຂອງສິ່ງຕ່າງໆຕັ້ງແຕ່ 1 ເຖິງ 10<br>2. ຂຽນຕົວເລກອາຣັບແຕ່ 1 ເຖິງ 9 | 1. ລະບຸຕົວເລກອາຣັບສະແດງຈ□ານວນຂອງ ສິ່ງຕ່າງໆຕັ້ງແຕ່ 1 ເຖິງ 10<br>2. ຂຽນຕົວເລກອາຣັບແຕ່ 1 ເຖິງ 9 |
| 1. ການປຽບທຽບຈຳນວນ | 1. ປຽບທຽບຂອງສິ່ງຈ□ານວນຕ່າງໆ ສອງກຸ່ມໂດຍແຕ່ລະກຸ່ມມີຈຳນວນບໍ່ ເກີນ 5 ວ່າມີຈຳນວນບໍ່ເທົ່າກັນ ຫຼື ບໍ່ | ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມ ໂດຍແຕ່ລະກຸ່ມມີຈຳນວນບໍ່ເກີນ 10 ວ່າມີ ຈຳນວນເທົ່າກັນ ຫຼື ບໍ່ເທົ່າກັນ, ກຸ່ມໃດມີຈຳ | ປຽບທຽບຈຳນວນຂອງສິ່ງຕ່າງໆສອງກຸ່ມໂດຍ ແຕ່ລະກຸ່ມມີຈຳນວນບໍ່ເກີນ 20ວ່າມີຈຳນວນ ເທົ່າກັນ ຫຼື ບໍ່ເທົ່າກັນ, ກຸ່ມໃດມີຈຳນວນຫຼາຍ |

| | ເທົ່າກັນ | ນອນຫຼາຍກວ່າ ຫຼື ໜ້ອຍກວ່າ | ກວ່າ ຫຼື ໜ້ອຍກວ່າ |
|---|---|---|---|
| 1. ການລຽນລ□າດັບ<br>ຈຳນວນ | | 1. ບອກອັນດັບຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ<br>2. ລະບຸສິ່ງທີ່ຢູ່ໃນອັນດັບທີ່ກ□ານົດໃຫ້ | |
| 1. ການຮ່ວມກຸ່ມ<br>- ຄວາມໝາຍຂອງການຮ່ວມກຸ່ມ<br>- ການຮ່ວມສິ່ງຕ່າງໆສອງກຸ່ມ | ບອກໄວ້ວ່າເມື່ອນຳສິ່ງຕ່າງໆສອງກຸ່ມມາຮ່ວມກັນຈະມີຈຳນວນຫຼາຍຂຶ້ນ | ບອກຈຳນວນທັງໝົດຈາກການຮ່ວມສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 5 | 1. ບອກຈ□ານວນທັງໝົດຈາກການຮ່ວມສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 10<br>2. ບອກຈ□ານວນຂອງສິ່ງຕ່າງໆສອງກຸ່ມທີ່ມີຜົນລວມບໍ່ເກີນ 10 |
| 1. ການແຍກກຸ່ມ<br>- ຄວາມໝາຍຂອງການແຍກກຸ່ມ<br>- ການແຍກກຸ່ມຍ່ອຍອອກຈາກກຸ່ມໃຫ່ຍ | ບອກໄດ້ວ່າເມື່ອນຳສິ່ງຕ່າງໆອອກຈາກກຸ່ມໃຫ່ຍຈຳນວນຂອງສິ່ງຕ່າງໆໃນກຸ່ມຈະໜ້ອຍລົງ | ບອກຈຳນວນທີ່ເຫຼືອເມື່ອແຍກຸ່ມ ຍ່ອຍອອກຈາກກຸ່ມໃຫ່ຍມີຈຳນວນບໍ່ເກີນ 5 | ບອກຈຳນວນທີ່ເຫຼືອເມື່ອແຍກຸ່ມ ຍ່ອຍອອກຈາກກຸ່ມໃຫ່ຍມີຈຳນວນບໍ່ເກີນ 10 |
| ເນື້ອໃນທີ 2: ການວັດແທກ | | | |
| ເຂົ້າໃຈພື້ນຖານກ່ຽວກັບການວັກແທກຄວາມຍາວ, ນໍ້າໜັກ, ປະລິມານ, ເງິນ ແລະ ເວລາ<br>1. ການວັດແທກຄວາມຍາວ<br>- ການປຽບທຽບຄວາມຍາວ<br>- ການລຽນລ□າດັບຄວາມຍາວ<br>- ການວັດແທກຄວາມຍາວ | ປຽບທຽບຄວາມຍາວ, ຄວາມສູງຂອງສິ່ງຕ່າງໆໂດຍໃຊ້ຄຳວ່າ : ສັ້ນກວ່າ, ຍາວກວ່າ, ສູງກວ່າ, ຕໍ່າກວ່າ, ຍາວເທົ່າກັນ ຫຼື ສູງເທົ່າກັນ | ລຽນລຳດັບຄວາມຍາວ ແລະ ຄວາມສູງຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງໂດຍໃຊ້ຄຳສັບວ່າ: : ສັ້ນກວ່າ, ຍາວກວ່າ, ສູງກວ່າ, ຕໍ່າກວ່າ, ຍາວເທົ່າກັນ ຫຼື ສູງເທົ່າກັນ | ວັດແທກ, ບອກຄວາມຍາວ ແລະ ຄວາມສູງຂອງສິ່ງຕ່າງໆທີ່ກຳນົດໃຫ້ ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ |

| | | | |
|---|---|---|---|
| ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍວັດແທກທີ່ບໍ່ເກີນມາດຖານ | | | |
| 1. ການວັດແທກນ້ຳໜັກ<br>- ການປຽບທຽບນ້ຳໜັກ<br>- ການລຽນລ□າດັບນ□າໜັກ<br>- ການຊັ່ງໂດຍໃຊເຄື່ອງມື ແລະ ຫົວໜ່ວຍການວັດແທກທີ່ບໍ່ເປັນມາດຖານ | ປຽບທຽບນ້ຳໜັກຂອງສິ່ງຕ່າງໆໂດຍໃຊ້ຄຳວ່າ: ໜັກກວ່າ, ເບົາກວ່າ, ໜັກເທົ່າກັນ | ລຽນນ້ຳໜັກຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງ ໂດຍໃຊ້ຄຳວ່າ : ໜັກກວ່າ, ເບົາກວ່າ, ໜັກເທົ່າກັນ | ສັ່ງ ແລະ ບອກນ້ຳໜັກຂອງສິ່ງຕ່າງໆທີ່ກຳນົດໃຫ້ ໂດຍໃຊ້ເຄື່ອງມື ແລະ ຫົວໜ່ວຍທີ່ບໍ່ເປັນມາດຖານ |
| 1. ການວັດແທກປະລິມານ<br>- ການປຽບທຽບປະລິມານ<br>- ການລຽນລ□າດັບປະລິມານ<br>- ການຜອງໂດຍການໃຊ້ເຄື່ອງມື,ຫົວໜ່ວຍທີ່ບໍ່ເປັນພື້ນຖານ | ປຽບທຽບປະລິມານຂອງສິ່ງຕ່າງໆ ໂດຍໃຊ້ຄຳວ່າ: ປະລິມານຫຼາຍກວ່າ ,ປະລິມານໜ້ອຍກວ່າ,ປະລິມານເທົ່າກັນ | ລຽນລຳດັບປະລິມານຂອງສິ່ງຕ່າງໆບໍ່ເກີນ 3 ຢ່າງໂດຍໃຊ້ຄຳວ່າ: ປະລິມານຫຼາຍກວ່າ,ປະລິມານໜ້ອຍກວ່າ, ປະລິມານເທົ່າກັນ | ຜອງ ແລະ ບອກປະລິມານຂອງສິ່ງຕ່າງໆທີ່ກຳນົດໃຫ້ໂດຍໃຊ້ເຄື່ອງມື ແລະ ຫົວ ໜ່ວຍທີ່ບໍ່ເປັນມາດຖານ |
| 1. ເງິນກີບ:ຊະນິດແລະຄ່າຂອງເງິນກີບ | | | ບອກຊະນິດ ແລະ ຄ່າຂອງເງິນກີບໃບຫ້າ 500 ກີບ, 1000ກີບ 2000 ກີບໃນການແລກປ່ຽນສິນຄ້າ |
| 1 ເວລາ<br>2 ຊ່ວງເວລາໃນແຕ່ລະມື້ | ບອກກິດຈະກຳຫຼືເຫດການໃນຊີວິດປະຈຳວັນທີ່ເກີດຂຶ້ນໃນໄລຍະເວລາກາງເວັນແລະກາງຄືນ | 3. ບອກກິດຈະກຳຫຼືເຫດການວິດປະຈຳວັນທີເກີດຂຶ້ນໃນໄລຍະເວລາຕອນເຊົ້າ, ຕອນທ່ຽງ ແລະ ຕອນແລງ | |
| 1.ຊື່ວັນໃນອາທິດ,ຄຳທີ່ໃຊ້ບອກກ່ຽວກັບວັນແລະ | | 1. ລຽນລຳດັບຊື່ວັນໃນໜຶ່ງອາທິດ,<br>2. ບອກກິດຈະກ□າຫຼືເຫດການໃນ | 1. ລຽນລຳດັບຊື່ວັນໃນໜຶ່ງອາທິດ ແລະ ຊື່ເດືອນໃນໜຶ່ງປີ |

| | | | |
|---|---|---|---|
| ເດືອນໃນໜຶ່ງປີ | | ໄລຍະເວລາໜຶ່ງອາທິດ | 2. ບອກກິດຈະກ□າຫຼືເຫດການທີ່ເກີດຂຶ້ນມື້ນີ້, ມື້ວານ, ມື້ອື່ນ |
| ເນື້ອໃນທີ 3: ເລຂາຄະນິດ | | | |
| 1. ຮູ້ຈັກໃຊ້ຄໍາໃນການບອກຕໍາແໜ່ງ, ທິດທາງ ແລະ ໄລຍະທາງ<br>- ການບອກຕ□າແໜ່ງ<br>- ທິດທາງ<br>- ໄລຍະທາງຂອງສິ່ງຕ່າງໆ | ບອກຕໍາແໜ່ງຂອງສິ່ງຕ່າງໆທີ່ກໍານົດໂດຍໃຊ້ຄໍາວ່າ: ເທິງ, ລຸ່ມໃນ, ນອກ | 1. ບອກຕ□າແໜ່ງຂອງສິ່ງຕ່າງໆທີ່ກໍານົດໂດຍໃຊ້ຄໍາວ່າ: ເທິງ, ລຸ່ມໃນ, ນອກ<br>2. ບອກທິດທາງຂອງສິ່ງຕ່າງໆທີ່ກໍານົດໂດຍໃຊວ່າ: ໜ້າ ຫຼັງ ກາງ<br>3. ສະແດງສິ່ງຕ່າງໆຕາມຕ□າແໜ່ງທີ່ກໍານົດ | 1. ບອກຕ□າແໜ່ງຂອງສິ່ງຕ່າງໆທີ່ກ□ານົດໂດຍໃຊ້ຄໍາວ່າ: ເທິງ, ລຸ່ມໃນ, ນອກ<br>2. ບອກທິດທາງຂອງສິ່ງຕ່າງໆທີ່ກ□ານົດໂດຍໃຊວ່າ: ໜ້າ ຫຼັງ ກາງເບື້ອງຊ້າຍເບື້ອງຂວາ<br>3. ສະແດງສິ່ງຕ່າງໆຕາມຕ□າແໜ່ງທີ່ກ□ານົດໂດຍໃຊ້ຄໍາວ່າ:ໄກ້,ໃກ້<br>4. ສະແດງສິ່ງຕ່າງໆຕາມຕ□າແໜ່ງທິດທາງ ແລະ ໄລຍະທາງທີ່ກໍານົດ |
| 1 ຮູ້ຈັກຈໍາແນກຮູບເລຂາຄະນິດ ແລະ ເຂົ້າໃຈການປ່ຽນແປງຮູບເລຂາຄະນິດທີ່ເກີດຈາກການຈັດຮູບແບບ<br>2 ຮູບເລຂາຄະນິດສາມມິຕິປະກອບມີ: ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນ, ທາດຫຼຽ່ມ | ສະແດງສິ່ງຕ່າງໆໃນຊີວິດປະຈໍາວັນທີ່ຄືກັນ ຫຼື ຄ້ານຄືກັນ: : ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນທີ່ກໍານົດໃຫ້ | 1. ສະແດງສິ່ງຕ່າງໆໃນຊີວິດປະຈ□າວັນທີ່ຄືກັນ ຫຼື ຄ້ານຄືກັນ: : ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນ, ທາດຫຼ່ຽມທີ່ກໍານົດໃຫ້<br>2.ຈ□າແນກຮູບຊົງ: ທໍ່ກົມ, ກ້ອນສາກ ,ກັບສາກ, ໜ່ວຍມົນ | 1. ສະແດງສິ່ງຕ່າງໆໃນຊີວິດປະຈ□າວັນທີ່ຄືກັນ ຫຼື ຄ້ານຄືກັນ: : ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນ, ທາດຫຼ່ຽມທີ່ກໍານົດໃຫ້<br>2.ຈ□າແນກຮູບຊົງ: ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນ, ທາດຫຼ່ຽມ |
| 1. 2ຮູບເລຂາຄະນິດ2ມິຕິປະກອບມີ: ຮູບວົງມົນ, ຮູບສາມແຈ, ຮູບຈະຕຸ | | | 1. ສະແດງສິ່ງຕ່າງໆໃນຊີວິດປະຈ□າວັນທີ່ຄືກັນ ຫຼື ຄ້ານຄືກັນ: : ທໍ່ກົມ, ກ້ອນສາກ,ກັບສາກ, ໜ່ວຍມົນ, ທາດຫຼ່ຽມທີ່ກໍານົດໃຫ້ |

| | | | |
|---|---|---|---|
| ລັດ, ຮູບສີ່ແຈ | | | 2.ຈ□າແນກຮູບຊົງ: ທ່ອນໄມ້, ກ້ອນສາກ,ກັບສາກ, ໜ່ວຍມົນ |
| 1. ການປ່ຽນແປງຮູບເລຂາຄະນິດສອງມິຕິ. | | ບອກການປ່ຽນແປງທີ່ເກີດຂຶ້ນຈາກການພັບຮູບສີ່ແຈ, ຮູບສາມແຈ | ບອກການປ່ຽນແປງທີ່ເກີດຂຶ້ນຈາກການພັບຮູບສີ່ແຈ, ຮູບສາມແຈ |
| 2. ການສ້າງສັນສິລະປະຈາກຮູບເລຂາຄະນິດສາມມິຕິ ແລະ ສອງມິຕິ | ສ້າງສັນສິລະປະທ່ອນໄມ້ ,ກ້ອນສາກ ແລະ ໜ່ວຍມົນ | ສ້າງສັນສິລະປະຈາກທ່ອນໄມ້, , ກ້ອນສາກ, ໜ່ວຍມົນ, ທາດຫຼຽມ | 1. ສ້າງສັນສິລະປະຈາກທ່ອນໄມ້, , ກ້ອນສາກ, ໜ່ວຍມົນ, ທາດຫຼຽມ<br>2. ສ້າງສັນສິລະປະຮູບວົງມົນ, ສີ່ແຈ ສາມແຈ |
| ເນື້ອໃນທີ 4: ພຶດຊະຄະນິດ | | | |
| ເຂົ້າໃຈແບບຮູບທີ່ມີຮູບຮ່າງ , ຂະໜາດສິ່ງທີ່ສ□າພັນກັນຢ່າງໃດຢ່າງໜຶ່ງ | | 1. ວາງຮູບໃຫ້ຄືກັນກັບແບບຮູບທີ່ກໍານົດຕາມສີ, ຮບຮ່າງ,ຂະໜາດ<br>2.ວາງຮູບໃຫ້ຄືກັນກັບແບບຮູບທີ່ກໍານົດຕາມສີ,ຂະໜາດ, ຮູບຊົງ , ເລຂາຄະນິດ | 1. ຕໍ່ຮູບໃຫ້ເຂົ້າຊຸດກັບແບບຮູບທີ່ກ□ານົດ<br>2. ສ້າງແບບຮູບຕາມຄວາມຄິດຂອງຕົນເອງ |

**ມາດຖານທີ2:ມີຄວາມສົນໃຈຮຽນຮູ້ສິ່ງຕ່າງໆແລະສະແຫວງຫາຄວາມຮູ້ທົ່ວໄປໄດ້ເໝາະສົມກັບໄວອາຍຸ**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | **ອະນຸບານ1 (3-4)ປີ** | **ອະນຸບານ2(4-5)ປີ** | **ອະນຸບານ3 (5-6)ປີ** |
| 1. ຮຽນຮູ້ສິ່ງຕ່າງໆໂດຍຜ່ານປະສາດສໍາຜັດທັງ5 | ບອກລັກສະນະຄວາມຄືກັນແລະແຕກຕ່າງກັນຂອງສິ່ງຕ່າງໆດ້ວຍການເບິ່ງເຫັນ, ຟັງສຽງ,ຊີມລົດ,ດົມກິ່ນ,ຈັບບາຍ | ບອກລັກສະນະຄວາມຄືກັນແລະແຕກຕ່າງກັນຂອງສິ່ງຕ່າງໆດ້ວຍການເບິ່ງເຫັນ,ຟັງສຽງ,ຊີມລົດ,ດົມກິ່ນ,ຈັບບາຍ | ບອກລັກສະນະຄວາມຄືກັນແລະແຕກຕ່າງກັນຂອງສິ່ງຕ່າງໆດ້ວຍການເບິ່ງເຫັນ,ຟັງສຽງ,ຊີມລົດ, ດົມກິ່ນ,ຈັບບາຍ |
| 1. ຮຽນຮູ້ທໍາມະຊາດແລະ | ບອກຊື່ແລະຄວາມສໍາຄັນຂອງທໍາມະຊາດແລະສິ່ງແວດອລ້ອມທີ່ຢູ່ອ້ອມຕົວ | ບອກຊື່ແລະຄວາມສໍາຄັນຂອງທໍາມະຊາດແລະສິ່ງແວດລ້ອມທີ່ຢູ່ອ້ອມຕົວ | ບອກຊື່ແລະຄວາມສໍາຄັນຂອງທໍາມະຊາດແລະສິ່ງແວດລ້ອມ |

| | | | |
|---|---|---|---|
| ສິ່ງແວດລ້ອມ | | | ທີ່ຢູ່ອ້ອມຕົວ |
| 1. ຮຽນຮູ້ສິ່ງຕ່າງໆພາຍໃນເຮືອນ,ໂຮງຮຽນແລະທ້ອງຖິ່ນ | 1. ບອກຊື່ແລະຄວາມຫມາຍຂອງວັນບຸນປະເພນີຂອງທ້ອງຖິ່ນແລະວັນສໍາຄັນທາງປະຫວັດສາດ | 1. ບອກຊື່ແລະຄວາມຫມາຍຂອງວັນບຸນປະເພນີຂອງທ້ອງຖິ່ນແລະວັນສໍາຄັນທາງປະຫວັດສາດ | 1. ບອກຊື່ແລະຄວາມຫມາຍຂອງວັນບຸນປະເພນີຂອງທ້ອງຖິ່ນແລະວັນສໍາຄັນທາງປະຫວັດສາດ |
| | 2. ບອກຊື່ແລະຄວາມສ□າຄັນຂອງອາຊີບບຸກຄົນພາຍໃນຄອບຄົວຂອງຕົນເອງ ໂດຍມີຜູ້ຊ່ວຍແນະນໍາ | 2. ບອກຊື່ແລະຄວາມສ□າຄັນຂອງອາຊີບບຸກຄົນພາຍໃນຄອບຄົວຂອງຕົນເອງ ໂດຍມີຜູ້ຊ່ວຍແນະນໍາໃນບາງຄັ້ງ | 2. ບອກຊື່ແລະຄວາມສ□າຄັນຂອງອາຊີບບຸກຄົນພາຍໃນຄອບຄົວຂອງຕົນເອງ ໃຫ້ຖືກຕ້ອງ |
| | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສໍາຄັນໃນຄອບຄົວແລະທ້ອງຖິ່ນໂດຍມີຜູ້ຊ່ວຍແນະນໍາ | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສ□າຄັນໃນຄອບຄົວແລະທ້ອງຖິ່ນໂດຍມີຜູ້ຊ່ວຍແນະນໍາໃນບາງຄັ້ງ | 3. ສະແດງຄວາມເຄົາລົບຕໍ່ບຸກຄົນສໍາຄັນໃນຄອບຄົວແລະທ້ອງຖິ່ນດ້ວຍຕົນເອງ |
| | 4. ບອກຊື່ສະຖານທີ່ສ□າຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ ໂດຍມີຜູ້ຊ່ວຍແນະນໍາ | 4. ບອກຊື່ສະຖານທີ່ສ□າຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ ໂດຍມີຜູ້ຊ່ວຍແນະນໍາໃນບາງຄັ້ງ | 4. ບອກຊື່ສະຖານທີ່ສໍາຄັນໃນທ້ອງຖິ່ນທີ່ໂຮງຮຽນຕັ້ງຢູ່ ດ້ວຍຕົນເອງ |
| 1. ຮຽນຮູ້ການຄົມມະນາຄົມແລະການສື່ສານ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງ ໂດຍມີຜູ້ຊ່ວຍແນະນໍາ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງ ໂດຍມີຜູ້ຊ່ວຍແນະນໍາໃນບາງຄັ້ງ | 1. ບອກວິທີການຮັກສາຄວາມປອດໄພໃນການເດີນທາງໄດ້ດ້ວຍຕົນເອງ |
| | 2. ບອກການສື່ສານທາງໂທລະສັບ,ຈົດໝາຍ,ວິທະຍຸ,ໂທລະພາບ | 2. ບອກການສື່ສານທາງໂທລະສັບ,ຈົດໝາຍ,ວິທະຍຸ,ໂທລະພາບ | 2. ບອກການສື່ສານທາງໂທລະສັບ,ຈົດໝາຍ,ວິທະຍຸ,ໂທລະພາບ |
| 1. ສົນໃຈການຮຽນຮູ້ສິ່ງຕ່າງໆທີ່ຢູ່ອ້ອມຮອບຕົວ | ເຂົ້າຮ່ວມກິດຈະກ□າການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົນຈົນຈົບ | ເຂົ້າຮ່ວມກິດຈະກ□າການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົນຈົນຈົບ | 3. ເຂົ້າຮ່ວມກິດຈະກ□າການຮຽນດ້ວຍຄວາມສົນໃຈຕັ້ງແຕ່ຕົນຈົນ |

| | | | |
|---|---|---|---|
| 1. ສະແດອງຫາຄ□ຳຕອບດ້ວຍຫຼາຍວິທີ | 1. ຖາມຄຳຖາມ,ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ | 1. ຖາມຄຳຖາມ,ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ | 1. ຖາມຄຳຖາມ,ສະແດງຄວາມຄິດເຫັນກ່ຽວກັບເລື່ອງທີ່ສົນໃຈ |
| | 2. ຕອບຂໍ້ສົງໃສດ້ວຍວິທີການຕ່າງໆ | 2. ຕອບຂໍ້ສົງໃສດ້ວຍວິທີການຕ່າງໆ | 2. ຕອບຂໍ້ສົງໃສດ້ວຍວິທີການຕ່າງໆ |
| | 3. ເຊື່ອມໂຍງຄວາມຮູ້ ທັກສະຕ່າງໆທີ່ໄດ້ຮຽນຈາກຄູແລະໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ | 3. ເຊື່ອມໂຍງຄວາມຮູ້ ທັກສະຕ່າງໆທີ່ໄດ້ຮຽນຈາກຄູແລະໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ | 3. ເຊື່ອມໂຍງຄວາມຮູ້ ທັກສະຕ່າງໆທີ່ໄດ້ຮຽນຈາກຄູແລະໝູ່ເພື່ອນໄປໃຊ້ໃນຊີວິດປະຈຳວັນ |

## 5. ວິເຄາະ ສະມັດຖະພາບການກຽມຄວາມພ້ອມທາງດ້ານພາສາລາວ

1) ມາດຖານຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານພາສາລາວ
2) ເນື້ອໃນຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານພາສາລາວ
3) ຕົວບົ່ງຊີ້ຂອງສະມັດຖະພາບ ການກຽມຄວາມພ້ອມທາງດ້ານພາສາລາວ

**ມາດຖານທີ່ 1 : ຟັງ, ເບິ່ງ ແລະ ເວົ້າສື່ສານໃນຊີວິດປະຈຳວັນໄດ້ເໝາະສົມກັບໄວອາຍຸ.**

| ເນື້ອໃນ | ຕົວຊີ້ບອກ | | |
|---|---|---|---|
| | ອະນຸບານ1(3-4 ປີ) | ອະນຸບານ2(4-5 ປີ) | ອະນຸບານ3 ( 5-6 ປີ) |
| | | | | ເປົ່າໝາກຫວິດ 1 ຄັ້ງ ເຮັດທ່າທາງດື່ມນ້ຳ ແລະ ເປົ່າໝາກຫວິດ 2 ຄັ້ງ ເຮັດທ່າທາງ ລ້າງມື. | ບິນຊ້າໆ. | | | ຖືກຕ້ອງ ຂອງ ການປະຕິບັດຕາມ ຂໍ້ຕົກລົງ |
| | 4 | ບໍລິຫານຂາ | ເຕັ້ນຂ້າມທ່ອນໄມ້ ຫຼື ທໍ່ປະລາສະຕິກ | ເຮັດທ່າທາງ ຕາມ ຕາມ ຈັງຫວະເພງ ອາຫານຂອງ ຂ້ອຍ. | ເຮັດທ່າທາງດົມ ດອກໄມ້. | | | ສັງເກດການ ເຮັດທ່າທາງຕາມຄຳສັ່ງ ແລະ ຝຶກຄວາມ ຈຳ |
| | 5 | ບໍລິຫານແຂນ | ຍ່າງເຢັ່ງເຢ້ຕາມເສັ້ນ ຊື່ | ເຮັດທ່າທາງ ເປັນຜູ້ນຳ ຜູ້ ຕາມ: ເກັບໝາກໄມ້ ແລະ ລ້າງໝາກໄມ້. | ນັ່ງ ກົ້ມຕົວລົງເອົາ ສອງມືແປະປາຍ ຕີນ. | | | ສັງເກດ ການສະແດງອອກ ແລະ ຄວາມ ມ່ວນຊື່ນ |
| 3 | 1 | ບໍລິຫານ ຂ້າງ. | ຍ່າງອາແຂນ ຕາມ ເສັ້ນຊື່ | ເຮັດທ່າທາງ ຕາມ ຈິນຕະນາການປະກອບ ເນື້ອໃນຄຳຄ່ອງ ເຄື່ອງຫຼິ້ນ | ນັ່ງ ຢຽດຂາ ຫາຍໃຈເຂົ້າ-ອອກຊ້າໆ | - ກອງ, ກະ ແຊັກ, ກະປ໋ອງ ຫຼືມ ສິ່ງທີ່ມີໃນຖິ່ນ ທ້ອງຖິ່ນ: ຝັກໝາກ ບວບແຫ້ງ, ຝັນໝາກບ້າ | - ບົດເລົ່າຂອງຄູ<br>- ບົດຄຳຄ່ອງ ເຄື່ອງຫຼິ້ນ<br>- ຂໍ້ຕົກລົງຂອງ ຄູ<br>- ຄຳສັ່ງຂອງຄູ. | ສັງເກດການເຮັດ ທ່າທາງປະກອບ ເນື້ອໃນຄຳຄ່ອງ ແລະ ເລື່ອງທີ່ຄູ ເລົ່າ. |
| | 2 | ບໍລິຫານ ຂາ | ຍ່າງເຢັ່ງເຢ້ຕາມຫຼັງ ກັນ | ເຮັດທ່າທາງເປັນຜູ້ນຳຜູ້ ຕາມ: ເຊັດໂຕະ ແລະ ມ້ຽນເຄື່ອງຮຽນ. | ນັ່ງຢຽດຂາຊື່ ເອົາ ສອງມືບີບຂາຊ້າໆ | | | ສັງເກດຄວາມ ກ້າຫານ ໃນການ ເຮັດທ່າທາງ ຕາມ ຂໍ້ຕົກລົງ. |
| | 3 | ບໍລິຫານ ຂ້າງ. | ຍ່າງ ຂ້າມທ່ອນໄມ້ ຫຼື ທໍ່ ປລາສະຕິກ. | ເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າ ທາງຖູແຂ້ວ. ເຄາະ 2 | ນັ່ງລົງ ຢຽດຂາ ອອກ ຄ່ອຍໆກົ້ມ ຕົວລົງ ເອົາສອງມື | | | ສັງເກດຄວາມ ຖືກຕ້ອງຂອງການ ປະຕິບັດຕາມຂໍ້ |

| | | | | | | | | |
|---|---|---|---|---|---|---|---|---|
| | | | | ບາດ ເຮັດທ່າທາງນຸ່ງເຄື່ອງ ແລະ ເຄາະ 3 ບາດ ເຮັດທ່າທາງ ກິນເຂົ້າ. | ແປະປາຍຕີນ. | | | ຕິກລິງ |
| | 4 | ບໍລິຫານ ແຂນ ແລະ ຂາ | ຍາງ ຕາມຮູບວົງມົນ. | ເຮັດທ່າທາງ ຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລ້າງມືກ່ອນກິນອາຫານ, ກິນອາຫານ ແລະ ມ້ຽນພາເຂົ້າ | ເຮັດທ່າທາງ ດົມດອກໄມ້. | | | ສັງເກດການເຮັດທ່າທາງເປັນເປັນຜູ້ນໍາ-ຜູ້ຕາມ |
| | 5 | ບໍລິຫານຄໍ ແລະ ແອວ | ຈັບແຂນກັນ ຍ່າງເປັນວົງມົນ | ເຮັດທ່າທາງຕາມຄໍາສັ່ງ: ກິນອາຫານ ແລະ ດື່ມນໍ້າ | ນັ່ງລົງກັບພື້ນ ຢຽດຂາຊື່ ເຮັດທ່າທາງດື່ມນໍ້າ | | | ສັງເກດການສະແດງອອກ ແລະ ຄວາມມ່ວນຊື່ນ |
| 4 | 1 | ບໍລິຫານ ຂ້າງ. | ຍ່າງຕໍ່ຕີນ ຕາມເສັ້ນຊື່ | ເຮັດທ່າທາງ ຕາມຈັງຫວະເພງ ອາຫານຂອງຂ້ອຍ. | ນັ່ງລົງເອົາສອງມືແປະໃສ່ຂາ ແລະ ຫຼັບຕາ ( ນັ່ງສໍາມະທິ ) | - ກອງ, ກະແຊັກ, ກະປ໋ອງ ຫຼື ສິ່ງທີ່ມີໃນທ້ອງຖິ່ນ: ຝັກໝາກບວບແຫ້ງ, ຝັກໝາກບ້າ | - ຄໍາສັ່ງຂອງຄູ<br>- ຂໍ້ຕົກລົງຂອງຄູ<br>- ບົດເພງ ອາຫານຂອງຂ້ອຍ.<br>- ບົດຄໍາຄ່ອງເຄື່ອງຫຼິ້ນ | ສັງເກດການເຮັດທ່າທາງປະກອບຈັງຫວະເພງ, ເນື້ອໃນຄໍາຄ່ອງ. |
| | 2 | ບໍລິຫານມື ແລະ ແຂນ | ເຕັ້ນໄປທາງໜ້າ. | ເຮັດທ່າທາງຕາມຄໍາສັ່ງ: ຊັກເຄື່ອງ, ນຸ່ງໂສ້ງ ແລະ ນຸ່ງເສື້ອ. | ເຮັດທ່າທາງ ດອກໄມ້ຈູມ ແລະ ດອກໄມ້ບານ. | | | ສັງເກດຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ. |
| | 3 | ບໍລິຫານ ທ້ອງ ແລະ ຫຼັງ. | ຍ່າງເຢ່ງເຢ້ ຕາມຫຼັງກັນ. | ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄໍາຄ່ອງ ເຄື່ອງຫຼິ້ນ. | ເຮັດທ່າທາງ ໄກ່ພືປີກຊ້າໆ. | | | ສັງເກດຄວາມຖືກຕ້ອງໃນການເຮັດທ່າທາງຕາມຂໍ້ |

| | | | | | | | | |
|---|---|---|---|---|---|---|---|---|
| | | | | | | | | ຕິກລິງ |
| | 4 | ບໍລິຫານຫົວເຂົ່າ | ແລ່ນ ແລະ ຍ່າງ ຕາມ ບາດເຄາະ ຊ້າ-ໄວ. | ເຮັດທ່າທາງຕາມຈັງຫວະເພງ ອາຫານຂອງຂ້ອຍ. | ເຮັດທ່າທາງ ລ້າງມື | | | ສັງເກດການເຮັດທ່າທາງຕາມຄຳສັ່ງ. |
| | 5 | ບໍລິຫານມື ແລະ ແຂນ. | ເຕັ້ນຂາດຽວ ໃນບໍລິເວນຫ້ອງ. | ເຮັດທ່າທາງຕາມ ຂໍ້ຕົກລົງ : ເຄາະ 1 ບາດ ເຮັດທ່າທາງໄຂຕຸກນ້ຳ, ເຄາະ 2 ບາດ ເຮັດທ່າທາງດື່ມນ້ຳ ແລະ ເຄາະ 3 ບາດ ເຮັດທ່າທາງ ລ້າງຈອກ. | ເຮັດທ່າທາງດົມດອກໄມ້. | | | ສັງເກດ ການສະແດງອອກ ແລະ ຄວາມມ່ວນຊື່ນ |

## 1. ການແຕ່ງບົດສອນຂັ້ນອະນຸບານ 1

- ຕົວຢ່າງການແຕ່ງບົດສອນແບບຕາຕະລາງ

  ໜ່ວຍຕົວຂອງຂ້ອຍ ອາທິດ: 1 ມື້ທີ: 5

**ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ**

ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ ເວລາ: 15-20 ນາທີ

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການຮຽນ-ການສອນ | ການວັດ-ປະເມີນຜົນ |
|---|---|---|---|---|
| | | **1. ຂັ້ນນຳເຂົ້າສູ່ບົດຮຽນ**<br>**ກິດຈະກຳພື້ນຖານ**<br>- ຄູພາເດັກເຄື່ອນໄຫວກັບທີ ໂດຍໃຫ້ເດັກຢືນຂຶ້ນເປັນຮູບແຖວໂຕ V ຈາກນັ້ນຄູພາເດັກຢ່ຳເທົ້າກັບທີ ແລະ ເຕັ້ນຂຶ້ນ-ລົງ ປະຕິບັດ 2 ເທື່ອ.<br>- ຄູພາເດັກເຮັດກິດຈະກຳເຄື່ອນທີໂດຍຄູສັ່ນກະແຊັກເປັນຈັງ | | |

| | | | | |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ: ເຮັດທ່າທາງຕາມຄຳສັ່ງຂອງຄູຢ່າງມ່ວນຊື່ນ | ການເຮັດທ່າທາງຕາມຄຳສັ່ງຂອງຄູເຊັ່ນ: ຕົບມື, ຢ່ຳເທົ້າ, ແກວ່ງແຂນ. | ຫວະບາດໄວ-ຊ້າແລ້ວໃຫ້ເດັກຍ່າງນຳຫຼັງກັນຕາມເສັ້ນຊື່ທີ່ຄູກຳນົດໄວ້.<br>**2. ຂັ້ນດຳເນີນການສອນ**<br>**ກິດຈະກຳສຳພັນກັບເນື້ອໃນ**<br>– ຄູສະເໜີກິດຈະກຳໃຫ້ເດັກຟັງມື້ນີ້ຄູຈະໃຫ້ພວກຫຼານເຄື່ອນໄຫວຕາມຄຳສັ່ງຂອງຄູ<br>– ຄູອະທິບາຍ ແລະ ສາທິດການເຮັດທ່າທາງຕາມຄຳສັ່ງໃຫ້ເດັກສັງເກດເບິ່ງ 1-2 ເທື່ອ<br>– ຄູໃຫ້ເດັກຍ່າງຕາມບໍລິເວນຫ້ອງເມື່ອພວກຫຼານໄດ້ຍິນຄຳສັ່ງວ່າ ຕົບມືໃຫ້ພວກຫຼານຕົບມື, ຖ້າສັ່ງວ່າຢ່ຳເທົ້າໃຫ້ພວກຫຼານຢ່ຳເທົ້າ ແລະ ຖ້າຄູສັ່ງວ່າແກ່ວງແຂນໃຫ້ພວກຫຼານແກ່ວງແຂນ.<br>– ໃຫ້ເດັກປະຕິບັດການເຄືອນໄຫວຕາມຄຳສັ່ງ 1-2 ເທື່ອ, ຍ້ອງຍໍຊົມເຊີຍເດັກ.<br>**+ ກິດຈະກ□າຜ່ອນຄາຍ**<br>– ຄູໃຫ້ເດັກຢືນເປັນວົງມົນແລ້ວພາເດັກເອົາມືຄ້ຳແອວຫາຍໃຈເຂົ້າ-ອອກຊ້າໆ<br>**3. ຂັ້ນສະຫຼຸບບົດຮຽນ**<br>ຜ່ານໄປວ່າງກີ້ນີ້ພວກຫຼານໄດ້ເຮັດຫຍັງແດ່? (ເດັກຕອບ)<br>– ສຶກສາອົບຮົມເດັກ<br>ພວດຫຼານຕ້ອງຕັ້ງໃຈປະຕິບັດບໍ່ໃຫ້ຢອກກັນ ໃນເວລາຢ່ຳເທົ້າຕ້ອງເຮັດຄ່ອຍໆ, ຕົບມືກະບໍ່ໃຫ້ຕົບແຮງ ແລະ ບໍ່ໃຫ້ແກ່ວງແຂນແຮງເກີນໄປ. | ກະແຊັກ | ສັງເກດການເຮັດທ່າທາງຕາມຄຳສັ່ງຂອງເດັກຢ່າງມ່ວນຊື່ນ |

ທີ່.................................................

ວັນທີ່..................ເດືອນ................ປີ................

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

## 2. ການແຕ່ງບົດສອນຂັ້ນອະນຸບານ 2

- ຕົວຢ່າງການແຕ່ງບົດສອນແບບຕາຕະລາງ

ໜ່ວຍ ບ້ານຂອງຂ້ອຍ ອາທິດ: 1 ມື້ທີ່: 1

**ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ**

ຫົວຂໍ້: ການເຄື່ອນໄຫວຕາມຄຳຄ່ອງ ອາຊີບຕ່າງໆ ເວລາ: 20-25 ນາທີ

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການຮຽນ-ການສອນ | ການວັດ-ປະເມີນຜົນ |
|---|---|---|---|---|
| | | 1. **ຂັ້ນນຳເຂົ້າສູ່ບົດຮຽນ**<br>**ກິດຈະກຳພື້ນຖານ**<br>- ຄູພາເດັກເຄື່ອນໄຫວກັບທີ ດ້ວຍການໃຫ້ເດັກຢືນໃຫ້ຂາກວ້າງເທົ່າກັບບ່າໄຫຼ່ແລ້ວແກ່ວງແຂນໄປເບື້ອງຊ້າຍ ແລະ ເບື້ອງຂວາ ໃຫ້ເດັກເອົາມືທັງສອງເບື້ອງຄ້ຳແອວແລ້ວຢຶດຕົວຂຶ້ນ ແລະ ໂຢະລົງ 2-3 ເທື່ອ.<br>- ຄູພາເດັກເຮັດກິດຈະກຳເຄື່ອນທີດ້ວຍການໃຫ້ເດັກເຕັ້ນຂ້າມເຊືອກເທື່ອລະຄົນ. | | |

| | | | | |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>+ ບອກບຸກຄົນສ□າຄັນທີ່ອາໄສຢູ່ພາຍໃນບ້ານໄດ້ຢ່າງຖືກຕ້ອງ<br>+ ສະແດງທ່າທາງຕາມທີ່ຄູອອກແບບປະກອບຄໍາຄ່ອງໄດ້ຢ່າງຖືກຕ້ອງ ແລະມ່ວນຊື່ນ | ການສະແດງທ່າທາງປະກອບຄໍາຄ່ອງອາຊີບຕ່າງໆ | **2. ຂັ້ນດໍາເນີນການສອນ**<br>**ກິດຈະກໍາສໍາພັນກັບເນື້ອໃນ**<br>– ຄູສະເໜີກິດຈະກໍາທີ່ຈະໃຫ້ເດັກປະຕິບັດຟັງມື້ນີ້ຄູຈະໃຫ້ພວກສະແດງທ່າທາງປະກອບຄໍາຄ່ອງ ອາຊີບຕ່າງໆ.<br>– ຄູສົນທະນາກັບເດັກດ້ວຍການຕັ້ງຄໍາຖາມດັ່ງນີ້: ບຸກຄົນສໍາຄັນພາຍໃນບ້ານມີໃຜແດ່?<br>– ຄູເລົ່າພ້ອມທັງປະກອບທ່າທາງການເຄື່ອນໄຫວໃຫ້ເດັກເບິ່ງກ່ອນ 1-2 ເທື່ອ<br>– ຄູເລົ່າຄໍາຄ່ອງ ອາຊີບຕ່າງໆແລ້ວໃຫ້ເດັກສະແດງທ່າທາງປະກອບຄໍາຄ່ອງ 2-3 ເທື່ອ ໂດຍຄູເປັນຜູ້ຕິດຕາມແນະນ□າ ແລະ ຊ່ວຍເຫຼືອໃນເວລາເດັກເຮັດທ່າທາງ( ຍ້ອງຍໍຊົມເຊີຍເດັກ )<br>**+ ກິດຈະກ□າຜ່ອນຄາຍ**<br>– ຄູພາເດັກຜ່ອນຄາຍຄວາມອິດເມື່ອຍດ້ວຍການໃຫ້ເດັກນອນຫງາຍຍົກແຂນທັງສອງເບື້ອງຂຶ້ນແລ້ວສັ່ນຊ້າໆ 1-2 ເທື່ອ.<br>**3. ຂັ້ນສະຫຼຸບບົດຮຽນ**<br>– ຄູຖາມເດັກວ່າຜ່ານໄປວ່າງກີ້ນີ້ພວກຫຼານໄດ້ສະແດງທ່າທາງປະກອບຄໍາຄ່ອງຫຍັງ?<br>– ສຶກສາອົບຮົມເດັກ: ພວກຫຼານຕ້ອງຮູ້ໃຫ້ອະໄພໝູ່ໃນເວລາໝູ່ຂໍໂທດ ແລະ ໃນເວລາສະແດງທ່າທາງປະກອບຄໍາຄ່ອງຕ້ອງຕັ້ງໃຈສະແດງບໍ່ຢອກກັນ ແລະ ບໍ່ແລ່ນໄປຫຼິ້ນບ່ອນອື່ນ. | ເຊືອກ, ບົດຄໍາຄ່ອງອາຊີບຕ່າງໆ | ສັງເກດການຄວາມຖືກຕ້ອງການບອກຊື່ບຸກຄົນສໍາຄັນພາຍໃນບ້ານ<br>+ ຄວາມຖືກຕ້ອງໃນການສະແດງທ່າທາງທີ່ຄູອອກແບບປະກອບຄໍາຄ່ອງ ແລະ ຄວາມມ່ວນຊື່ນ |

## 3. ການແຕ່ງບົດສອນຂັ້ນອະນຸບານ 3

- **ຕົວຢ່າງບົດສອນແບບຮຽງຄວາມ:**

ໜ່ວຍ: ຕົວຂອງຂ້ອຍ ອາທິດທີ 1 ມື້ທີ 1

ກິດຈະກຳ: ເຄື່ອນໄຫວ ແລະ ຈັງຫວະ ເວລາ 30-35 ນາທີ

**ຫົວຂໍ້: ເຄື່ອນໄຫວຕາມທີ່ຄູອອກແບບປະກອບບົດເພງ ເຈົ້າຊື່ຫຍັງ**

**I. ຈຸດປະສົງ:**

ເພື່ອໃຫ້ເດັກສາມາດ:

1. ເຄື່ອນໄຫວຕາມທີ່ຄູອອກແບບປະກອບບົດເພງ ເຈົ້າຊື່ຫຍັງໄດ້ຢ່າງຖືກຕ້ອງ
2. ເວົ້າຄຳສຸພາບກັບໝູ່ເພື່ອນ

**II. ເນື້ອໃນຕົ້ນຕໍ**

1. ການເຄື່ອນໄຫວຕາມທີ່ຄູອອກແບບປະກອບເພງ ເຈົ້າຊື່ຫຍັງ

**III. ສື່ການຮຽນ-ການສອນ**

1. ບົດເພງ ເຈົ້າຊື່ຫຍັງ.
2. ການບໍລິຫານຄໍ ແລະ ແຂນ
3. ກອງ.

**IV. ກິດຈະກຳການຮຽນ-ການສອນ**

**1. ຂັ້ນນຳເຂົ້າສູ່ບົດຮຽນ:**

ກິດຈະກຳພື້ນຖານ

- ຄູພາເດກເຄື່ອນໄຫວກັບທີ  ດ້ວຍການໃຫ້ເດັກຢືນໃຫ້ຂາກວ້າງເທົ່າກັບບ່າໄຫຼ່ແລ້ວເງີຍໜ້າຂຶ້ນໝູນລຳຄໍໄປທາງເບື້ອງຊ້າຍ-ເບື້ອງຂວາ  ແລະ  ໃຫ້ຍົກແຂນທັງສອງເບື້ອງຂຶ້ນເທິງຫົວ, ມືໄຂ່ວກັນທາງໜ້າ 2-3 ເທື່ອ
- ຄູພາເດັກເຄື່ອນໄຫວເຄື່ອນທີ ດ້ວຍການໃຫ້ເດັກເຕັ້ນຊິກແຊັກໄລະຍະ 3 ແມັດ ເບື້ອງຊ້າຍ-ເບື້ອງຂວາເທື່ອລະຄົນ.

**2. ຂັ້ນດຳເນີນການສອນ**

ກິດຈະກຳສຳພັນກັບເນື້ອໃນ

- ຄູສະເໜີຊື່ໜ່ວຍກິດຈະກຳທີ່ຈະໃຫ້ເດັກປະຕິບັດ: ມື້ນີ້ສາວຄູໃຫ້ພວກຫຼານສະແດງທ່າທາງປະກອບເພງ ເຈົ້າຊື່ຫຍັງ
- ຄູຮ້ອງເພງເຈົ້າຊື່ຫຍັງພ້ອງທັງປະກອບທ່າທາງການເຄື່ອນໄຫວໃຫ້ເດັກເບິ່ງກ່ອນ 1-2 ເທື່ອ.
- ຄູຮ້ອງເພງເຈົ້າຊື່ຫຍັງ ແລ້ວໃຫ້ເດັກສະແດງທ່າທາງປະກອບເພງ 2-3 ເທື່ອ ຄູເປັນຜູ້ຕິດຕາມແນະນ□າ ແລະ ຊ່ວຍເຫຼືອໃນເວລາເດັກເຮັດທ່າທາງ( ຍ້ອງຍໍຊົມເຊີຍ ).

**ກິດຈະກຳຜ່ອນຄາຍ**

- ຄູພາເດັກຜ່ອນຄາຍຄວາມອິດເມື່ອຍດ້ວຍການໃຫ້ເດັກເອົາມືກອດເອິກຫຼັບຕາຫາຍໃຈເຂົ້າອອກ 1-2 ເທື່ອ.

**3. ຂັ້ນສະຫຼູບບົດຮຽນ:**

- ຄູຖາມເດັກຄືນວ່າບົດເພງທີ່ພວກຫຼານສະແດງທ່າທາງຜ່ານໄປນັ້ນມີຊື່ວ່າແນວໃດ? ພວກຫຼານໄດ້ເຄື່ອນໄຫວຫຍັງແດ່ຜ່ານມາ? ໃຫ້ເດັກຕອບ 2-3 ຄົນ.
- ຄູໃຫ້ເດັກອາສາສະໝັກອອກມາຮ້ອງເພງເຈົ້າຊື່ຫຍັງພ້ອມທັງສະແດງທ່າທາງປະກອບຄືນອີກເທື່ອໜຶ່ງ 1-3 ຄົນ.
- ສຶກສາອົບຮົມພວກຫຼານຕ້ອງເປັນເດັກຄຳຮູ້  ແລະ  ໃນເວລາເຮັດທ່າທາງປະກອບເພງຕ້ອງຕັ້ງໃຈສະແດງໃຫ້ຖືກືການເວົ້າຈາກັບໝູ່ເພື່ອນຕ້ອງໃຫ້ເວົ້າສຸພາບ  ບໍ່ຢອກກັນ ແລະ ບໍ່ແລ່ນຕຳໝູ່.

**V. ການວັດ ແລະ ປະເມີຜົນ**

**ສັງເກດ:**

1. ຄວາມຖືກຕ້ອງໃນການສະແດງທ່າທາງປະກອບເພງເຈົ້າຊື່ຫຍັງຂອງເດັກ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ

ວັນທີ່..................ເດືອນ................ປີ................

## 2. ວິເຄາະ ແຜນຈັດປະສົບການ ແລະ ຄູ່ມືກິດຈະກຳວົງມົນ, ແຕ່ງບົດສອນ ແລະ ສອນຕົວຈິງ

### 1.1 ການວິເຄາະເນື້ອໃນໜ່ວຍການສອນກິດຈະກຳວົງມົນຂັ້ນອະນຸບານ 1

ໜ່ວຍທີ 2 ຄອບຄົວຂອງຂ້ອຍ

| ອາທິດ | ມື້ | ຫົວຂໍ້ | ເນື້ອໃນວົງມົນ | ອຸປະກອນ | | ປະເມີນ |
|---|---|---|---|---|---|---|
| | | | | ວັດຖຸຈິງ | ສິ່ງທີ່ຜະລິດ | |
| 1 | 1 | ສະມາຊິກໃນຄອບຄົວ | 1. ການຮ້ອງເພງ ຄອບຄົວຂອງຂ້ອຍປະກອບທ່າງທາງ.<br>2. ສະມາຊິກໃນຄອບຄົວ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ.<br>3. ການເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່, ເອື້ອຍ. | ເຄື່ອງເຄາະຈັງຫວະ | 1 ບົດເພງ ຄອບຄົວຂອງຂ້ອຍ<br>2 ຮູບພາບ: ພໍ່, ແມ່,ເອື້ອຍ. | 1 ສັງເກດການຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.<br>2 ສັງເກດການບອກສະມາຊິກໃນຄອບຄົວຂອງຕົນເອງ.<br>3 ສັງເກດການເວົ້າເປັນຄຳຕາມຮູບພາບ: ພໍ່, ແມ່ |
| | 2 | ໜ້າທີຮັບຜິດຊອບຂອງບຸກຄົນໃນຄອບຄົວ | 1 ການເລົ່າຄຳຄ່ອງ ເຮືອນຫຼັງນຶ່ງ ປະກອບທ່າທາງ.<br>2 ໜ້າທີຮັບຜິດຊອບຂອງ: ພໍ່ເປັນຜູ້ເບິ່ງແຍງຄອບຄົວ. ແມ່ເປັນຜູ້ແຕ່ງອາຫານ. ອ້າຍ, ເອື້ອຍ , ຂ້ອຍ: ຊ່ວຍວຽກພໍ່ແມ່; ການເວົ້າເປັນຄຳຕາມຮູບພາບ: ອ້າຍ, ນ້ອງ. | | 1 ບົດຄຳຄ່ອງ ເຮືອນຫຼັງໜຶ່ງ<br>2 ຮູບພາບ: ອ້າຍ, ເອື້ອຍເຮັດວຽກໃນຄອບຄົວ ອ້າຍນ້ອງ | 1 ສັງເກດການເລົ່າຄຳຄ່ອງເຮືອນຫຼັງນຶ່ງ.<br>2 ສັງເກດການບອກໜ້າທີຮັບຜິດຊອບຂອງບຸກຄົນໃນຄອບຄົວ.<br>3 ສັງເກດການເວົ້າເປັນຄຳຕາມຮູບພາບ ອ້າຍ,ນ້ອງ |
| | 3 | ອາຊີບຂອງບຸກຄົນໃນຄອບຄົວ | 1 ອາຊີບຂອງບຸກຄົນໃນຄອບຄົວ:ພໍ່ເປັນທະຫານ, ແມ່ເປັນຄູ...ອ້າຍ ເອື້ອຍເປັນນັກຮຽນ.<br>2 ການນັບເລກປາກເປົ່າ 1-3. | | ບົດເພງ ຄອບຄົວຂອງຂ້ອຍ. | 1 ສັງເກດການບອກອາຊີບຂອງບຸກຄົນໃນຄອບຄົວ.<br>2 ສັງເກດການນັບເລກປາກເປົ່າ |

| | | | | | | |
|---|---|---|---|---|---|---|
| | 4 | ຊ່ວຍເຫຼືອກັນໃນຄອບຄົວ | 1 ການຟັງເລົ່າເລື່ອງ ເສືອສາມອ້າຍນ້ອງ<br>2 ການຊ່ວຍເຫຼືອເບິ່ງແຍງກັນໃນຄອບຄົວ: ເບິ່ງແຍງກັນເວລາບໍ່ສະບາຍ, ຊ່ວຍເຮັດວຽກເຮືອນ.<br>3 ການອ່ານອອກສຽງພະຍັນຊະນະ ອ. | | 1 ຫຸ່ນ: ພໍ່ເຖົ້າແມ່ເຖົ້າ.<br>2 ບັດພະຍັນຊະນະ ອ<br>3 ປຶ້ມເລື່ອງ ເສືອສາມອ້າຍນ້ອງ. | 1 ສັງເກດການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.<br>2 ສັງເກດການບອກການຊ່ວຍເຫຼືອເບິ່ງແຍງກັນໃນຄອບຄົວ.<br>3 ສັງເກດການອ່ານອອກສຽງພະຍັນຊະນະ |
| | 5 | ຄວາມອົບອຸ່ນໃນຄອບຄົວ | 1 ການຟັງເລົ່າເລື່ອງ ຄອບຄົວຂອງຂ້ອຍ.<br>2 ການສະແດງຄວາມຮັກແພງ ແລະ ຄວາມອົບອຸ່ນໃນຄອບຄົວ:ກອດ, ຫອມ,ໃຫ້ກຳລັງໃຈອ້າຍ, ເອື້ອຍ ນ້ອງຫຼິ້ນຮ່ວມກັນ ແລະ ພໍ່ເຖົ້າ ແມ່ເຖົ້າເລົ່ານິທານ. | | 1 ຮູບພາບປະກອບເລື່ອງຄອບຄົວຂອງຂ້ອຍ.<br>2 ຮູບພໍ່ແມ່ກອດລູກ, ອ້າຍ, ເອື້ອຍ, ນ້ອງຫຼິ້ນຮ່ວມກັນ; ພໍ່ເຖົ້າ ແມ່ເຖົ້າເລົ່ານິທານ | 1 ສັງເກດການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.<br>2 ສັງເກດການບອກຄວາມອົບອຸ່ນໃນຄອບຄົວ. |
| 2 | 1 | ຫ້ອງຕ່າງໆໃນເຮືອນ | 1 ການຮ້ອງເພງ ເຮືອນຂອງຫຼານ ປະກອບທ່າທາງ.<br>2 ຊື່ຫ້ອງຕ່າງໆໃນເຮືອນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນໍ້າ ແລະ ຫ້ອງຄົວ. | | 1 ປຶ້ມເພງເຮືອນຂອງຫຼານ.<br>2 ຮູບພາບ: ຫ້ອງນອນ, ຫ້ອງຮັບແຂກ,ຫ້ອຄົວ | 1 ສັງເກດການຮ້ອງເພງ ເຮືອນຂອງຫຼານ ປະກອບທ່າງທາງ.<br>2 ສັງເກດການບອກຊື່ຫ້ອງຕ່າງໆໃນເຮືອນ |
| | 2 | ເຄື່ອງໃຊ້ໃນຫ້ອງນອນ ແລະ ການປົວລະບັດຮັກສາ | 1 ການເລົ່າຄຳຄ່ອງຫ້ອງນອນຂອງຂ້ອຍປະກອບທ່າທາງ ແລະ ການເວົ້າເປັນຄຳຕາມຮູບພາບ: ໝອນ<br>2 ຊື່ເຄື່ອງໃຊ້ໃນຫ້ອງນອນ: ໝອນ, ຜ້າຫົ່ມ, ຜ້າປູບ່ອນ, ມຸ້ງ ແລະ ການປົວລະບັດຮັກສາ ປັດຂີ້ຝຸ່ນ, ຊັກເຄື່ອງ. | | 1 ປຶ້ມຄຳຄ່ອງຫ້ອງນອນຂອງຂ້ອຍແລະຮູບພາບ: ຕຽງ, ຕູ້, ໝອນ, ມຸ້ງ, ຜ້າຫົ່ມ. | 1 ສັງເກດການເລົ່າຄຳຄ່ອງຫ້ອງນອນຂອງຂ້ອຍປະກອບທ່າທາງ.<br>2 ສັງເກດການບອກຊື່ເຄື່ອງໃຊ້ໃນຫ້ອງນອນ, ປົວລະບັດຮັກສາ. |

| | | | | | | |
|---|---|---|---|---|---|---|
| | | | | | | 3 ສັງເກດການເວົ້າເປັນຄຳຕາມຮູບພາບ:ໝອນ |
| | 3 | ເຄື່ອງໃຊ້ໃນຫ້ອງ ຮັບແຂກ ແລະ ການບົວລະບັດຮັກສາ | 1 ຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ: ໂຊຟາ, ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ ແລະ ການບົວລະບັດຮັກສາ: ເຊັດຖູ, ປັດຂີ້ຝຸ່ນ.<br>2 ການປຽບທຽບຮູບພາບໂຕະ ສັ້ນ ຍາວ. | | 1 ຮູບພາບ: ໂຊພາ, ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ ພໍ່ແມ່, ລູກກຳລັງອະນາໄມຫ້ອງຮັບແຂກ, ໂຕະ ສັ້ນ ຍາວ<br>2 ບົດຄຳຄ່ອງຫ້ອງນອນຂອງຂ້ອຍ | 1 ສັງເກດການບອກເຄື່ອງໃຊ້ໃນຫ້ອງຮັບແຂກ ແລະການບົວລະບັວຮັກສາ<br>2 ສັງເກດການປຽບທຽບຮູບພາບໂຕະ ສັ້ນ ຍາວ |
| | 4 | ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ການບົວລະບົດຮັກສາ | 1 ຊື່ເຄື່ອງໃຊ້ ແລະ ການບົວລະບັດຮັກສາຫ້ອງນ້ຳ.<br>2 ການເວົ້າເປັນຄຳຕາມຮູບພາບ: ສະບູ, ໂອ | | 1 ຮູບພາບ: ໄຫນ້ຳ, ໂອ, ຟອຍ ຖູຫ້ອງນ້ຳ, ນ້ຳຢາລ້າງຫ້ອງນ້ຳ, ສະບູ, ແຟັບ, ຜ້າເຊັດມື<br>2 ບົດເພັງ ເຮືອນຂອງຫຼານ | 1 ສັງເກດການບອກຊື່ ແລະ ການບົວລະບັດຮັກສາຫ້ອງນ້ຳ.<br>2 ສັງເກດການເວົ້າເປັນຄຳຕາມຮູບພາບ: ສະບູ ແລະ ໂອ. |
| | 5 | ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ | 1 ຊື່ເຄື່ອງໃຊ້ໃນຫ້ອງຄົວ: ຖວ້ຍ, ບ່ວງ, ໝໍ້, ເຕົາໄຟ.<br>2 ການບົວລະບັດຮັກສາຫ້ອງນ້ຳ:ລ້າງເຊັດໃຫ້ສະອາດ ແລະ ມ້ຽນໃຫ້ຖືກບ່ອນ.<br>3 ການເວົ້າເປັນຄຳຕາມຮູບພາບ:ຖ້ວຍ, ບ່ວງ. | ຖ້ວຍ ບ່ວງ ໝໍ້ ເຕົາໄຟ | 1 ຮູບພາບຖ້ວຍ, ບ່ວງ, ໝໍ້, ເຕົາໄຟ ແລະ ບົດຄຳຄ່ອງຫ້ອງນອນຂອງຂ້ອຍ. | 1 ສັງເກດການບອກຊື່ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.<br>2 ສັງເກດການເວົ້າເປັນຄຳຕາມຮູບພາບ: ຖ້ວຍ ແລະ ບ່ວງ. |
| 3 | 1 | ການປະຕິບັດລະບຽບ | 1 ການຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ<br>2 ການປະຕິບັດລະບຽບ: ກິນ, ນອນ, ຫຼິ້ນ, ໄປມາລາຄອບ. | | 1 ບົດເພງ ມ້ຽນເຄື່ອງຫຼິ້ນ<br>2 ຮູບພາບ:ເດັກນ້ອຍຫຼິ້ນ, ນົບພໍ່ແມ່, ເດັກນ້ອຍນອນ ແລະ ເດັກນ້ອຍ | 1 ສັງເກດການຮ້ອງເພງ ມ້ຽນເຄື່ອງຫຼິ້ນ ປະກອບທ່າທາງ<br>2 ສັງເກດການບອກການປະຕິບັດລະບຽບໃນ |

| | | | | | | |
|---|---|---|---|---|---|---|
| | | | | | ກິນອາຫານ. | ຄອບຄົວ. |
| | 2 | ການນັບຖືຜູ້ໃຫ່ຍ | 1 ການເຄົາລົບນັບຖື: ຟັງຄວາມພໍ່ແມ່, ຜູ່ໃຫ່ຍ, ຖາມສະບາຍດີ, ຂອບໃຈ, ນົບໄຫວ້ ແລະ ກົ້ມຫົວເວລາຍ່າງກາຍຜູ້ໃຫ່ຍ<br>2 ການອ່ານອອກສຽງພະຍັນຊະນະ ມ. | | 1 ຮູບພາບ: ເດັກນ້ອຍນັ່ງຟັງການໂອ້ລົມຂອງພໍ່ແມ່,ເດັກນ້ອຍນັ່ງອ່ານປຶ້ມເດັກນ້ອຍນົບຜູ້ໃຫ່ຍພະຍັນຊະນະ ມ. | 1 ສັງເກດການບອກການປະຕິບັດຕົນໃນການເຄົາລົບນັບຖືຜູ້ໃຫ່ຍ<br>2 ສັງເກດການອ່ານອອກສຽງພະຍັນຊະນະ |
| | 3 | ໜ້າທີຂອງຕົນເອງ | 1 ໜ້າທີ່ຂອງຕົນເອງຢູ່ໃນຄອບຄົວ: ຊ່ວຍເກືອສັດລ້ຽງ,ປັດກວາດເຊັດຖູເຄື່ອງໃຊ້ເຮືອນ.<br>2 ການເວົ້າເປັນຄໍາຕາມຮູບພາບ: ມຸ້ງ, ຜ້າຫົ່ມ. | | 1 ຮູບພາບ: ເດັກນ້ອຍເກືອສັດ, ປັດກວາດເຮືອນ,ເຊັດຖູເຄື່ອງໃຊ້ໃນເຮືອນ, ມຸ້ງ,ຜ້າຫົ່ມ.<br>2 ບົດເພງເຮືອນຂອງຫຼານ. | 1 ສັງເກດການບອກໜ້າທີຂອງຕົນເອງໃນຄອບຄົວ.<br>2 ສັງເກດການເວົ້າເປັນຄໍາຕາມຮູບພາບ:ມຸ້ງຜ້າຫົ່ມ. |
| | 4 | ການມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ | 1 ການມ້ຽນເຄື່ອງຫຼິ້ນ ແລະ ເຄື່ອງໃຊ້: ຈອກ, ຖ້ວຍ, ບ່ວງ, ສໍດໍາ, ປຶ້ມ, ໝອນ, ຜ້າຫົ່ມ, ເຄື່ອງຫຼິ້ນ: ລົດຖີບນ້ອຍ, ຕຸກກະຕາ.<br>2 ຮູບເລຂາຄະນິດວົງມົນ ແລະ ຕໍ່ຮູບວົງມົນ ຕິດກັນ 3 ຮູບ. | ຈອກ, ຖ້ວຍ, ບ່ວງ, ສໍາດໍາ, ປຶ້ມ, ໝອນ, ຜ້າຫົ່ມ, ລົດຖີບນ້ອຍ ຕຸກກະຕາ | 1 ບົດເພງມ້ຽນເຄື່ອງຫຼິ້ນ.<br>2 ບູອໍກຮູບ ວົງມົນ 3 ອັນ | 1 ສັງເກດການເກັບມ້ຽນເຄື່ອງຫຼິ້ນແລະເຄື່ອງໃຊ້.<br>2 ສັງເກດການບອກຮູບເລຂາຄະນິດ: ວົງມົນ ແລະ ຕໍ່ຮູບວົງມົນ 3 ຮູບ. |
| | 5 | ການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ | 1 ການຟັງເລົ່າເລື່ອງກະຕ່າຍນ້ອຍມ້ຽນມັດເຮືອນຊານ.<br>2 ການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ: ບໍ່ຖິ້ມ, ບໍ່ມ້າງເພເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ. | | 1 ບົດເລື່ອງກະຕ່າຍນ້ອຍມ້ຽນມັດເຮືອນຊານ.<br>2 ຮູບພາບປະກອບບົດເລື່ອງ | 1 ສັງເກດການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.<br>2 ສັງເກດການບອກການຮັກສາເຄື່ອງໃຊ້ ແລະ ເຄື່ອງຫຼິ້ນໃນຄອບຄົວ |
| | 1 | ມາລະຍາດ | 1 ມາລະຍາດໃນການເວົ້າ, ຟັງ, ເບິ່ງ: ເວົ້າກັບພໍ່ແມ່ | | 1 ຫຸ່ນມີຮູບຊ້າງ, ບັດ | 1 ສັງເກດການບອກມາລະຍາດ |

| | | | | | | |
|---|---|---|---|---|---|---|
| | | ໃນການເວົ້າ , ຟັງ ແລະ ເບິ່ງ. | , ອ້າຍ, ເອື້ອຍ, ນ້ອງ ແລະ ເພື່ອນບ້ານດ້ວຍຄໍາສຸພາບ: ໂດຍ, ຂ້ານ້ອຍ, ຂ້ອຍ, ເຈົ້າ, ຂໍໂທດ, ຂອບໃຈ. ບໍ່ຕັດຄວາມເວົ້າຜູ້ໃຫ່ຍ ແລະ ເບິ່ງໂທລະພາບເປັນເວລາ.<br>2 ການອ່ານອອກສຽງພະຍັນຊະນະ ນ. | | ພະຍັນຊະນະ ນ.<br>2 ບົດຄໍາຄ່ອງ ເຮືອນຫຼັງໜຶ່ງ | ໃນການເວົ້າ, ຟັງແລະ ເບິ່ງໂທລະທັດ.<br>2 ສັງເກດການອ່ານອອກສຽງພະຍັນຊະນະ |
| | 2 | ມາລະຍາດໃນການກິນ ແລະ ດື່ມ | 1 ມາລະຍາດໃນການກິນ ແລະ ດື່ມ: ກິນຊ້າບໍ່ໃຫ້ອາຫານຕົກເຮ່ຍ, ຫຍໍ້າອາຫານໃຫ້ແຫຼກ, ບໍ່ມີສຽງດັງ ແລະ ດື່ມນໍ້າດ້ວຍຄວາມລະມັດລະວັງບໍ່ໃຫ້ນໍ້າເຮ່ຍ.<br>2 ການປຽບທຽບຖ້ວຍນ້ອຍໃຫ່ຍ. | ເຂົ້າ,ອາຫານ ,ນໍ້າດື່ມຈອກ ,ຖ້ວຍນ້ອຍໃຫ່ຍ | | 1 ສັງເກດການບອກມາລະຍາດໃນການກິນ ແລະ ດື່ມ<br>2 ສັງເກດການປຽບທຽບນ້ອຍໃຫ່ຍ |
| | 3 | ມາລະຍາດໃນການນັ່ງ ແລະ ຍ່າງ | 1 ມາລະຍາດໃນການນັ່ງ ແລະ ຍ່າງ: ນັ່ງພັບແພບ, ຍ່າງບໍ່ໃຊ້ສຽງດັ່ງ ແລະ ຍ່າງກາຍຜູ້ໃຫ່ຍຕ້ອງກົ້ມຫົວ. | | 1 ບົດເພງຄອບຄົວຂອງຂ້ອຍ.<br>2 ຮູບພາບ: ເດັກນ້ອຍນັ່ງພັບແພບ. | 1 ສັງເກດການບອກມາລະຍາດໃນການນັ່ງ ແລະ ຍ່າງ. |
| | 4 | ມາລະຍາດໃນການນົບໄຫວ້ | 2. ການເລົ່າຄໍາຄ່ອງຄອບຄົວຂອງຂ້ອຍປະກອບທ່າທາງ.<br>3. ມາລະຍາດໃນການນົບຜູ້ໃຫ່ຍ: ພໍ່ ແມ່ ອ້າຍ, ເອື້ອຍ ແລະ ຄູອາຈານ, ຍໍມືນົບພຽງໜ້າເອິກ, ກົ້ມຫົວລົງ ແລະ ການນົບໄຫ້ວພະຍໍມືພຽງຫົວ | ບົດຄໍາຄ່ອງ ຄອບຄົວ ຂອງຂ້ອຍ | | 1 ສັງເກດການເລົ່າຄໍາຄ່ອງຄອບຄົວຂອງຂ້ອຍ ປະກອບທ່າທາງ<br>3 ສັງເກດການບອກການນົບຜູ້ໃຫ່ຍ ແລະ ການໄຫວ້ພະ. |
| | 5 | ມາລະຍາດໃນການໄປ, ມາ | 1 ມາລະຍາດໃນການໄປ,ມາ: ຂໍອະນຸຍາດ ແລະ ບອກສະຖານທີ່ທີ່ຕ້ອງການໄປ. | ຕົວເດັກ | 2 ບົດຄໍາຄ່ອງ ຄອບຄົວຂອງຂ້ອຍ | 1 ສັງເກດການບອກມາລະຍາດໃນການໄປ, ມາ. |

### 1.2 ການວິເຄາະເນື້ອໃນໜ່ວຍການສອນກິດຈະກໍາວົງມົນຂັ້ນອະນຸບານ 2

ໜ່ວຍທີ 3 ໂຮງຮຽນຂອງຂ້ອຍ

| ອາທິດ | ມື້ | ຫົວຂໍ້ | ເນື້ອໃນວິງມົນ | ອຸປະກອນ | | ປະເມີນ |
|---|---|---|---|---|---|---|
| | | | | ວັດຖຸຈິງ | ສິ່ງທີ່ຜະລິດ | |
| 1 | 1 | ໂຮງຮຽນ ແລະ ຫ້ອງຮຽນ | 1. ການເລົ່າຄຳຄ່ອງ ໂຮງຮຽນອະນຸບານ.<br>2. ຊື່ໂຮງຮຽນ, ຫ້ອງຮຽນ ແລະ ໝູ່ເພື່ອນໃນຫ້ອງຮຽນ.<br>3. ການອ່ານອອກສຽງພະຍັນຊະນະປະກອບຮູບພາບໃນແຜນຕົວອັກສອນ: ຂ ສ ຖ ຜ ຝ ຫ. | | 1. ປຶດຄຳຄ່ອງໂຮງຮຽນອະນຸບານ.ຮູບພາບໂຮງຮຽນ, ຫ້ອງຮຽນ<br>2. ແຜນໂປສະເຕີຕົວອັກສອນລາວ ຂ ສ ຖ ຜ ຝ ຫ | 1. ການເລົ່າຄຳຄ່ອງໂຮງຮຽນອະນຸບານປະກອບທ່າທາງຕາມຈິນຕະນາການ.<br>2. ຄວາມຖືກຕ້ອງໃນການບອກຊື່ໂຮງຮຽນ, ຫ້ອງຮຽນ, ໝູ່ເພື່ອນໃນຫ້ອງຮຽນ.<br>3. ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບໃນແຜນຕົວອັກສອນ |
| | 2 | ຜູ້ອຳນວຍການ ແລະ ຄູປະຈຳຫ້ອງ | 1. ຊື່ຜູ້ອຳນວຍການໂຮງຮຽນ...ມີໜ້າທີ່ຮັບຜິດຊອບນຳພາ ແລະ ຊ່ວຍເຫຼືອຄູ ເດັກທຸກຄົນໃນຫ້ອງຮຽນ ໃນການເຄື່ອນໄຫວຫຼິ້ນ, ກິນ, ນອນຮຽນ.<br>2 ຊື່ຄູປະຈຳຫ້ອງ...ມີໜ້າທີ່ສິດສອນແລະເບິ່ງແຍງລ້ຽງດູ. ນຳພາເດັກຫຼິ້ນ, ກິນ, ນອນ, ຮຽນ. ສີແດງ, ສີເຫຼືອງ ແລະ ວາງສີຕາມແບບ:ວາງຮູບພາບສໍສີເຫຼືອງ,ສໍສີແດງສະຫຼັບກັນ: ຄູ່. | ຜູ້ອຳນວຍການໂຮງຮຽນ ແລະ ຄູປະຈຳຫ້ອງ | 1 ປຶດຄຳຄ່ອງໂຮງຮຽນອະນຸບານ<br>2 ຮູບພາບ: ສໍສີເຫຼືອງ 3 ກ້ານ, ສໍສີແດງ 3 ກ້ານ, ແຜນແບບການວາງສີ: ຮູບພາບສໍສີເຫຼືອງ, ສໍສີແດງວາງສະຫຼັບການ 3 ຄູ່. | 1. ຄວາມຖືກຕ້ອງໃນການບອກຊື່ຜູ້ອຳນວຍການໂຮງຮຽນ, ຄູປະຈຳຫ້ອງແລະໜ້າຮັບທີຜິດຊອບ.<br>2. ຄວາມຖືກຕ້ອງໃນການບອກສີ ແລະ ການວາງສີຕາມແບບ. |
| | 3 | ແມ່ລ້ຽງ ແລະ ພະນັກງານອະນາໄມ. | 1. ຊື່ແມ່ລ້ຽງ...ໜ້າທີ່ຮັບຜິດຊອບແຕ່ງອາຫານໃຫ້ເດັກກິນ.<br>2. ຊື່ພະນັກງານອະນາໄມ...ໜ້າທີຮັບຜິດຊອບທຳຄວາມສະອາດໃນບໍລິເວນໂຮງຮຽນ. | ແມ່ລ້ຽງ, ພະນັກງານອະນາໄມເດີ່ນ | ຮູບພາບ ແມ່ລ້ຽງ ແລະ ພະນັກງານອະນາໄມ. | 1. ຄວາມຖືກຕ້ອງໃນການບອກຊື່, ໜ້າທີ່ຮັບຜິດຊອບຂອງແມ່ລ້ຽງ ແລະ ພະນັກງານອະນາໄມ.<br>2. ຄວາມຖືກຕ້ອງໃນການເວົ້າຄຳ |

| | | | | | | |
|---|---|---|---|---|---|---|
| | | | 3. ການເວົ້າຄຳສັບຕາມຮູບພາບ: ແມ່ລ້ຽງ, ພະນັກງານອະນາໄມ.<br>4. ການເວົ້າເປັນປະໂຫຍກສັ້ນ: ແຕ່ງອາຫານໃຫ້ເດັກນ້ອຍກິນ, ອະນາໄມເດີ່ນໂຮງຮຽນ | ໂຮງຮຽນ | | ສັບຕາມຮູບພາບ ແລະ ການເວົ້າເປັນປະໂຫຍກສັ້ນ. |
| | 4 | ການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ. | 1. ການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ:<br>2. ເວົ້າຈາສຸພາບເມື່ອຜູ້ໃຫ່ຍເອີ້ນ ຂານຕອບໂດຍ<br>3 ເວລາເວົ້າກັບຜູ້ໃຫ່ຍ ໃຊ້ຄຳເວົ້າຂ້ານ້ອຍ ແທນຊື່ຕົນ ເວລາຮັບສິ່ງຂອງດັ່ງກ່າວ ຂອບໃຈ ທຸກຄັ້ງ..<br>4 ເວລາພົບຜູ້ໃຫ່ຍຍໍມືນົບກ່າວຄຳສະບາຍດີ<br>5 ເວລາຕົນເອງຕ້ອງການສິ່ງຂອງຕ້ອງກ່າວຄຳອະນຸຍາດ, ເວລາກະທຳຜິດ ຕ້ອງກ່າວຄຳຂໍໂທ<br>6 ເວລາຍ່າງກາຍໜ້າຜູ້ໃຫ່ຍຕ້ອງກົ້ມຫົວ.<br>7 ຕົວເລກ 5-6, ລຽງລຳດັບຕົວເລກແຕ່ຫຼາຍ ຫາ ໜ້ອຍ ແລະ ແຕ່ໜ້ອຍ ຫາ ຫຼາຍ.: 1-3, 3-1. | | ຮູບພາບເດັກນ້ອຍນົບຜູ້ໃຫ່ຍ, ບັດຕົວເລກ 5, 6. | 1. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ.<br>2. ຄວາມຖືກຕ້ອງໃນການບອກຕົວເລກ 5-6 ການລຽງລຳດັບຕົວເລກແຕ່ຫຼາຍ ຫາ ໜ້ອຍ ແລະ ໜ້ອຍ ຫາ ຫຼາຍ. |
| | 5 | | 1. ການຮ້ອງເພັງ ເຮົາມາໂຮງຮຽນ ຕາມຈັງຫວະ.<br>2. ການປະຕິບັດກິດຈະກຳຮ່ວມກັບຄູ: ຮ້ອງເພງ, ຟ້ອນ, ຫຼິ້ນກິລາ, ປູກດອກໄມ້, ຫົດນໍ້າດອກໄມ້.<br>3. ການເວົ້າຄຳສັບຕາມຮູບພາບ: ດອກໄມ້.<br>4. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ດ ( ດອກໄມ້ ).<br>5. ການເວົ້ນເປັນປະໂຫຍກສັ້ນ: ຂ້ອຍມາ | | 1 ບົດເພງເຮົາມໂຮງຮຽນ<br>2 ຮູບພາບ:ເດັກນ້ອຍຮ້ອງເພງ, ຟ້ອນ, ດອກໄມ້<br>3 ບັດຄຳສັບ:ດອກໄມ້ ແລະ ພະຍັນຊະນະ ດ. | 1. ການຮ້ອງເພງ ເຮົາມາໂຮງຮຽນ ຕາມຈັງຫວະ.<br>2. ຄວາມຖືກຕ້ອງໃນການບອກການປະຕິບັດກິດຈະກຳຮ່ວມກັບຄູການເວົ້າເປັນປະໂຫຍກສັ້ນ<br>3. ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບ ແລະ ການເວົ້າອອກສຽງພະຍັນຊະນະຕົ້ນ |

| | | | | | | |
|---|---|---|---|---|---|---|
| | | | ໂຮງຮຽນ, ຂ້ອຍຮ້ອງເພງ, ຂ້ອຍປູກດອກໄມ້, ຂ້ອຍຫົດນ້ຳດອກໄມ້, ຂ້ອຍຫຼິ້ນກິລາ. | | | ຕາມຄຳສັບ. |
| 2 | 1 | ຫ້ອງຕ່າງໆ ແລະ ຊື່ຄູ ຫ້ອງ ຂ້າງຄຽງ | 1. ຊື່ຫ້ອງຮຽນ... ແລະ ຊື່ຄູຫ້ອງຂ້າງຄຽງ...<br>2. ການອ່ານອອກສຽງພະຍັນຊະນະປະກອບຮູບພາບພາຍໃນແຜນຕົວອັກສອນ: ກ ຈ ດ ຕ ບ ປ ຢ ອ. | | 1 ຫ້ອງຮຽນແລະ ຄູຫ້ອງຂ້າງຄຽງ<br>2 ແຜນໂປສເຕີຕົວອັກສອນລາວ ກ ຈ ດ ຕ ບ ປ ຢ ອ.<br>3 ບົດຄຳຄ່ອງ ໂຮງຮຽນອະນຸບານ. | 1. ຄວາມຖືກຕ້ອງໃນການບອກຊື່ຫ້ອງຮຽນ ຊື່ຄູຫ້ອງຂ້າງຄຽງ.<br>2. ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະປະກອບຮູບພາບໃນແຜນຕົວອັກສອນ. |
| | 2 | ຫ້ອງຮຽນ | 1. ປະໂຫຍດຂອງຫ້ອງຮຽນ:ຫ້ອງຮຽນແມ່ນບ່ອນທີ່ຮຽນຂອງເດັກ ແລະ ຄູຮ່ວມກັນເຮັດກິດຈະກຳຫຼິ້ນ ແລະ ການຮຽນຮູ້ຕ່າງໆແຕ່ລະວັນ.<br>2. ເຄື່ອງໃຊ້ໃນຫ້ອງຮຽນ: ໂຕະ ຕັ່ງ ກະດານ ສໍຂາວ ປຶ້ມນິທານ ປຶ້ມຂຽນ ສໍດຳ ແລະ ສໍສີ<br>3. ການບົວລະບັດຮັກສາຫ້ອງຮຽນ: ຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ,ເຊັດ,ຖູ, ກວາດຫ້ອງໃຫ້ສະອາດ.<br>4. ການບົວລະບັດຮັກສາເຄື່ອງໃຊ້ຕ່າງໆ: ເຊັດ ແລະ ເກັບມ້ຽນເຄື່ອງໃຊ້ຕ່າງໆໃຫ້ຖືກບ່ອນ.<br>5. ຂະໜາດ: ສໍດຳຍາວເທົ່າກັນ, ສັ້ນກວ່າ, ຍາວກວ່າ ແລະ ວາງຮູບພາບຕາມຂະໜາດ: ວາງຮູບສໍດຳສັ້ນ, ຍາວສະຫຼັບກັນ 3 ຄູ່. | ໂຕະ, ຕັ່ງ, ກະດານ, ສໍຂາວ, ປຶ້ມນິທານ, ປຶ້ມຂຽນ, ສໍດຳສັ້ນ-ຍາວ, ສໍສີ. | 1 ຮູບພາບສໍດຳສັ້ນ 3 ກ້ານ, ຍາວ 3 ກ້ານ.<br>2 ແຜນແບບການວາງຮູບພາບ: ສໍດຳສັ້ນ ແລະ ຍາວວາງສະຫຼັບກັນ 3 ຄູ່. | 1. ຄວາມຖືກຕ້ອງໃນການບອກປະໂຫຍກຫ້ອງຮຽນ, ເຄື່ອງໃຊ້ ແລະ ການບົວລະບັດຮັກສາ<br>2. ຄວາມຖືກຕ້ອງໃນການບອກຂະໜາດ:ເທົ່າກັນ, ຍາວກ່ວາ, ສັ້ນວກ່ວາ ແລະ ການວາງຮູບພາບຕາມຂະໜາດ. |
| | 3 | ມຸມອ່ານ ຫຼື ຫ້ອງອ່ານ | 1. ການເວົ້າຄຳສັບຕາມຮູບພາບ: ປຶ້ມຂຽນ, ປຶ້ມຮຽນ, ປຶ້ມນິທານ, ສໍາດໍາ, ຫ້ອງອ່ານ ແລະ ການເລົ່າຄຳຄ່ອງ ຫ້ອງອ່ານສະອາດປະກອບທ່າ | ຫ້ອງອ່ານ ຫຼືມູມອ່ານ ເຄື່ອງໃຊ້: | 1 ບົດຄ□າຄ່ອງ: ຫ້ອງອ່ານສະອາດ,ຮູບພາບ: ປຶ້ມຂຽນ,ປຶ້ມນິທານ, ສໍດຳ | 1 ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບກາຍເລົ່າຄຳຄ່ອງປະກອບທ່າທາງຕາມ |

| | | | | | | |
|---|---|---|---|---|---|---|
| | | | ທາງ.<br>2. ປະໂຫຍກຫ້ອງອ່ານ: ເປັນບ່ອນໃຫ້ເດັກຮຽນຮູ້ຈາກການອ່ານປຶ້ມ ແລະ ເບິ່ງຮູບພາບຕ່າງໆ.<br>3. ເຄື່ອງໃຊ້: ໂຕະ, ຕັ່ງ, ປຶ້ມອ່ານ, ປຶ້ມນິທານ.<br>4. ການປົວລະບັດຮັກສາ:ຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ ເຊັດ-ຖູ, ກວດຫ້ອງໃຫ້ສະອາດ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ.<br>5. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ: ສ (ສໍດຳ), ຫ (ຫ້ອງອ່ານ), ປ(ປຶ້ມຂຽນ, ປຶ້ມນິທານ). | ໂຕະ, ຕັ່ງ, ປຶ້ມນິທານ ປຶ້ມອ່ານ | , ຫ້ອງອ່ານ.<br>2 ບັດພະຍັນຊະນະ: ສ, ປ, ຫ ແລະ ບັດຄຳສັບ: ສໍດຳ, ຫ້ອງອ່ານ, ປຶ້ມຂຽນ ແລະ ປຶ້ມນິທານ | ຈິນຕະນາການ;ການບອກປະໂຫຍດຫ້ອງອ່ານ,ເຄື່ອງໃຊ້ ແລະ ການປົວລະບັດຮັກສາ.<br>2 ຄວາມຖືກຕ້ອງໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ |
| | 4 | ຫ້ອງອາຫານ | 1 ປະໂຫຍດຫ້ອງອາຫານ: ເປັນບ່ອນສຳລັບກິນເຂົ້າຮ່ວມກັນກັບເດັກ.<br>2 ເຄື່ອງໃຊ້: ໂຕະ, ຕັ່ງ, ຕຸກນ້ຳດື່ມ, ຈອກ, ຖ້ວຍ, ບ່ວງ ແລະ ອື່ນໆ.<br>3 ການປົວລະບັດຮັກສາ: ລ້າງຖ້ວຍ, ບ່ວງ, ຈອກ ໃຫ້ສະອາດ ແລະ ເກັບມ້ຽນໃຫ້ຖືກບ່ອນ. ເຊັດໂຕະ, ຕັ່ງ ໃຫ້ສະອາດ ແລະ ຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ<br>2 ຕົວເລກ ທີ່ຂາດຫາຍໄປ 1 ຕົວ: 1-4. | ໂຕະ, ຕັ່ງ, ຕຸກນ້ຳດື່ມ, ຈອກ, ຖ້ວຍ, ບ່ວງ | 1 ຮູບພາບ ຫຼື ຫ້ອງອາຫານໃນໂຮງຮຽນ ແລະ ບັດຕົວເລກ 1-4.<br>2 ຮູບພາບ: ໂຕະ, ຕັ່ງ, ຕຸກນ້ຳດື່ມ, ຈອກ, ຖ້ວຍ, ບ່ວງ | 1 ຄວາມຖືກຕ້ອງ ໃນການບອກປະໂຫຍດຂອງອາຫານ, ເຄື່ອງໃຊ້ແລະ ປົວລະບັດຮັກສາ.<br>2 ຄວາມຖືກຕ້ອງໃນການບອກຕົວເລກທີ່ຂາດຫາຍໄປ 1 ຕົວ. |
| | 5 | ຫ້ອງນ້ຳ | 1 ປະໂຫຍດຫ້ອງນ້ຳ: ເປັນບ່ອນສຳລັບລ້າງໜ້າ, ຖູແຂ້ວ, ຖ່າຍ ແລະ ອາບນ້ຳ<br>2 ເຄື່ອງໃຊ້: ຄຸນ້ຳ, ໂອ, ສະບູ, ຢາຖູແຂ້ວ, ແປງຖູແຂ້ວ ແລະ ຟອຍຖູພື້ນ; ການປົວລະບັດຮັກສາ: ຖ່າຍໃຫ້ຖືກບ່ອນ, ຫຼັງ | ຄຸນ້ຳ, ໂອ, ສະບູ, ຢາຖູແຂ້ວ, ແປງຖູແຂ້ວ | 1 ຮູບພາບ ຫຼື ຫ້ອງນ້ຳໂຮງຮຽນ, ຮູບພາບ: ເດັກນ້ອຍລ້າງມື, ຄຸນ້ຳ, ຕຸກນ້ຳ: ພະຍັນຊະນະ ຄ ສ ຢ ປ ຟ ແລະ ບັດຄຳ | 1 ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບປະໂຫຍດຫ້ອງນ້ຳເຄື່ອງໃຊ້, ການປົວລະບັດຮັກສາ ແລະ ການເວົ້າຄຳສັບຕາມຮູບພາບ. |

| | | | | | | |
|---|---|---|---|---|---|---|
| | | | ຈາກຖ່າຍແລ້ວລ້າງຫົວອິດ ຫຼື ຊັກໂຄກ ແລະ ປິດກ໊ອກນໍ້າທຸກຄັ້ງ ກ່ອນອອກຈາກຫ້ອງນໍ້າ. ເກັບເຄື່ອງເປັນລະບຽບ, ຖິ້ມຂີ້ເຫຍື່ອຖືກບ່ອນ.<br>3 ການເວົ້າຄໍາສັບຕາມຮູບພາບ: ຖຸນໍ້າ, ໂອ, ສະບູ, ຢາຖູແຂ້ວ, ແປງຖູແຂ້ວ ແລະ ຟອຍຖູພື້ນ.<br>4 ການເວົ້າອອກສຽງພະຍັນຊະນະຕົ້ນ ຕາມຄໍາສັບທີ່ມີຕົວ ຖ (ຖຸນໍ້າ). ສ (ສະບູ). ຢ (ຢາຖູແຂ້ວ). ປ (ແປງຖູແຂ້ວ). ຟ (ຟອຍຖູພື້ນ) ແລະ ການເວົ້າເປັນປະໂຫຍກສັ້ນ: ຂ້ອຍຖ່າຍໜັກ, ຂ້ອຍຖ່າຍເບົາ, ຂ້ອຍລ້າງຫົວອິດ ແລະ ຂ້ອຍປິດກ໊ອກນໍ້າ. | | ສັບ: ຖຸນໍ້າ, ສະບູ, ຢາຖູແຂ້ວ, ແປງຖູແຂ້ວ, ຟອຍຖູພື້ນ.<br>2 ຮູບພາບ: ຖຸນໍ້າ, ໂອ, ສະບູ, ຢາຖູແຂ້ວ, ແປງຖູແຂ້ວ ແລະ ຟອຍຖູພື້ນ. | 2 ວາມຖືກຕ້ອງໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄໍາສັບ ແລະ ການເວົ້າເປັນປະໂຫຍກສັ້ນ. |
| 3 | 1 | ເດີ່ນໂຮງຮຽນ | 1. ການເລົ່າຄໍາຄ່ອງ ເດີ່ນໂຮງຮຽນ ປະກອບທ່າທາງ, ນັບປາກເປົ່າ 1-10.<br>2.ສວນປະປອບ: ຫຼັກທຸງ, ເດີ່ນຫຼິ້ນ, ຮົ້ວ, ເຄື່ອງຫຼິ້ນ, ສວນດອກໄມ້ ແລະ ຕົ້ນໄມ້: ເປັນປະໂຫຍດເປັນບ່ອນໃຫ້ເດັກຫຼິ້ນ ແລະ ເຄື່ອນໄຫວກິດຈະກໍາການຮຽນນອກຫ້ອງ.<br>3.ການເວົ້າຄໍາສັບຕາມຮູບພາບ: ຫຼັກທຸງ, ຮົ້ວ, ເດີ່ນຫຼິ້ນ, ສວນດອກໄມ້ ແລະ ຕົ້ນໄມ້.<br>4.ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄໍາສັບທີ່ມີຕົວ ຮ(ຮົ້ວ), ດ(ເດີ່ນຫຼິ້ນ), ສ(ສວນດອກ | ເດີ່ນໂຮງຮຽນ | 1. ບົດຄໍາຄ່ອງ:ເດີ່ນໂຮງຮຽນ.ຮູບພາບຫຼັກທຸງ, ຮົ້ວ, ສວນດອກໄມ້, ເດີ່ນຫຼິ້ນ.<br>2. ບັດຄໍາສັບ: ຫຼັກທຸງ, ຮົ້ວ, ເດີ່ນຫຼິ້ນ, ສວນດອກໄມ້ ແລະ ຕົ້ນໄມ້ | 1. ການເລົ່າຄໍາຄ່ອງເດີ່ນໂຮງຮຽນປະກອບທ່າທາງຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການນັບປາກເປົ່າ<br>2. ຄວາມຖືກຕ້ອງໃນການບອກສ່ວນປະກອບແລະ ປະໂຫຍດເດີ່ນໂຮງຮຽນ.<br>3. ຄວາມຖືກຕ້ອງໃນການເວົ້າຄໍາສັບຕາມຮູບພາບ ແລະ ການເວົ້າອອກສຽງພະຍັນຊະນະຕົ້ນ |

| | | | | | | |
|---|---|---|---|---|---|---|
| | | | ໄມ້), ຕ(ຕົ້ນໄມ້). | | | ຕາມຄຳສັບ. |
| | 2 | ເຄື່ອງຫຼິ້ນໃນເດີ່ນໂຮງຮຽນ | 1. ການເວົ້າຄຳສັບຕາມຮູບພາບ: ມ້າໝູນ, ຣາວໂຫນ ແລະ ຕໍ່ຕ່າງລະດັບ ແລະ ການຮ້ອງເພງຫຼິ້ນໃນເດີ່ນ.<br>2. ເຄື່ອງຫຼິ້ນໃນເດີ່ນໂຮງຮຽນ: ມ້າໝູນ, ຣາວໂຫນ ແລະ ຕໍ່ຕ່າງລະດັບ.<br>4ການນຳໃຊ້: ຫຼິ້ນໃຫ້ຖືກວິທີ ແລະ ປະຕິບັດຕາມຄຳແນະນຳຂອງຄູ.<br>5ການບົວລະບັດຮັກສາເຄື່ອງຫຼິ້ນ: ເກັບ,ຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ, ຮັກສາເຄື່ອງຫຼິ້ນບໍ່ໃຫ້ເປເພ ແລະ ລະວັງຕົວເອງໃນເວລາຫຼິ້ນ.<br>3. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບທີ່ມີຕົວ ຣ(ຣາວໂຫນ), ຕ(ຕໍ່ຕ່າງລະດັບ, ມ (ມ້າໝູນ) | | 1. ຮູບພາບ ຫຼືເຄື່ອງຫຼິ້ນໃນເດີ່ນໂຮງຮຽນ: ມ້າໝູນ, ຣາວໂຫນ, ຕໍ່ຕ່າງລະດັບ.<br>2. ບົດເພງ ຫຼິ້ນໃນເດີ່ນ, ຮູບພາບ:ມ້າໝູນ, ຣາວໂຫນ ແລະ ຕໍ່ຕ່າງລະດັບ.<br>3. ບັດຄຳສັບພະຍັນຊະນະ: ຣ ຕ ມ ແລະ ຄຳສັບ: ຣາວໂຫນ, ຕໍ່ຕ່າງລະດັບ ແລະ ມ້າໝູນ. | 1. ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບໃນບົດເພງ ແລະ ການຮ້ອງເພງ ຫຼິ້ນໃນເດີ່ນຕາມຈັງຫວະ.<br>2. ຄວາມຖືກຕ້ອງໃນການຕອບຄຳຖາມກ່ຽວກັບຊື່ເຄື່ອງຫຼິ້ນໃນເດີ່ນໂຮງຮຽນ. ການນຳໃຊ້ ແລະ ການປົກປັກຮັກສາ.<br>3. ຄວາມຖືກຕ້ອງໃນການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ. |
| | 3 | ຫຼິ້ນນໍ້າ, ຫຼິ້ນຊາຍ | 1. ຊື່ເຄື່ອງຫຼິ້ນ: ອ່າງ, ນໍ້າ, ດິນຊາຍ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານນ້ອຍ ແລະ ເຊີງນ້ອຍ.<br>2. ການບົວລະບັດຮັກສາ:ຫຼັງຈາກການຫຼິ້ນແລ້ວອະນາໄມອຸປະກອນໃຫ້ສະອາດ ແລະ ເກັບມ້ຽນໃຫ້ຖືກບ່ອນ.<br>3. ການເວົ້າຄຳສັບຕາມຮູບພາບ: ດິນຊາຍ, ບົວນ້ອຍ, ຊວ້ານນ້ອຍ ແລະ ເຊີງນ້ອຍ<br>4. ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ | ອ່າງ, ນໍ້າ, ດິນຊາຍ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານນ້ອຍ ແລະ ເຊີງນ້ອຍ. | 1. ບົດເພງ ຫຼິ້ນໃນເດີ່ນ.<br>2. ຮູບພາບ ຫຼື ວັດຖຸຈິງ: ເຄື່ອງຫຼິ້ນ: ອ່າງ, ນໍ້, ດິນຊາຍ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານນ້ອຍ ແລະ ເຊີງນ້ອຍ.<br>3. ບັດຄຳສັບ: ດິນຊາຍ, ຄຸ, ບົວນ້ອຍ, ກະໂປະ, | 1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງຫຼິ້ນໃນອ່າງນໍ້າ, ຫຼິ້ນຊາຍ ແລະ ການບົວລະບັດຮັກສາ.<br>2. ຄວາມຖືກຕ້ອງໃນການເວົ້າຄຳສັບຕາມຮູບພາບ ແລະ ການເວົ້າອອກສຽງພະຍັນຊະນະຕົ້ນຕາມຄຳສັບ. |

| | | | | | | |
|---|---|---|---|---|---|---|
| | | | ທີ່ມີຕົວ ບ(ບົວນ້ອຍ), ຊ(ຊວ້ານນ້ອຍ), ຂ (ເຂັງນ້ອຍ) | | ກະປ໋ອງ, ຊວ້ານນ້ອຍ ແລະ ເຂັງນ້ອຍ. | |
| | 4 | ເວທີ ສະແດງ | 1. ປະໂຫຍດເວທີການສະແດງ:ເປັນບ່ອນສະແດງສິລະປະ, ຕອບຄຳຖາມ ແລະ ເຄື່ອນໄຫວອື່ນຂອງໂຮງຮຽນ.<br>6 ການບົວລະບັດຮັກສາ: ບໍ່ຂີດແຕ້ມໃສ່ຝາ, ຊ່ວຍຄູປັດກວາດ, ເຊັດຖູ, ຖິ້ມຂີ້ເຫຍື່ອໃສ່ຖັງ.<br>2. ຮູບເລຂາຄະນິດ: ຈະຕຸລັດ, ສີ່ແຈ ແລະ ການວາງຮູບເລຂາຄະນິດຕາມແບບ: ວາງຮູບຈະຕຸລັດ ແລະ ສີ່ແຈສະຫຼັບກັນ 3 ຄູ່. | | 1. ຮູບພາບ ຫຼື ເວທີການສະແດງສິລະປະໃນໂຮງຮຽນ.<br>2. ຮູບພາບ ເດັກນ້ອຍສະແດງສິລະປະ<br>3. ຮູບຈະຕຸລັດ, ສີ່ແຈ, ແຜນແບບການວາງຮູບຈະຕຸລັດ ແລະ ສີ່ແຈວາງສະຫຼັບກັບ3 ຄູ່. | 1. ຄວາມຖືກຕ້ອງໃນການບອກປະໂຫຍດແລະການບົວລະບັດຮັກສາເວທີການສະແດງ.<br>2. ຄວາມຖືກຕ້ອງໃນການບອກເລຂາຂະນິດ ແລະ ວາງຮູບເລຂາຄະນິດຕາມແບບ. |
| | 5 | ບົວລະບັດຮັກສາເດີ່ນໂຮງຮຽນ | 1. ການຟັງນິທານເລື່ອງບ້ານຫຼານມີໂຮງຮຽນແລ້ວ.<br>2. ການບົວລະບັດຮັກສາເດີ່ນໂຮງຮຽນ: ເກັບຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ, ຫົດນໍ້າດອກໄມ້ ແລະ ຕົ້ນໄມ້.<br>3. ຄ່າຈຳນວນຂອງຮູບພາບປຶ້ມ 5 ຫົວ ແລະ ກະເປົ໋າ 6 ຫົວ. | | 1. ບົດນິທານເລື່ອງ ບ້ານຫຼານມີໂຮງຮຽນແລ້ວ ແລະ ຮູບພາບປະກອບບົດເລື່ອງ.<br>2. ຮູບພາບ: ເດັກນ້ອຍອະນາໄມເດີ່ນໂຮງຮຽນ.<br>3. ຮູບພາບ: ປຶ້ມ 5 ຫົວ ກະເປົ໋າ 6 ໜ່ວຍ ແລະ ບັດຕົວເລກ 5-6. | 1. ຄວາມມ່ວນຊື່ນໃນການຟັງນິທານ.<br>2. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາເດີ່ນໂຮງຮຽນ.<br>3. ຄວາມຖືກຕ້ອງໃນການບອກຄ່າຈຳນວນ 5-6. |
| 4 | 1 | ມາ ໂຮງຮຽນ | 1. ການຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ.<br>2. ການປະຕິບັດຕົນໃນການມາໂຮງຮຽນ: ມາໂຮງຮຽນທຸກມື້ໃຫ້ທັນເວລາ, ນຸ່ງເຄື່ອງແຕ່ງໂຕສະອາດ ແລະ ປະຕິບັດຕາມລະບຽບຂອງຫ້ອງ | ເຄື່ອງເຄາະຈັງຫວະ | 1. ບົດເພງໄປໂຮງຮຽນທັນເວລາ<br>2. ຮູບພາບ: ເດັກນ້ອຍນຸ່ງເຄື່ອງນັກຮຽນ ແລະ ມາ | 1. ການຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ ຕາມຈັງຫວະ<br>2. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນເວລາມາ |

| | | | | | | |
|---|---|---|---|---|---|---|
| | | | ຮຽນ.<br>3. ການເວົ້າເປັນປະໂຫຍກສັ້ນ: ນຸ່ງເຄື່ອງສະອາດ ແລະ ມາໂຮງຮຽນປົກກະຕິ. | | ໂຮງຮຽນ. | ໂຮງຮຽນ<br>3. ຄວາມຖືກຕ້ອງໃນການເວົ້າເປັນ ປະໂຫຍກສັ້ນ. |
| | 2 | ຫຼິ້ນຮ່ວມ ກັບໝູ່ ເພື່ອນ | 1. ການເລົ່າຄຳຄ່ອງ ຫຼິ້ນຮ່ວມໝູ່ ປະກອບທ່າທາງ<br>2. ການປະຕິບັດຕົນໃນເວລາຫຼິ້ນຮ່ວມກັບໝູ່ເພື່ອນ: ຫຼິ້ນດ້ວຍຄວາມມ່ວນຊື່ນ, ປອດໄພ, ແບ່ງປັນເຄື່ອງຫຼິ້ນ, ຊ່ວຍເຫຼືອກັນໃນເວລາຫຼິ້ນ: ລ້າງມື-ຕີນໃຫ້ສະອາດ.<br>3. ການປຽບທຽບຈຳນວນສິ່ງຂອງ 3 ຢ່າງເທົ່າກັນ: ລົດນ້ອຍ 3 ຄັນຕໍ່ໝາກບານ 3 ໜ່ວຍ ແລະ ໝາກບານ 3 ໜ່ວຍຕໍ່ຕຸກກະຕາ 3 ຕົວ. | ລົດນ້ອຍ, ໝາກບານ, ຕຸກກະຕາ. | 1. ບົດຄຳຄ່ອງ ຫຼິ້ນຮ່ວມໝູ່; ຮູບພາບ ເດັກນ້ອຍຫຼິ້ນ ເຄື່ອງຫຼິ້ນຮ່ວມກັບໝູ່.<br>2. ຮູບພາບທີ່ມີຈຳນວນ 3 ລົດນ້ອຍ, ໝາກບານ, ຕຸກກະຕາ | 1. ການເລົ່າຄຳຄ່ອງ ຫຼິ້ນຮ່ວມໝູ່ ປະກອບທ່າທາງຕາມ ຈິນຕະນາການ ແລະ ຄວາມ ຖືກຕ້ອງໃນການບອກການ ປະຕິບັດຕົນໃນການຫຼິ້ນຮ່ວມ ກັບໝູ່ເພື່ອນ.<br>2. ຄວາມຖືກຕ້ອງໃນການ ປຽບທຽບຈຳນວນສິ່ງຂອງ 3 ຢ່າງເທົ່າກັນ. |
| | 3 | ຮຽນຮ່ວມ ກັບໝູ່ ເພື່ອນ | 1. ການຟັງນິທານເລື່ອງ ນາງເຜິ້ງນ້ອຍຢາກມີໝູ່<br>2. ການເວົ້າເປັນປະໂຫຍກສັ້ນ: ຕັ້ງໃຈຟັງຄູເວົ້າ, ບໍ່ຢອກໝູ່ໃນເວລາຮຽນ<br>3. ການປະຕິບັດໃນການຮຽນຮ່ວມກັບໝູ່ເພື່ອນ: ຕັ້ງໃຈຟັງຄູເວົ້າ, ບໍ່ຢອກໝູ່ໃນເວລາຮຽນ. | | 1. ບົດນິທານເລື່ອງ ນາງເຜິ້ງ ນ້ອຍຢາກມີໝູ່<br>2. ຮູບພາບປະກອບບົດ ເລື່ອງ | 1. ຄວາມມ່ວນຊື່ນໃນການຟັງ ນິທານເລື່ອງ ນາງເຜິ້ງນ້ອຍຢາກ ມີໝູ່<br>2. ຄວາມຖືກຕ້ອງໃນການເວົ້າ ປະໂຫຍກສັ້ນ<br>3. ຄວາມຖືກຕ້ອງໃນການບອກ ການຮຽນຮ່ວມກັບໝູ່ເພື່ອນ. |
| | 4 | ກິນຮ່ວມ ກັບໝູ່ ເພື່ອນ | 1. ການປະຕິບັດຕົນໃນການກິນຮ່ວມກັບໝູ່ເພື່ອນ: ແບ່ງປັນ, ບໍ່ຍາດເຄື່ອງກິນໝູ່, ກິນອາຫານບໍ່ໃຫ້ມີສຽງດັງໃນການຫຍໍ້າ, ບໍ່ຢອກ, ບໍ່ລົມໝູ່ເພື່ອນໃນເວລາກິນອາຫານຢູ່ໃນປາກ, ຫຼັງຈາກກິນອາຫານແລ້ວເກັບມ້ຽນຖ້ວຍ, ບ່ວງ | ຕົວເດັກ, ຖ້ວຍ, ບ່ວງ | 1. ຮູບພາບ: ເດັກນ້ອຍກິນ ອາຫານຮ່ວມກັບໝູ່ ເພື່ອນ | 1. ຄວາມຖືກຕ້ອງໃນການປະຕິບັດ ຕົນໃນການກິນອາຫານຮ່ວມກັບ ໝູ່ເພື່ອນ.<br>2. ຄວາມຖືກຕ້ອງໃນການບອກ ທິດທາງ ແລະ ໄລຍະທາງ. |

| | | | | | | |
|---|---|---|---|---|---|---|
| | | | ໃຫ້ຖືກບ່ອນ.<br>2. ທິດທາງ: ການລຽນແຖວຂອງເດັກ (ທາງໜ້າ, ທາງຫຼັງ, ທາງກາງ) ແລະ ໄລຍະທາງ: ບ່ອງຢູ່ໃກ້ຖ້ອຍ ແລະ ບ່ອງຢູ່ໄກຖ້ວຍ. | | | |
| | 5 | ພັກຜ່ອນຢູ່ໃນ ໂຮງຮຽນ | 1. ການປະຕິບັດຕົນໃນເວລາພັກຜ່ອນຢູ່ໃນໂຮງຮຽນ: ໃນເວລາພັກຜ່ອນ ຫຼັງຈາກຫຼິ້ນ ແລະ ຮຽນບໍ່ລົມກັນ, ບໍ່ຢອກກັນໃນເວລາຮຽນ ,ນອນ,ຫຼັງຈາກຕື່ນນອນເກັບມ້ຽນບ່ອນນອນຕົນເອງໃຫ້ເປັນລະບຽບແລະຖືກບ່ອນທີ່ກຳນົດໄວ້.<br>2. ການຮ້ອງເພງ: ພະຍັນຊະນະລາວ ແລະ ອ່ານອອກສຽງພະຍັນຊະນະໂດຍບໍ່ມີຮູບພາບ: ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ. | | 1. ຮູບພາບ: ເດັກນ້ອຍນອນຮ່ວມກັບໝູ່ເພື່ອນໃນຫ້ອງ.<br>2. ບົດເພງ ພະຍັນຊະນະລາວ ແລະ ບັດພະຍັນຊະນະລາວ: ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ. | 1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນການພັກຜ່ອນຢູ່ໃນໂຮງຮຽນ.<br>2. ການຮ້ອງເພງພະຍັນຊະນະລາວ ແລະ ຄວາມຖືກຕ້ອງໃນການອ່ານອອກສຽງພະຍັນຊະນະໂດຍບໍ່ມີຮູບພາບ. |

### 1.3 ການວິເຄາະເນື້ອໃນໜ່ວຍການສອນກິດຈະກຳວົງມົນຂັ້ນອະນຸບານ 3

ໜ່ວຍທີ 1: ໜ່ວຍຕົນຕົວຂອງຂ້ອຍ

| ອາທິດ | ມື້ | ເນື້ອໃນ | ສື່ການຮຽນ-ການສອນ | | ປະເມີນຜົນ/ຜົນໄດ້ຮັບ |
|---|---|---|---|---|---|
| | | | ວັດຖຸຕົວຈິງ | ສິ່ງທີ່ຜະລິດ | |
| 1 | 1 | 1. ຊື່ ແລະ ນາມສະກຸນ, ຮູບຮ່າງລັກສະນະຕົນເອງ, ໝູ່ເພື່ອນ ແລະ ສ່ວນປະກອບຂອງຮ່າງກາຍ:<br>2. ຊື່ ແລະ ນາມສະກຸນຂອງຕົນເອງ, ໝູ່ເພື່ອນ ທ້າວ.......ເພດຊາຍ; ນາງ.......ເພດຍິງ.<br>3. ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕໍ່, ສູງ. | ເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ ຕຸ້ຍ, ຈ່ອຍ, ສູງ, ຕ່ຳ. | ໂປສເຕີຮ່າງກາຍຂອງຄົນເຮົາ | 1. ຄວາມຖືກຕ້ອງໃນການບອກຊື່, ນາມສະກຸນ,ເພດ,ຮູບຮ່າງລັກສະນະຂອງຕົນເອງແລະໝູ່ເພື່ອນ.<br>2. ຄວາມຖືກຕ້ອງໃນການບອກສ່ວນປະກອບຂອງຮ່າງກາຍ.<br>3. ຄວາມຖືກຕ້ອງໃນການປຽບທຽບໂດຍ |

| | | | | | |
|---|---|---|---|---|---|
| | | ຮ່າງກາຍຂອງຄົນເຮົາປະກອບດ້ວຍ 3 ສ່ວນ: ຫົວເລົ່າຄີງ, ແຂນ ແລະ ຂາ.<br>4. ການປຽບທຽບຄວາມສູງໂດຍໃຊ້ຄໍາວ່າ: ຕ່ຳກວ້າ, ສູງກວ່າ, ສູງເທົ່າກັນ. | | | ໃຊ້ຄໍາວ່າ: ຕ່ຳກວ່າ, ສູງກວ່າ, ສູງເທົ່າກັນ.<br>4. ການເວົ້າຄໍາທີ່ສຸພາບ,ເວົ້າກັບໝູ່ |
| | 2 | 1. ສວນປະກອບຂອງຫົວ, ໃບໜ້າ ແລະ ລັກສະນະຂອງຜົມ.<br>2. ສ່ວນປະກອບຂອງຫົວມີ: ໃບໜ້າ, ຜົມ<br>3. ສວນປະກອບຂອງໃບໜ້າ: ຕາ, ຫູ, ປາກ, ດັງ , ໜ້າຜາກ, ຄິ້ວ, ແກ້ມ, ຄາງ.<br>4. ຜົມ: ສີດໍາ, ສີທອງ.<br>5. ລັກສະນະຂອງຜົມ: ຜົມກູດ ແລະ ຜົມຍາວ.<br>6. ຂະໜາດຂອງຜົມ: ຜົມສັ້ນ ແລະ ຜົມຍາວ.<br>7. ອ່ານອອກສຽງພະຍັນຊະນະຕົ້ນຕາມຄໍາສັບ: ຫູ(ຫ), ຕາ (ຕ), ດັງ (ດ), ຜົມ (ຜ) | ເດັກນ້ອຍຍິງ ແລະ ເດັກນ້ອຍ ຊາຍ, ຜົມກູດ ແລະ ຜົມຊີ່ | 1.ຮູບພາບເດັກນ້ອຍຜົມຊີ່, ຜົມກູດ.<br>2.ໂປສເຕີຮ່າງກາຍຂອງຄົນ.<br>3.ບັດຄໍາສັບ: ດັງ, ຕາ, ຜົມ, ຫູ | 1. ຄວາມຖືກຕ້ອງໃນການບອກສວນປະກອບຂອງຫົວ ແລະ ໃບໜ້າ.<br>2. ຄວາມຖືກຕ້ອງໃນການບອກລັກສະນະຜົມຂອງຕົນເອງ ແລະ ໝູ່ເພື່ອນ.<br>3. ຄວາມຊັດເຈນໃນການອ່ານອອກສຽງພະຍັນຊະນະຕົ້ນຄໍາສັບ. |
| | 3 | 1. ການບົວລະບັດຮັກສາຜົມແລະ ຄຸນປະໂຫຍດ:<br>2. ການບົວລະບັຮັກສາຜົມ: ສະຜົມ, ຫວີຜົມ, ມັດຜົມ ແລະ ປຽຍຜົມ ( ເຝິກປະຕິບັດ )<br>3. ຄຸນປະໂຫຍດຜົມ: ປົກຫຸ້ມໜັງຫົວ, ເຮັດໃຫ້ໃບໜ້າປ່ຽນແປງ ແລະ ສວຍງາມ.<br>4. ການເວົ້າເປັນຄໍາສັບ ແລະ ປະໂຫຍກຕ່າງຮູບພາບ. | ຫວີ, ຢາງມັດຜົມ , ຢາສະຜົມ, ນ້ຳມັນທາຜົມ, ຊາມ , ຖູ, ໂອ, ຜ້າເຊັດຜົມ ແລະ ນ້ຳສະອາດ. | 1.ຮູບພາບ: ເດັກນ້ອຍສະຜົມ, ເດັກນ້ອຍຫວີຜົມ, ເດັກນ້ອຍເປຍຜົມ, ເດັກນ້ອຍມັດຜົມ, ຄົນຕັດຜົມໃຫ້ເດັກນ້ອຍ<br>2.ບັດຄໍາສັບ ແລະ ບັດປະໂຫຍກ: ສະຜົມ, ເປຍຜົມ, ຫວີຜົມ, ມັດຜົມ, ຜົມປົກຫຸ້ມໜັງຫົວ, ເດັກນ້ອຍສະຜົມໃຫ້ | 1. ຄວາມຖືກຕ້ອງໃນການບອກປະໂຫຍດ , ເຄື່ອງໃຊ້ ແລະ ການບົວລະບັດຮັກສາຜົມ.<br>2. ຄວາມຊັດເຈນໃນການເວົ້າເປັນຄໍາສັບ ແລະ ປະໂຫຍກຕາມຮູບພາບ.<br>3. ການປະຕິບັດຕົວຈິງໃນການບົວລະບັດຮັກສາຜົມ.<br>4. ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ. |

| | | | | | |
|---|---|---|---|---|---|
| | | | | ສະອາດ, ເດັກນ້ອຍຍິງເປຍຜົມເປັນລະບຽບ, ເດັກນ້ອຍຊາຍຕັດຜົມໃຫ້ | |
| | 4 | 1. ເຄື່ອງໃຊ້ໃນການລ້າງໜ້າ, ວິທີລ້າງໜ້າ.<br>2. ເຄື່ອງໃຊ້: ນໍ້າ, ສະບູ, ຜ້າເຊັດໜ້າ, ໂອ.<br>3. ວິທີລ້າງໜ້າ: ເອົານໍ້າໃສ່ໜ້າ, ເອົາສະບູທາໃສ່ໜ້າ, ລູບໃບໜ້າໃຫ້ທົ່ວທຸກບ່ອນຄ່ອຍໆແລ້ວຈຶ່ງລ້າງໃຫ້ສະອາດ.<br>4. ວິທີເຊັດໜ້າ: ຫຼັງຈາກລ້າງໜ້າໃຫ້ສະອາດແລ້ວເຊັດໜ້າໃຫ້ແຫ້ງທົ່ວທຸກບ່ອນຂອງໃບໜ້າ.<br>5. ວິທີທາແປ້ງ: ຖອກແປ້ງໃສ່ມືແລ້ວທາໃສ່ໃບໜ້າໃຫ້ທົ່ວ.<br>6. ການເລົ່າຄໍາຄ່ອງໃບໜ້າສະອາດ ແລະ ເວົ້າຄໍາສັບຕາມເນື້ອໃນຄໍາຄ່ອງ, ຜ້າເຊັດໜ້າ, ສະບູ, ໂອ, ນໍ້າ, ເຊັດໜ້າ, ຕັກນໍ້າ.<br>7. ການເວົ້າອອກສຽງຄໍາສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ: ຂາ, ຂ່າ; ຜາ, ຜ້າ; ກາ, ກ້າ. | | 1. ບັດຄໍາສັບ: ຂາ, ຂ່າ; ຜາ, ຜ້າ; ກາ, ກ້າ. ຜ້າເຊັດໜ້າ, ສະບູ, ໂອ, ນໍ້າ.<br>2. ບົດຄໍາຄ່ອງໃບໜ້າສະອາດ | 1.ຄວາມຖືກຕ້ອງໃນການບອກເຄື່ອງໃຊ້ໃນການລ້າງໜ້າ.<br>2. ການປະຕິບັດຕົວຈິງວິທີການລ້າງໜ້າ.<br>3. ຄວາມຖືກຕ້ອງໃນການເລົ່າຄໍາຄ່ອງ, ເວົ້າຄໍາສັບຕາມເນື້ອໃນຄໍາຄ່ອງ.<br>4. ຄວາມຊັດເຈນໃນການເວົ້າອອກສຽງທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ. |
| | 5 | 1. ການສະແດງອາລົມອອກທາງສີໜ້າ:<br>2. ຍິ້ມ: ຍິ້ມແຍ້ມແຈ່ມໃສ.<br>3. ຫົວ: ຫົວສຽງດັງ, ຫົວສຽງຄ່ອຍ.<br>4. ຮ້າຍ: ໜ້າຕາເຂັ່ງຂຶມ.<br>5. ການອ່ານອອກສຽງຄໍາສັບທີ່ປະສົມກັບສະຫຼະ | | 1. ຮູບພາບຄົນຍິ້ມ, ຄົນຫົວ, ຄົນໜ້າຕາເຂັ່ງຂຶ້ມ<br>2. ບັດຄໍາສັບ: ຂາ, ງາ, ສາ, ບາ, ປາ, ຢາ. | 1. ຄວາມຖືກຕ້ອງໃນການບອກການສະແດງອາລົມອອກທາງສີໜ້າ.<br>2. ການປະຕິບັດຕົວຈິງໃນການສະແດງອາລົມອອກທາງສີໜ້າ.<br>3. ຄວາມຊັດເຈນໃນການອ່ານອອກສຽງຄໍາ |

| | | | | | |
|---|---|---|---|---|---|
| | | xາ: ຂາ, ງາ, ສາ, ຕາ, ບາ, ປາ, ຢາ. | | | ສັບທີ່ປະສົມກັບສະຫຼະ xາ ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ. |
| 2 | 1 | 1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຕາ:<br>2. ສວນປະກອບ: ໜ່ອຍຕາ ແລະ ຂົນຕາ.<br>3. ຄຸນປະໂຫຍດ: ໜ່ອຍຕາໃຊ້ໄວ້ເບິ່ງ ແລະ ສັງເກດສິ່ງຕ່າງໆທີ່ຢູ່ອ້ອມຂ້າງຕົວ.<br>4. ການປົວລະບັດຮັກສາຕາ: ລະວັງບໍ່ໃຫ້ຂີ້ຝຸ່ນ ແລະ ແມງໄມ້ເຂົ້າຕາ, ບໍ່ເອົາມືເປື້ອນສີຕາ, ບໍ່ຢູ່ບ່ອນມືດ ແລະ ບໍ່ເບິ່ງສິ່ງທີ່ມີສີຂາວກາງແດງ<br>5. ການເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ເວົ້າເປັນປະໂຫຍກຕາມເນື້ອໃນຄຳຄ່ອງຮັກສາຕາ. | | ບົດຄຳຄ່ອງ: ຮັກສາຕາ.<br><br>ຮູບພາບຕາ | 1. ຄວາມຖືກຕ້ອງໃນການບອກສວນປະກອບ, ຄຸນປະໂຫຍດ, ແລະ ການປົວລະບັດຮັກສາຕາ.<br>2.ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ.<br>3.ການປະຕິບັດຕົວຈິງໃນການປົວລະບັດຮັກສາຜົມ.<br>ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ. |
| | 2 | 1. ການປ້ອງກັນພະຍາດຕາແດງ: ລະວັງບໍ່ເອົາມືເປື້ອນສີຕາ, ບໍ່ໃຫ້ຂີ້ຝຸ່ນເຂົ້າຕາ ແລະ ບໍ່ເອົານ້ຳເປື້ອນລ້າງຕາ, ກິນອາຫານທີ່ມີທາດບຳລຸງສາຍຕາ.<br>2. ເວົ້າເປັນປະໂຫຍກຕາມຮູບພາບ: ຕາໃຊ້ໄວ້ເບິ່ງ, ເດັກນ້ອຍລ້າງຕາ, ເດັກນ້ອຍກິນໝາກຮຸ່ງສຸກ.<br>3. ການອ່ານອອກສຽງສະຫຼະທີ່ມີ ແລະ ບໍ່ມີວັນນະຍຸດ x່, x້. | | 1.ຮູບພາບເດັກນ້ອຍລ້າງຕາ ແລະ ເດັກນ້ອຍກິນໝາກຮຸ່ງສຸກ<br>2. ບັດຄຳສັບ: ຕາ, ຕ່າ, ຕ້າ: ບາ, ບ່າ, ບ້າ: ປາ, ປ່າ, ປ້າ. | 1. ຄວາມຖືກຕ້ອງໃນການບອກການປ້ອງກັນພະຍາດຕາແດງ.<br>2. ຄວາມຊັດເຈນໃນການເວົ້າເປັນຄຳສັບຕາມຮູບພາບ.<br>3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ. |
| | 3 | 1. ສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຮັກສາຫູ:<br>2. ສ່ວນປະກອບ: ໃບຫູ, ຮູຫູ | ເຄື່ອງດົນຕີ: ກະແຊັດ, ກອງ, ໄມ້, ກະປ່ອງ. | 1. ບົດເພງ ຫູ<br>2 ຮູບພາບ: ຫູ, ເດັກນ້ອຍໃຊ້ຜ້າເຊັດຫູ, ເດັກນ້ອຍບໍ່ | 1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການປົວລະບັດຮັກສາຫູ. |

| | | | | | |
|---|---|---|---|---|---|
| | | 3. ລັກສະນະ: ໃບສີ່ຫຼ່ຽມ, ສາມຫຼ່ຽມ, ຮູຫູນ້ອຍ ແລະ ໃຫ່ຍ<br>4. ຄຸນປະໂຫຍດ: ໃຊ້ໄວ້ຟັງ ແລະ ຈໍາແນກສຽງ ດັງ-ຄ່ອຍ, ດັງແຮງຂອງຄົນ, ສັດ, ວັດຖຸສິ່ງ ຂອງ, ທໍາມະຊາດ ແລະ ເຄື່ອງດົນຕີ<br>5. ການບົວລະບັດຮັກສາ: ລ້າງເຊັດໃບຫູດ້ວຍສໍາ ລີ ຫຼື ຜ້າທີ່ສະອາດ, ລະວັງບໍ່ໃຫ້ນໍ້ ແລະ ແມງໄມ້ເຂົ້າຫູ, ບໍ່ຟັງສຽງທີ່ດັງເກີນໄປ ແລະ ບໍ່ໃຊ້ຂອງແຂງແຍ່ຫູ.<br>6. ຮ້ອງເພງ ຫູ, ເວົ້າຄໍາສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.<br>7. ປະຕິບັດຕົວຈິງການຟງສຽງ. | | ເອົາໄມ້ແຍ່ຫູ | 2. ຄວາມຊັດເຈນໃນການເວົ້າເປັນຄໍາສັບ ຕາມເນື້ອໃນບົດເພງ ແລະ ເວົ້າປະໂຫຍກ ຕາມຮູບພາບ.<br>3. ການປະຕິບັດຕົວຈິງໃນການຟັງສຽງ ເຄາະ-ດົນຕີ. |
| | 4 | 1. ການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາດັງ:<br>2. ສວນປະກອບ: ໂຄງດັງ ແລະ ຮູດັງ.<br>3. ຄຸນປະໂຫຍດ: ໃຊ້ໄວ້ຫາຍໃຈ ແລະ ດົມ ກິ່ນຕ່າງໆທີ່ຢູ່ອ້ອມຕົວເຊັ່ນ: ກິ່ນຫອມ, ກິ່ນເໝັນ, ກິ່ນຂີວ, ກິ່ນຄາວ.<br>4. ການບົວລະບັດຮັກສາດັງ: ເຊັດດັງໃຫ້ ສະອາດ, ສັ່ງ ແລະ ເຊັດຂີ້ມູກອອກຈາກ ຮູດັງດ້ວຍຜ້າທີ່ສະອາດ ຫຼື ເຊັດເຈ້ຍທີ່ ອ່ອນນຸ້ມ.<br>5. ການເລົ່າຄໍາຄ່ອງ ດັງສະອາດ, ເວົ້າຄໍາສັບ ະ ເປັນປະໂຫຍກຕາມເນື້ອໃນຄໍາຄ່ອງ: | ດອກດາວເຮືອງ, ດອກຈໍາປາ, ປາ ດິບ, ກະປິ. | -ບົດຄໍາຄ່ອງ ດັງສະອາດ.<br>- ຮູບພາບດັງ. | 1. ຄວາມຖືກຕ້ອງໃນການບອກສວນ ປະກອບ, ຄຸນປະໂຫຍດ ແລະ ການ ບົວລະບັດຮັກສາດັງ.<br>2. ຄວາມເຊັດເຈນໃນການເລົ່າຄໍາຄ່ອງ, ເວົ້າຄໍາສັບ ແລະ ເປັນປະໂຫຍກຕາມ ເນື້ອໃນບົດຄໍາຄ່ອງ.<br>3. ການປະຕິບັດຕົວຈິງໃນການດົມກິ່ນ. |

| | | | | | |
|---|---|---|---|---|---|
| | | 6. ຄຳສັບ: ດັງ, ຫາຍໃຈ, ດົມກິ່ນ, ກິ່ນເໝັນ, ກິ່ນຫອມ, ກິ່ນຄາວ, ເຊັດດັງ.<br>7. ປະໂຫຍກ: ຂ້ອຍເຊັດດັງໃຫ້ສະອາດ, ດັງຂອງຂ້ອຍໃຊ້ໄວ້ຫາຍໃຈ, ດັງໃຊ້ໄວ້ດົມກິ່ນ.<br>8. ການປະຕິບັດຕົວຈິງໃນການດົມກິ່ນ. | | | |
| | 5 | 1. ການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກ:<br>2. ສ່ວນປະກອບ: ຮີມປາກ, ແຂ້ວ, ລີ້ນ.<br>3. ຄຸນປະໂຫຍດ:ແຂ້ວໃຊ້ໄວ້ຫຍ້ຳອາຫານ( ອ່ອນ-ແຂງ ): ລີ້ນໃຊ້ໄວ້ຊີມລົດຊາດ( ຫວານ, ສົ້ມ, ເຜັດ, ເຄັມ, ຂົມ )ຂອງອາຫານ.<br>4. ການບົວລະບັດຮັກສາປາກ: ລ້າງປາກ, ບ້ວນປາກແລະ ເຊັດດ້ວຍຜ້າທີ່ສະອາດ.<br>5. ຖູແຂ້ວ: ປະຕິບັດຕາມວິທີ ແລະ ຂັ້ນຕອນການຖູແຂ້ວ(ສຸຂະສຶກສາຂອງກະຊວງສຶກສາສາທາລະນະສຸກກຳນົດໄວ້).<br>6. ການເລົ່າຄຳຄ່ອງ ປາກສະອາດ, ເວົ້າຄຳສັບຕາມເນື້ອໃນຄຳຄ່ອງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.<br>7. ການປະຕິບັດຕົວຈິງໃນການຖູແຂ້ວ. | ໝາກນາວ, ໝາກເຜັດ, ເກືອ, ນ້ຳຫວານ, ຜັກກະເດົາ, ນ້ຳສະອາດ, ແປງຖູແຂ້ວ, ຜ້າເຊັດໜ້າ. | 1 ບົດຄຳຄ່ອງ:ປາກສະອາດ.<br>2 ຮູບພາບ: ປາກ, ແຂ້ວ, ລີ້ນ ແລະ ໂປສສະເຕີ້ຂັ້ນຕອນການຖູແຂ້ວ. | 1. ຄວາມຖືກຕ້ອງໃນການບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາປາກ.<br>2. ການປະຕິບັດຕົວຈິງໃນການຖູແຂ້ວ.<br>3. ຄວາມເຊັດເຈນໃນການເວົ້າຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ ແລະ ຮູບພາບ. |
| 3 | 1 | 1. ການບອກສ່ວນປະກອບຂອງເລົາຄີງ: ສວນປະກອບ: ບ່າໄຫຼ່, ໜ້າເອິກ, | | 1 ຮູບພາບ:ບ່າໄຫຼ່, ເດັກນ້ອຍເຊັດໂຕ, | 1. ຄວາມຖືກຕ້ອງໃນການບອກສວນປະກອບ ແລະ ການບົວລະບັດຮັກສາ |

| | | | | | |
|---|---|---|---|---|---|
| | | ນົມ, ທ້ອງ, ແອວ, ກະໂພກ.<br>2. ການບົວລະບັດຮັກສາເລົາຄີງ: ອາບນໍ້, ເຊັດໂຕໃຫ້ແຫ້ງ ແລະ ນຸ່ງເຄື່ອງໃຫ້ສະອາດ.<br>3. ການຮ້ອງເພງ ຮ່າງກາຍຂອງຂ້ອຍ. ເວົ້າເປັນຄໍາສັບຕາມເນື້ອໃນບົດເພງ ແລະ ເວົ້າເປັນປະໂຫຍກຕາມຮູບພາບ.<br>4. ການປະຕິບັດຕົວຈິງໃນການນຸ່ງເຄື່ອງ. | | ເດັກນ້ອຍນຸ່ງເຄື່ອງ, ໂປສເຕີຮ່າງກາຍຄົນ.<br>2 ບົດເພງ ອາບນໍ້າ. | ເລົາຄີງ.<br>2. ການປະຕິບັດຕົວຈິງໃນການນຸ່ງເຄື່ອງ.<br>3. ຄວາມເຊັດເຈນໃນການເວົ້າຄໍາສັບ, ເວົ້າເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຮູບພາບ. |
| | 2 | 1. ສວນປະກອບຂອງແຂນ ແລະ ຄຸນປະໂຫຍກຂອງມື:<br>2. ສວນປະກອບ: ກົກແຂນ, ແຂນສອກ, ຄໍ່ມື, ມື; ມື: ຝ່າມື, ຫຼັງມື, ນິ້ວມື, ຂໍ້ມື, ເລັບມື ແລະ ນິ້ວມື: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.<br>3. ຄຸນປະໂຫຍດຂອງມື: ໃຊ້ໄວ້ຈັບ-ບາ ແລະ ຖືວັດຖຸຕ່າງໆ: ອ່ອນ, ແຂງ, ກ້ຽງ, ຊາ, ໜາ, ບາງ.<br>4. ການຟັງນິທານເລື່ອງມືວິເສດ, ເວົ້າຄໍາສັບຕາມເນື້ອໃນບົດນິທານ: ມື, ຝາມື, ຫຼັງມື, ນິ້ວມື, ກ້ຽງ, ຊາ.<br>5. ການເວົ້າປະໂຫຍກຕາມຮູບພາບ: ມືສອງເບື້ອງມືຂອງລາວລວມມີສິບນິ້ວ, ເດັກນ້ອຍຕັດເລັບມືໃຫ້ສັ້ນ. ເດັກນ້ອຍລ້າງມືໃຫ້ສະອາດ. | ແຂນ, ມື, ສໍາລີ, ໄມ້; ຜ້າໜາ-ບາງ, ເຈ້ຍຂາວ, ກະດາດຊາຍ. | 1 ບົດຄໍາຄ່ອງເລັບມືສະອາດ.<br>2 ຮູບພາບ:ມືມີສອງເບື້ອງ, ເດັກນ້ອຍຕັດເລັບມື | 1.ຄວາມຖືກຕ້ອງໃນການບອກສວນປະກອບຂອງແຂນ ແລະ ຄຸນປະໂຫຍດຂອງມື.<br>2. ການປະຕິບັດຕົວຈິງໃນການຈັບບາຍວັດຖຸສິ່ງຂອງ.<br>3. ຄວາມເຊັດເຈນໃນການເວົ້າຄໍາສັບ, ເວົ້າເປັນປະໂຫຍກຕາມເນື້ອໃນບົດນິທານ ແລະ ຮູບພາບ.<br>4. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ. |
| | 3 | 1. ການບົວລະບັດຮັກສາມື:<br>2. ການບົວລະບັດຮັກສາ: ຕັດເລັບໃຫ້ສັ້ນ, ລ້າງ | ມີດຕັດເລັບ, ສະບູ, ຊາມນໍ້າ, | 1 ບົດຄໍາຄ່ອງ ເລັບມືສະອາດ. | 1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາເລົາມື. |

| | | | | | |
|---|---|---|---|---|---|
| | | ມືໃຫ້ສະອາດຖືກວິທີ ແລະ ຂັ້ນຕອນ (ສຸຂາ ສຶກສາຂອງກະຊວງສາທາລະນະສຸກກຳນົດ ໄວ້) ແລະ ເຊັດມືໃຫ້ແຫ້ງ.<br>3. ການເລົ່າຄຳຄ່ອງ ເລັບມືສະອາດ, ເວົ້າເປັນຄຳ ສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳ ຄ່ອງ.<br>4. ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ງ, ບ, ມ.<br>5. ການປະຕິບັດຕົວຈິງໃນການລ້າງມື. | ຜ້າເຊັດມື. | 2 ບັດຄຳສັບ: ປາກ, ຄາງ, ອາບ, ງາມ. | 2. ການປະຕິບັດຕົວຈິງໃນການລ້າງມື.<br>3. ຄວາມເຊັດເຈນໃນການເລົ່າຄຳຄ່ອງ, ເວົ້າຄຳສັບ, ເວົ້າເປັນປະໂຫຍກຕາມເນື້ອ ໃນບົດຄຳຄ່ອງ.<br>4. ຄວາມຊັດເຈນໃນການອ່ານ ອອກສຽງຄຳທີ່ມີຕົວສະກົດ: ກ, ງ, ບ |
| | 4 | 1. ສວນປະກອບ,ຖຸນປະໂຫຍດຂອງຂາແລະຕີນ<br>2. ສວນປະກອບຂອງຂາ: ກົກຂາ, ຫົວເຂົ່າ, ແຄ່ງ , ຄໍ່ຕີນ ແລະ ຕີນ.<br>3. ຕີນ: ຝາຕີນ, ຫຼັງຕີນ, ນິ້ວຕີນ, ຂໍ້ຕີນ, ເລັບຕີນ ແລະ ນິ້ວຕີ້ນ: ນິ້ວໂປ້ງ, ນິ້ວຊີ້, ນິ້ວກາງ, ນິ້ວນາງ, ນິ້ວກ້ອຍ.<br>4. ຖຸນປະໂຫຍດຂອງຂາ ແລະ ຕີນ: ຂາ ແລະ ຕີນໃຊ້ໄວ້ຢືນ, ຍ່າງ, ແລ່ນ, ເຕັ້ນ, ໂດດ.<br>5. ການຮ້ອງເພງ ຂາຂອງຂ້ອຍ, ເວົ້າຄຳສັບຕາມ ເນື້ອໃນບົດເພງ: ນິ້ວໂປ້, ນິ້ວຊີ້, ນິ້ວກາງ, ນິ້ວ ນາງ, ນິ້ວກ້ອຍ; ຂາ, ຫົວເຂົ່າ, ກົກຂາ, ແຄ່ງ, ຕີ້ນ.<br>6. ເວົ້າເປັນປະໂຫຍກຕາມຮູບພາບ. | ຂາ, ຕີນ, ຖຸນໍ້າ, ໂອ | 1 ຮູບພາບ:ເດັກນ້ອຍແລ່ນ ,ເດັກນ້ອຍຕັດເລັບຕີນ, ເດັກນ້ອຍລ້າງຕີນ, ເດັກນ້ອຍໃສ່ເກີບ.<br>2 ບົດເພງຂາຂອງຂ້ອຍ. | 1. ຄວາມຖືກຕ້ອງໃນການບອກສວນ ປະກອບ ແລະ ຖຸນປະໂຫຍດຂອງຂາ ແລະ ຕີນ.<br>2. ຄວາມເບີກບານມ່ວນຊື່ນໃນການ ຮ້ອງເພງ.<br>3.ຄວາມຊັດເຈນໃນການເວົ້າເປັນຄຳສັບ , ເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຕາມຮູບພາບ. |
| | 5 | 1. ການບົວລະບັດຮັກສາຕີນ: ຕັດເລັບຕີນ, ລ້າງ ຕີນ, ໃສ່ເກີບ. | ຖຸນໍ້າ, ໂອ, ມີດຕັດເລັບ, | 1 ຮູບພາບ: ຕີນ,ເກີບ, ແມ່ ຕັດເລັບຕີນໃຫ້ລູກ, | 1. ຄວາມຖືກຕ້ອງໃນການບອກການ ບົວລະບັດຮັກສາຕີນ. |

| | | | | | |
|---|---|---|---|---|---|
| | | 2. ຟັງນິທານເລື່ອງ ເກີບຄູ່ໃໝ່, ເວົ້າເປັນຄຳສັບຕາມເນື້ອໃນບົດນິທານ: ເກີບ, ໂຮງຮຽນ, ນອນຫຼັບ, ນຸ່ງເຄື່ອງ, ຖົງຕີນ, ລ້າງຕີນ, ຍືນ, ເປື້ອນ, ແລ່ນຫຼິ້ນ, ຍ່າງ, ຕົກໃຈ, ສຽງດັງ, ກິນເຂົ້າ.<br>3. ການຮ່ວມກຸ່ມຮູບພາບ 1-5<br>4. ປະຕິບັດຕົວຈິງໃນການໃສ່ເກີບ. | ເກີບ. | ເດັກນ້ອຍລ້າງຕີນ., ເດັກນ້ອຍໃສ່ເກີບ, ມີຈຳນວນ 1-5.<br>2 ບົດນິທານເລື່ອງ ເກີບຄູ່ໃໝ່ (ເບິ່ງປື້ມຄູ່ມືຄູ. | 2. ຄວາມຖືກຕ້ອງໃນການບອກຜົນການຮ່ວມກຸ່ມຮູບພາບມີ 1-5.<br>3. ຄວາມເຊັດເຈນໃນການເວົ້າຄຳສັບ, ເວົ້າເປັນປະໂຫຍກຕາມເນື້ອໃນບົດນິທານ ແລະ ຮູບພາບ.<br>4. ການປະຕິບັດຕົວຈິງໃນການໃສ່ເກີບ.<br>5. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ. |
| 4 | 1 | 1. ອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ:<br>2. ຊີ້ນສັດ: ປາ, ໄຂ່, ນົມ, ຖົ່ວເຫຼືອງຊ່ວຍໃຫ້ພະລັງງານໃນການເຄື່ອນໄຫວ.<br>3. ເຂົ້າ, ເຜືອກ, ມັນ, ສາລີ, ໝາກງາ, ໝາກພ້າວ , ນ້ຳມັນສັດ ແລະ ນ້ຳຕານຊ່ວຍໃຫ້ຮ່າງກາຍເຕີບໃຫ່ຍ.<br>4. ໝາກໄມ້ສຸກ, ນ້ຳສະອາດ ແລະ ຜັກຊ່ວຍໃຫ້ຮ່າງກາຍແຂງແຮງ.<br>5. ການຮ້ອງເພງ ອາຫານດີມີປະໂຫຍດ.ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.<br>6. ການເວົ້າເປັນປະໂຫຍກຕາມຮູບພາບ: ໝາກຮຸ່ງສຸກມີສີເຫຼືອງ, ສາລີຕົ້ມຮ້ອນໆ, ໝາກແຕງໂມສຸກສີແດງ, ຫຼານຊຸບຜັກ ແລະ ແກງຜັກ. | ໄຂ່, ເຂົ້າ, ໝາກງາ,ໝາກໄມ້ສຸກ. | 1 ໂປສເຕີອາຫານ 5 ໝູ່.<br>2 ຮູບພາບ: ໝາກຮຸ່ງສຸກ, ສາລີຕົ້ມຮ້ອນໆ ໝາກແຕງໂມສຸກ, ຊຸບຜັກ ແລະ ແກງຜັກ<br>3 ບົດເພງ ອາຫານດີມີປະໂຫຍດ. | 1. ຄວາມຖືກຕ້ອງໃນການບອກອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດຕໍ່ຮ່າງກາຍ.<br>2. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.<br>3. ຄວາມເຊັດເຈນໃນການເວົ້າຄຳສັບ, ເວົ້າເປັນປະໂຫຍກຕາມເນື້ອໃນບົດເພງ ແລະ ຮູບພາບ. |
| | 2 | 1. ການກິນອາຫານໃຫ້ຄົບຖ້ວນ ແລະ ຖືກຕ້ອງ | ນົມ, ນ້ຳໝາກ | 1 ຮູບພາບ: ອາຫານທີ່ມີ | 1. ຄວາມຖືກຕ້ອງໃນການບອກ |

| | | | | | |
|---|---|---|---|---|---|
